




ດອກຄູນ ນະ ຊຽງຂວາງ

2019



ບົດບັນທຶກ: ຄວາມເຈັບປວດ ທີ່... ງົດງາມ

ໂດຍ: ດອກຄູນ ນະ ຊຽງຂວາງ

ບັນນາທິການ: ປັນຍາ ພັນທະພາບິດ

ສໍານັກພິມ: ລາວດວງເດືອນ

ພິສູດອັກສອນ: ທອງຄູນ ເພັດດາລາ

ສິລະປະອອກແບບ: ດອກຄູນ ນະ ຊຽງຂວາງ

ພິມທີ່: ປະລິນດາ ການພິມ

ພິມຄັ້ງທີ1: ທັນວາ 2019

ຈໍານວນ: 1 000 ຫົວ

@ສະຫງວນລິຂະສິດ, ທອງຄູນ ເພັດດາລາ. 2019

ໂທ: 020 9999-6379. ເຟັສບຸກ: ດອກຄູນ ນະ ຊຽງຂວາງ.

ອີເມວ: dokkhounpdl@gmail.com

ຮູບປົກຈາກອິນເຕີເນັດ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ດອກຄູນ ນະ ຊຽງຂວາງ
ຄວາມເຈັບປວດທີ່ງົດງາມ / ໂດຍ ດອກຄູນ ນະ ຊຽງຂວາງ. -- ວຽງຈັນ: ລາວດວງເດືອນ, 2019
110ໜ້າ ; ພາບປະກອບສີ ; 21 ຊມ
1. ບັນທຶກເລື່ອງຈິງ
2. ມານດາ -- ບຸດ -- ຄວາມຮັກ - ຄວາມຜູກພັນ
I. ຊື່ເລື່ອງ
808.883 -- dc21
ISBN 978-9932-421-16-9



## ສາລະບານ

ຄໍານໍາສໍານັກພິມ ........ 4

ຄໍານິຍົມ ........ 6

ຈາກໃຈຜູ້ຂຽນ ........ 8

ຮັກແທ້ໃນວົງເຫຼົ້າ ........ 12

ຮັກແທ້ທີ່ນໍາພາ ........ 17

ໄລຍະ "ອັນຕະລາຍ"

1. ສໍາຜັດແຣກ ........ 24

2. ຕັດສິນໃຈ ........ 27

3. ຄວາມກັງວົນ ........ 37

ໄລຍະ "ປ່ຽນແປງ"

4. ຄວາມຢາກ ........ 46

5. ຄວາມຄິດ ........ 56

6. ຄວາມໃສ່ໃຈ ........ 64

ໄລຍະ "ພິສູດຮັກແທ້"

7. ຄວາມຢ້ານ ........ 73

8. ຄວາມພ້ອມ ........ 79

9. ຄວາມເຈັບປວດ ທີ່... ງົດງາມ ........ 85

ຮີດຄອງ ........ 95

ໜ້າທີ່ ແລະຄວາມຮັບຜິດຊອບ ........ 101

ຄໍາຂອບໃຈ ........ 109

ປະຫວັດຜູ້ຂຽນ ........ 111

## ຄຳນຳ ສຳນັກພິມ

ຂ້າພະເຈົ້າຮູ້ຈັກນັກຂຽນຍິງ ຜູ້ມີນາມປາກກາວ່າ "ດອກຄູນ ນະ ຊຽງຂວາງ" ດ້ວຍປຶ້ມ "ປິດສະໜາ... ຮັກ" ຕອນນັ້ນບອກໄດ້ເລີຍວ່າ ນາງເປັນນັກຂຽນໜຸ່ມນ້ອຍຜູ້ນຶ່ງທີ່ມີລີລາການຂຽນໜ້າສົນໃຈຫຼາຍ ຮູ້ຈັກເລົ່າເລື່ອງການປຽບທຽບ ແລະສະທ້ອນບັນຫາໄດ້ໜ້າຕິດຕາມ.

ປຶ້ມຫົວໃໝ່ "ຄວາມເຈັບປວດທີ່... ງົດງາມ" ພາຍຫຼັງຂ້າພະເຈົ້າໄດ້ອ່ານຕົ້ນສະບັບ ບອກໄດ້ເລີຍວ່າວາງບໍ່ລົງ "ດອກຄູນ ນະ ຊຽງຂວາງ" ຍົກເຫດການມາເລົ່າໄດ້ຢ່າງຈັບຈິດ ພາໃຫ້ຄິດໄປເຫັນພາບອະດີດ ເຊິ່ງເຊື່ອວ່າຫຼາຍຄົນເຄີຍລອງຜິດລອງຖືກກັບຊີວິດໄວໜຸ່ມ ຄວາມຮັກ ການຕັດ-ສິນໃຈ. ບາງຄົນຜິດພາດ, ບາງຄົນກໍໄປຮູ້ຮອມ ແຕ່ເໜືອສິ່ງອື່ນໃດ ຈະຢູ່ໃນສະຖານະການໃດກໍຕາມ ການຮູ້ແກ້ໄຂບັນຫາແລະນຳພາຊີວິດໄປສູ່ເສັ້ນທາງທີ່ແມ່ນນີ້ຄືສິ່ງສຳຄັນທີ່ສຸດ.

ແຕ່ລົງເລິກໄປກວ່າຫັ້ນ"ດອກຄູນ ນະ ຊຽງຂວາງ" ສະທ້ອນພາບນຶ່ງອາຊີບ ທີ່ຫຼາຍຄົນອາດຄິດວ່າທຳມະດານັ້ນອອກມາໄດ້ຢ່າງລະອຽດລະມຽດລະໄມ ແລະດີທີ່ສຸດ ອາຊີບທີ່ວ່າຄື: ອາຊີບ **"ແມ່"** ອາຊີບນີ້ບໍ່ມີຫົວໜ້າ ບໍ່ມີລູກນ້ອງ ບໍ່ມີເງິນເດືອນກິນ ແຕ່ຜູ້ເປັນແມ່ພໍໃຈເຮັດດ້ວຍຫົວໃຈ ເພື່ອອີກນຶ່ງຫົວໃຈ ທີ່ເປັນເລືອດເນື້ອເຊື້ອໄຂອັນບໍລິສຸດ...



ການສະທ້ອນພາບທີ່ປະສົມປະສານກັບວາດວິທີການຂຽນຊວນໃຫ້ໜ້າຕິດຕາມເລື່ອງແຕ່ຕົ້ນຈົນຈົບ ບາງວັກບາງສາກຂ້າພະເຈົ້າອ່ານແລ້ວຍິ້ມ ແຕ່ບາງສາກກໍເຮັດໃຫ້ຜູ້ຊາຍໃຈກະດ້າງຄືຂ້າພະເຈົ້ານ້ຳຕາຊຶມໄດ້ ຖືວ່າບໍ່ທຳມະດາ.. ຊົມເຊີຍເນີ້ !

ສຳນັກພິມ ລາວດວງເດືອນ ມີຄວາມຍິນດີ ແລະ ຂໍຊົມເຊີຍທີ່ສຸດ ທີ່ໄດ້ເຫັນຜົນງານຂອງນັກຂຽນໜຸ່ມນ້ອຍ ໂດຍສະເພາະກໍແມ່ນນັກຂຽນຍິງ ເຊິ່ງຖືເປັນດວງມາລາທີ່ກຳລັງເບັ່ງບານ ແລະໃຫ້ຄວາມຫອມຫວນແກ່ສວນອຸທິຍານສິລປ໌ ຂໍສັນລະເສີນໃນຄວາມພາກພຽນ ຂຽນບົດເລື່ອງດີໆ ໃຫ້ຜູ້ອ່ານໄດ້ອ່ານ ແລະຫວັງທີ່ສຸດວ່າປຶ້ມ **"ຄວາມເຈັບປວດທີ່ງົດງາມ"** ຫົວນີ້ຈະສ້າງຄວາມປະທັບໃຈໃຫ້ກັບຫຼາຍໆຄົນ...

ນະຄອນຫຼວງວຽງຈັນ ວັນທີ 13 ສິງຫາ 2019

ຫົວໜ້າສຳນັກພິມ ລາວດວງເດືອນ

ປັນຍາ ພັນທະພານິດ



## ຄຳນິຍົມ

*ພຣະ ໄພວັນ ມາລາວົງ (ລູກດອນກະເດັນ)*

ຫຼາຍຄົນຢາກຂຽນໜັງສືເປັນຂອງຕົນເອງ ແຕ່ບໍ່ຮູ້ວ່າຈະເລີ່ມແນວໃດ ເອົາຂໍ້ມູນໃດມາຂຽນ ລັງເລໃນໃຈ ສຸດທ້າຍກໍບໍ່ຮູ້ຈັກຂຽນ.

ນັກປາດໃນໂລກເຫັນເປັນສຽງດຽວກັນວ່າການຂຽນໜັງສືມັນມີວິທີເລົ່າເລື່ອງຢູ່ 2 ຢ່າງຄື:

1. ເລົ່າເລື່ອງຕົນເອງ
2. ເລົ່າເລື່ອງຄົນອື່ນ ຄືສຶກສາມາແລ້ວກໍມາຮຽບຮຽງໃຫ້ໜ້າອ່ານ.

ດອກຄູນ ນະ ຊຽງຂວາງ ເປັນນັກຂຽນຍິງຄົນນຶ່ງທີ່ເລົ່າເລື່ອງຕົນເອງຜ່ານປາຍປາກກາທີ່ມີສິລະປະ ມັນເປັນບົດບັນທຶກນຶ່ງທີ່ຂ້າພະເຈົ້າອ່ານຢ່າງຈົດຈໍ່ ນັບແຕ່ຕົ້ນຈົນຈົບເລື່ອງຜູ້ຂຽນຊ່າງມີວິທີນຳສະເໜີຢ່າງໜ້າຕິດຕາມ.

ການຖ່າຍທອດອອກມາຢ່າງລະອຽດແນວນີ້ແມ່ນຄົນມີປະສົບການເທົ່ານັ້ນ ແຕ່ກ່ອນເຮົາອາດເຂົ້າໃຈຄຳວ່າ "ແມ່" ພຽງຜິວເຜີນກໍເປັນໄດ້ ແຕ່ເມື່ອໄດ້ມາອ່ານ **"ຄວາມເຈັບປວດທີ່ງົດງາມ"** ຈຶ່ງເຂົ້າໃຈຂັ້ນຕອນ ການລະມັດລະວັງຄວາມເປັນແມ່ຢ້ານມີໄພແກ່ລູກ ດັ່ງພາສິດລາວບູຮານເຄີຍກ່າວວ່າ: **"ໝູກັດຫູກຈຶ່ງຮູ້ຄຸນແມວ ລູກແຂວນແອວຈຶ່ງຮູ້ຄຸນພໍ່ແມ່"** ກ່ອນ



ແມ່ຈະເກີດເຮົາມາ ລ້ຽງດູແລເຮົາຮອດໃຫຍ່ ຄຸນແມ່ເກີນທີ່ຈະພັນລະນາມະຫາສານ ຈຶ່ງປຽບແມ່ກັບສິ່ງທີ່ເກີນກວ່າຈະຄຳນວນໄດ້.

**"ຄວາມເຈັບປວດທີ່...ງົດງາມ"** ເປັນບົດບັນທຶກທີ່ບັນຍາຍຄວາມຮູ້ສຶກ ແລະປະສົບການນຶ່ງຂອງຊີວິດຜູ້ຂຽນເອງຂຽນໃຫ້ເປີດແປນໄປເລີຍ ເປັນບົດບັນທຶກທີ່ດີດ້ວຍ ເພາະບໍ່ເຄີຍອ່ານບົດໃດມາກ່ອນ.

ໜັງສືທີ່ດີບໍ່ຈຳເປັນຂຽນໄກຕົວຫລາຍເກີນໄປ ຈົນນຶກບໍ່ອອກ ຂຽນຊີວິດປະຈຳວັນກໍໜ້າອ່ານດີ ດັ່ງປຶ້ມທີ່ອ່ານຢູ່ໃນຂະນະນີ້ ກໍເປັນເພັດເມັດງາມໃນວັນນະກຳເຊັ່ນກັນ.

27 ພະຈິກ 2018

ພຣະໄພວັນ ມາລາວົງ

ນັກກະວີຣາງວັນແມ່ນ້ຳຂອງ, ຣາງວັນວັນນະກຳສີນໄຊ

## ຈາກໃຈຜູ້ຂຽນ

ຄວາມຮັກຢູ່ໂລກນີ້ມີຫຼາຍຮູບແບບ ແຕ່ຈະມີຈັກຄົນທີ່ຈະໄດ້ສຳຜັດ **"ຮັກແທ້"**

ປຶ້ມບັນທຶກ **ຄວາມເຈັບປວດ ທີ່... ງົດງາມ** ເປັນອີກເຫຼັ້ມທີ່ຂ້າພະເຈົ້າພາກພຽນບັນຈົງປາຍປາກກາຢູ່ເປັນເວລາເກືອບສອງປີ ນັບຕັ້ງແຕ່ມື້ທຳອິດທີ່ຮູ້ວ່າຈະໄດ້ເປັນແມ່.

ກ່ອນອື່ນຕ້ອງຂໍອະນຸຍາດບັນດາແມ່ທຸກຄົນ ຂ້າພະ-ເຈົ້າກໍເປັນພຽງແມ່ມືໃໝ່ ອີກທັງເປັນນັກຂຽນຮຸ່ນໃໝ່ ປະສົບການບໍ່ວ່າທາງດ້ານການຂຽນຫຼືການລ້ຽງລູກແມ່ນບໍ່ອາດຈະໄປທຽບທ່ານໄດ້.

ແຕ່ໃນເມື່ອຂ້າພະເຈົ້າມີໂອກາດໄດ້ສຳຜັດຄວາມເປັນແມ່ແລ້ວກໍບໍ່ຢາກໃຫ້ສຳຜັດນັ້ນມັນຈາງຫາຍໄປພ້ອມການເວລາ, ດ້ວຍເຫດນີ້ເອງ ຂ້າພະເຈົ້າຈຶ່ງຖືໂອກາດນີ້ບັນທຶກທຸກຄວາມຮູ້ສຶກນີ້ໄວ້. ນຶ່ງກໍເພື່ອຢາກໃຫ້ບັນດາລູກໆທັງຫຼາຍໄດ້ອ່ານ ແລະຮັບຮູ້ເຖິງຄວາມຮັກ ຄວາມຍາກລຳບາກຂອງຄົນເປັນແມ່, ສອງ ກໍເພື່ອກະຕຸ້ນຄວາມເປັນແມ່ຄັ້ງແຮກຂອງຫຼາຍຄົນທີ່ອາດຈະຫຼົງລືມໄປແລ້ວກໍມີແລະເພື່ອໃຫ້ຜູ້ຊາຍ ຜູ້ເຊິ່ງບໍ່ມີໂອກາດໄດ້ສຳຜັດກັບຄວາມຮູ້ສຶກເຫຼົ່ານີ້ ໄດ້



ຮັບຮູ້ ແລະເຂົ້າໃຈຜູ້ຍິງໃນເວລາຖືພາຫຼາຍຂຶ້ນ ແລະກໍເພື່ອໃຫ້ຄົນທີ່ກຳລັງຈະເປັນແມ່ໄດ້ຮູ້ທຸກການປ່ຽນແປງເພື່ອກຽມພ້ອມເຮັດໜ້າທີ່ແມ່ໃຫ້ສົມບູນ.

ຄວາມເຈັບປວດ ທີ່... ງົດງາມ ເປັນການບັນທຶກໄລຍະເກົ້າເດືອນກ່ອນທີ່ຈະໄດ້ເຫັນໜ້າລູກເຊິ່ງມີເລື່ອງລາວທີ່ເຮັດໃຫ້ຂ້າພະເຈົ້າເກືອບຈະບໍ່ໄດ້ເຮັດໜ້າທີ່ແມ່ນີ້ດ້ວຍຊ້ຳ! ຈິງຢູ່ວ່າການຖືພາລູກ ແຕ່ລະຄົນອາດບໍ່ຄືກັນ ແຕ່ເຊື່ອເທາະວ່າບໍ່ມີແມ່ຄົນໃດທີ່ບໍ່ພົບກັບຄວາມຫຍຸ້ງຍາກເລີຍ.

ແຕ່ກ່ອນຂ້າພະເຈົ້າກໍເປັນນຶ່ງໃນຫຼາຍໆຄົນທີ່ສັດທາໃນຄວາມຮັກ ແລ່ນນຳຫາຮັກແທ້ ເພື່ອຫວັງຈະໄດ້ເປັນຄົນສຳຄັນໃນຊີວິດຂອງໃຜບາງຄົນ. ແຕ່ທຸກເທື່ອກໍໄດ້ຮັບພຽງນ້ຳຕາຕອບແທນຄືນມາຈາກຮັກທີ່ໃຫ້ໄປ ຍ້ອນຄວາມເຈັບປວດເກືອບເຮັດໃຫ້ຂ້າພະເຈົ້າໝົດສັດທາໃນຄວາມຮັກ ບໍ່ເຊື່ອວ່າຮັກແທ້ນັ້ນຈະມີຢູ່ຈິງອີກຕໍ່ໄປ.

ຈົນມາເຖິງມື້ທີ່ໂຊກຊະຕານຳພາໃຫ້ມາພົບກັບຊາຍຄົນນຶ່ງປະຕູຫົວໃຈຈຶ່ງຖືກເຄາະອີກຄັ້ງຈາກຊາຍແປກໜ້າທີ່ຂ້າພະເຈົ້າບໍ່ເຄີຍຄິດວ່າຈະມາເປັນຄົນສຳຄັນໃນຊີວິດນີ້ໄດ້.



ລາວເຂົ້າມາພ້ອມກັບຄວາມຈິງໃຈທີ່ແຂງກະດ້າງບໍ່ແມ່ນຄວາມຮັກທີ່ອ່ອນຫວານ ເຮັດໃຫ້ຂ້າພະເຈົ້າຢາກລອງເປີດປະຕູຫົວໃຈທີ່ເກືອບຈະປິດຕາຍນັ້ນໄປແລ້ວອີກຄັ້ງເພາະຢາກຈະຮູ້ວ່າ ເຮືອໄມ້ທີ່ແຂງກະດ້າງລຳນີ້ ຈະພາໄປເຖິງຝັ່ງ ຫຼືຈະຖິ້ມຂ້າພະເຈົ້າໄວ້ກາງວັງຄືລຳທີ່ຜ່ານມາບໍ.

ໃນທີ່ສຸດ... ຂ້າພະເຈົ້າກໍຮູ້ແລ້ວວ່າ ຕັດສິນໃຈບໍ່ຜິດທີ່ເລືອກລົງເຮືອໄມ້ລຳນີ້ ເພາະຕອນນີ້ເຊື່ອແລ້ວວ່າ:

**"ຮັກແທ້ນັ້ນມີຢູ່ຈິງ... ຮັກແທ້ທີ່ບໍ່ໄດ້ຢູ່ໃນຫ້ອງຫໍ ແຕ່ຫາກລໍທີ່ຫ້ອງປະສູດ".**

14 ມິຖຸນາ 2018

ທີ່ ແກ້ວກູ່ ແຂວງ ວຽງຈັນ

ດອກຄູນ ນະ ຊຽງຂວາງ





cr. https//today.line.me

## ຮັກແທ້... ໃນວົງເຫຼົ້າ

ຖ້າເວົ້າເຖິງໄວໜຸ່ມ ສໍາລັບຄວາມເຈັບປວດແລ້ວ ກໍຄົງໜີບໍ່ພົ້ນເລື່ອງຂອງຄວາມຮັກທີ່ບໍ່ສົມດັ່ງໃຈຫວັງ ຫຼືທີ່ເອີ້ນກັນວ່າ “**ອົກຫັກ**” ໄປໄດ້ແນ່ນອນ, ເພາະຍາມເມື່ອເວລາຮັກກໍຫຸ້ມເທໃຫ້ກັບຄົນຮັກຂອງຕົນໝົດເທົ່າທີ່ມີຈົນຕາມືດບອດເຫັນຜິດເປັນຖືກໄປໝົດ,ບາດເມື່ອຍາມຄວາມຮັກຈືດຈາງຕາກໍເລີ່ມສະຫວ່າງຂຶ້ນ ພໍເຫັນຂໍ້ເສຍເຊິ່ງກັນແລະກັນຕ່າງກໍຮັບບໍ່ໄດ້ ແລ້ວຫຼາຍໆຄູ່ຈໍາຕ້ອງເດີນແຍກທາງກັນໄປ ແລະນີ້ເອງຖືວ່າເປັນຄວາມເຈັບປວດທີ່ສຸດສໍາລັບບາງຄົນ ຈົນເຮັດໃຫ້ເກືອບເປັນບ້າເສຍຜູ່ເສຍຄົນ ຕິດເຫຼົ້າເມົາຢາ ແລະຮ້າຍແຮງກວ່ານັ້ນບາງຄົນຄິດສັ້ນທໍາຮ້າຍຕົວເອງ ພຽງເພື່ອຢາກໃຫ້ຄົນຮັກເຫັນໃຈຄືນກັບມາຮັກຕົນອີກຄັ້ງ.

ມັນບໍ່ຜິດດອກທີ່ຈະມີຄວາມຮັກ ແຕ່ມັນບໍ່ຖືກຖ້າຈະໃຊ້ທັງຊີວິດບູຊາໃຫ້ຄວາມຮັກ ເພາະການທໍາຮ້າຍຕົວເອງເພື່ອໃຫ້ຄົນອື່ນເຫັນຄ່າ ຖືວ່າເປັນການກະທໍາທີ່ໄຮ້ສະຕິປັນຍາທີ່ສຸດ ທີ່ເວົ້າແບບນີ້ບໍ່ໄດ້ໝາຍຄວາມວ່າ ຂ້າພະເຈົ້າບໍ່ເຄີຍມີຄວາມຮັກ ຫຼືບໍ່ເຄີຍອົກຫັກມາກ່ອນດອກ. ແຕ່ກົງກັນຂ້າມຂ້າພະເຈົ້າເກືອບເອົາຊີວິດໄປຖິ້ມລ້າໆ ພຽງເພາະຄົນໆດຽວຖິ້ມໄປ.

ເຫດການນັ້ນເກີດຂຶ້ນເມື່ອ 5 ປີກ່ອນ ຕອນທີ່ຂ້າພະ-



ເຈົ້າພວມສຶກສາຢູ່ວິທະຍາໄລແຫ່ງນຶ່ງ ດ້ວຍຄວາມເປັນໄວໜຸ່ມຈຶ່ງປາສະຈາກບໍ່ໄດ້ເຖິງການຢາກຮູ້ຢາກລອງເຮັດສິ່ງໃໝ່ໆ.

ແລ້ວຈາກຍິງສາວບ້ານນອກ ຜູ່ເຊິ່ງເຄີຍເຫັນແຕ່ແສງທົ່ງຫ້ອຍ ແລະບຸນລໍາວົງຢູ່ວັດ ກໍເກີດຢາກລອງສໍາຜັດກັບແສງໄຟນີອອນເບິ່ງຈັກເທື່ອ ເພາະຢາກຈະຮູ້ວ່າເປັນເພາະເຫດໃດແມງເມົ່າຈຶ່ງມັກອອກມາຕອມແສງໄຟ.

ພາຍໃຕ້ແສງດາວໃນຄືນລາຕີ ທີ່ສາລາສູງກາງທົ່ງມີຜູ່ຄົນອັ່ງອໍຢູ່ເປັນຈໍານວນຫຼາຍ ທີ່ພ້ອມໃຈກັນຈົກເງິນໃນຖົງເງິນທີ່ພໍ່ແມ່ຫ້ອນໂຮມອົດສົ້ມອົດຫວານ ເພື່ອສົ່ງໃຫ້ລູກໄດ້ຮໍ່າຮຽນອອກຊື້ນໍ້າເມົາມາກິນແຂ່ງກັນ ບັນຍາກາດໃນທີ່ນັ້ນເຕັມໄປດ້ວຍກິ່ນອາຍເຫຼົ້າເບຍ ແລະຄວັນຂີ້ວຂອງຢາສູບ.

ຂ້າພະເຈົ້າພ້ອມໝູ່ 2-3 ຄົນ ເຂົ້າໄປນັ່ງບໍ່ພໍເທົ່າໃດກໍມີຜູ່ຊາຍມາຂໍຕໍາຈອກເບຍນໍາທັງຊວນລົມຖາມຫັ້ນຖາມນີ້ແລ້ວສາຍຕາທີ່ພວກເຂົາເບິ່ງ ບໍ່ຕ່າງຫຍັງກັບພະຍາເສືອແນມກວາງນ້ອຍ. ທີ່ເວົ້າແນວນີ້ບໍ່ໄດ້ໝາຍຄວາມວ່າ ຂ້າພະເຈົ້າງາມລື່ນໝູ່ແຕ່ຢ່າງໃດດອກອາດເປັນເພາະພວກເຂົາເມົາຫຼືເພາະຫຼົງແສງໄຟກໍບໍ່ຮູ້ແຕ່ຂ້າພະເຈົ້າກໍບໍ່ໄດ້ສົນໃຈຫຼືຫຼົງຄາລົມຂອງຜູ່ຊາຍເຫຼົ່ານັ້ນດອກ ແຖມຍັງລໍາຄານອີກ.

ເວລາຜ່ານໄປດົນເຕີບ ນໍ້າເບຍທີ່ຮ່າຍລົງຄໍກໍຫຼາຍຈອກສົມຄວນ ເງິນໃນຖົງກໍປິວອອກໄປເທື່ອລະໃບສອງໃບໂດຍບໍ່ຄິດເສຍດາຍແມ່ນແຕ່ໜ້ອຍ ແລ້ວຈາກນັ້ນກໍມີຊາຍອີກຄົນນຶ່ງ ຖືຈອກເບຍມາຂໍຕໍາຈອກກັບຂ້າພະເຈົ້າ ຈາກທີ່



ເຄີຍລໍາຄານກໍມີແຕ່ຄວາມອອນຊອນໃນຄາລົມທີ່ອອກຈາກປາກ ເຖິງຈະເຕັມດ້ວຍກິ່ນເຫຼົ້າ ແຕ່ມັນກໍຫວານປານນໍ້າເຜີ້ງເດືອນຫ້າ ບວກກັບໜ້າຕາທີ່ເຈົ້າຊູ້ ເຮັດໃຫ້ຂ້າພະເຈົ້າເຜີແລກເບີໂທກັບລາວຕອນໃດກໍບໍ່ຮູ້.

ແລ້ວນັບຈາກນັ້ນ ລາວກໍເລີ່ມເຂົ້າມາມີບົດບາດໃນຊີວິດ ຈາກຄົນຮູ້ຈັກກໍກາຍມາເປັນຄົນຮັກໃນທີ່ສຸດ ຄວາມຮູ້ສຶກຕອນນັ້ນລາວເປັນຄົນດີຄົນນຶ່ງເອົາໃຈກໍເກັ່ງທັງຕາມໃຈຂ້າພະເຈົ້າທຸກຢ່າງ ທັງຄໍາເວົ້າຄໍາວ່າກໍອ່ອນຫວານ ນໍ້າເຜີ້ງເດືອນຫ້າກໍບໍ່ປານ ອີກທັງເຄື່ອງໃຊ້ຂອງຢູ່ຂອງກິນ ລາວກໍຫາມາໃຫ້ບໍ່ຂາດ ລາວເຮັດຄືຂ້າພະເຈົ້າເປັນເຈົ້າຍິງໃນນິຍາຍທີ່ຢາກໄດ້ຫຍັງກໍບໍ່ຄັດຈັກຢ່າງຍ້ອນເຫດນີ້ຈະບໍ່ໃຫ້ຂ້າພະເຈົ້າຮັກລາວໄດ້ແນວໃດ.

ຍ້ອນຮັກຈົນລືມໄປວ່າ **ເສືອລາຍນອກຄົນລາຍໃນ** ເພາະນັບຕັ້ງແຕ່ທີ່ຂ້າພະເຈົ້າຊວນລາວເມືອຫຼິ້ນບ້ານ ເພື່ອຈະໄດ້ຮູ້ຈັກກັບພໍ່ແມ່ ແຕ່ລາວກໍບໍ່ເຄີຍເມືອນໍາຈັກເທື່ອ ແລ້ວຈຸດປ່ຽນແທ້ໆກໍແມ່ນ ມື້ທີ່ຂ້າພະເຈົ້າປະຕິເສດທີ່ຈະໃຊ້ຮ່າງກາຍພິສູດຮັກແທ້ ແລ້ວນັບຈາກນັ້ນລາວກໍເລີ່ມປ່ຽນໄປຈາກຜູ່ຊາຍທີ່ແສນດີ ກໍເລີ່ມອອກລາຍໃຫ້ເຫັນ ທັງຄໍາເວົ້າ ແລະການກະທໍາ.

ແລ້ວຄວາມສໍາພັນນັບມື້ ຄືແຮ່ງຈືດຈາງຫ່າງເຫີນລົງເລື້ອຍໆ ຈາກທີ່ເຄີຍໂທຫາມື້ລະສາມເວລາດຽວນີ້ສາມມື້ຍັງບໍ່ໂທຫາ ໜ້າກໍບໍ່ເຫັນມາລົ້ມາຫຼຽວ ໃຈຂ້າພະເຈົ້າແຮ່ງກະວົນກະວາຍ ບໍ່ເປັນອັນກິນອັນນອນຫຍັງ ຍາມຮຽນກໍບໍ່ມີສະມາທິ



ມົວແຕ່ຄິດກັງວົນ ຢ້ານລາວຈະຖິ້ມໄປຫາຜູ່ໃໝ່ຈົນສົ່ງຜົນໃຫ້ການຮຽນຕົກລົງຫຼາຍ ໝູ່ຄູ່ກໍເຕືອນຫ້າມແຕ່ທຸກຄໍາເວົ້າບໍ່ເຂົ້າຫູເລີຍ.

ຈົນມາເຖິງມື້ທີ່ຄວາມສໍາພັນຕ້ອງແຕກຫັກ ໃນຂະນະທີ່ພວມນັ່ງຮຽນຢູ່ໃນຫ້ອງ ສຽງໂທລະສັບກໍດັງ ຕິດ..! ຂຶ້ນບາດນຶ່ງ ຂ້າພະເຈົ້າຟ້າວເປີດອ່ານຂໍ້ຄວາມນັ້ນທັນທີ ແຕ່ບໍ່ຄິດວ່າມັນຈະເຮັດໃຫ້ເຂື່ອນນໍ້າຕາຕ້ອງພັງຢ່າວລົງກັບບາດຄືຈັ່ງມີລູກທະນູນັບຮ້ອຍນັບພັນດອກຊັດເຂົ້າມາໃສ່ ໄຄແຕ່ໝົດຊົ່ວໂມງຮຽນພໍດີ ບໍ່ດັ່ງນັ້ນກໍຄົງຈະຮຽນບໍ່ຮູ້ເລື່ອງຫຍັງ.

ຫຼັງຈາກນັ້ນຂ້າພະເຈົ້າກໍຄຸມໂທຫາລາວໜ່ຳໆ ແຕ່ກໍບໍ່ຮັບສາຍ ຂໍ້ຄວາມທີ່ສົ່ງໄປກໍບໍ່ມີການຕອບກັບ ແລ້ວມື້ນັ້ນໝົດມື້ຂ້າພະເຈົ້າບໍ່ສາມາດຕິດຕໍ່ລາວໄດ້ເລີຍ ລາວບໍ່ໃຫ້ໂອກາດຂ້າພະເຈົ້າໄດ້ຖາມ ໄດ້ຮູ້ເຫດຜົນຫຍັງເລີຍ ລາວຕັດຄວາມສໍາພັນທັງໝົດລົງພຽງຂໍ້ຄວາມວ່າ “**ເຮົາເລີກກັນສາ!**”

ຂ້າພະເຈົ້າບໍ່ຄິດວ່າ “ອົກຫັກ” ມັນຈະເຈັບປວດເຖິງປານນີ້ ເບິ່ງຮ່າງກາຍກໍໄຮ້ບາດແຜ ແຕ່ມັນປວດຄືຊິຂາດໃຈທາງອອກດຽວຕອນນັ້ນກໍຄືເຫຼົ້າເບຍ ເພາະຄິດວ່າເມົາແລ້ວບໍ່ຮູ້ສຶກເຈັບ ແມ່ນ! ມັນບໍ່ຮູ້ສຶກເຈັບແທ້ ແຕ່ເກືອບຕາຍ ເພາະຫຼັງຈາກກັບຈາກໄປທ່ຽວປະມານ 12 ໂມງກາງຄືນ ໃນຂະນະທີ່ພວມນັ່ງສົມເສົ້າເຫງົາຫງອຍໄວ້ອາໄລໃຫ້ກັບຄວາມຮັກຢູ່ນັ້ນ ໝາກຫົວໃຈກໍຕົກລົງໄປຢູ່ປາຍຕີນ ອາການເມົາກໍສວ່າງທັນທີ ເມື່ອລົດທີ່ນັ່ງມານັ້ນແຫກໂຄ້ງລົງຂ້າງທາງ ດີແຕ່ບໍ່ມີໃຜເປັນຫຍັງ ເພາະຖ້າຕອນນັ້ນຫາກມີລົດແລ່ນສວນມາ ຫຼື

ມີເສົາໄຟຢູ່ຂ້າງທາງ ຂ້າພະເຈົ້າພ້ອມໝູ່ອີກສາມຄົນກໍຄົງເຫຼືອຕັ້ງແຕ່ຊື່ ແລ້ວຄົນທີ່ຈະເສຍໃຈທີ່ສຸດກໍຄືພໍ່ແມ່ພີ່ນ້ອງບໍ່ແມ່ນຊາຍໃຈດຳຄົນນັ້ນແນ່ນອນ.

ຫຼັງຈາກເຫດການເກືອບຕາຍໃນຄືນນັ້ນ ເຮັດໃຫ້ຂ້າພະເຈົ້າຮູ້ຄຸນຄ່າຂອງຊີວິດຫຼາຍຂຶ້ນ ທັງເອີ້ນສະຕິກັບມາໄດ້ວ່າ ທີ່ເຮົາມາຢູ່ນະຈຸດນີ້ເພື່ອຫຍັງກັນແທ້ ແລະ ກໍຮູ້ອີກວ່າ... **ບໍ່ມີຮັກແທ້ໃນວົງເຫຼົ້າ** ແລ້ວຖ້າເຮົາອາໄສແຕ່ນໍ້າເມົາ ບັນຫາເຮົາຍິ່ງຈະເພີ່ມຂຶ້ນ. ແລ້ວນັບແຕ່ນັ້ນມາບໍ່ວ່າຈະພົບບັນຫາຫຍັງກໍຕາມ ຂ້າພະເຈົ້າໄດ້ໃຫ້ສັນຍາກັບຕົນເອງວ່າ ຈະບໍ່ດຶງຕົນເອງເຂົ້າໃກ້ນໍ້າເມົາອີກເດັດຂາດ.

ບົດຮຽນທີ່ລໍ້າຄ່າທີ່ສຸດ ຄືການໄດ້ຮຽນຮູ້ຈາກຄວາມຜິດພາດໃນຊີວິດຈິງ ບໍ່ພຽງແຕ່ຈາກຄໍາບອກເລົ່າຂອງໃຜບາງຄົນຂ້າພະເຈົ້າຖືວ່າ**ຄວາມຜິດພາດບໍ່ແມ່ນຄວາມຊົ່ວ** ແຕ່ມັນເປັນສິ່ງທີ່ເຮັດໃຫ້ເຮົາເຂັ້ມແຂງຂຶ້ນ.





ພໍໄດ້ຊີມລົດຊາດຄວາມເຈັບປວດໃນເທື່ອກ່ອນເຮັດໃຫ້ໝາກຫົວໃຈດວງນີ້ແຂງແກ່ນ ຈົນເກືອບຈະແຂງກະດ້າງ ເພາະຮອຍບາດແຜຝັງເລິກຈົນໄຮ້ຄວາມຮູ້ສຶກຕໍ່ກັບຄວາມຮັກ ມັນບໍ່ແມ່ນເລື່ອງແປກທີ່ຄົນໆນຶ່ງຈະຮູ້ສຶກແບບນັ້ນ ຖ້າຫົວໃຈເຄີຍຖືກທຳຮ້າຍດ້ວຍນໍ້າມືຂອງຄົນທີ່ຮັກ.

ເພາະຄວາມຜິດຫວັງເຮົາຈຶ່ງມັກຖິ້ມໂທດໃຫ້ຄວາມຮັກ ເພາະຄວາມຮັກ ຕົນເອງເຖິງໄດ້ເຈັບປວດ ແຕ່ຄວາມຈິງແລ້ວ ຄວາມຮັກບໍ່ເຄີຍທຳຮ້າຍໃຜ ຄວາມຮັກໃຫ້ແຕ່ສິ່ງດີໆມີແຕ່ຄົນເຮົານີ້ແຫຼະທີ່ທຳຮ້າຍກັນເອງໂດຍໃຊ້ຄວາມຮັກເປັນເຄື່ອງມືຂ້າຄົນໄດ້ຢ່າງແນບນຽນໂດຍບໍ່ຖິ້ມບາດແຜໄວ້ເລີຍ ດັ່ງທີ່ຂ້າພະເຈົ້າເຄີຍໄດ້ພົບມາ.

ຫຼາຍໆຄົນຈຶ່ງມັກໃຫ້ນິຍາມຄໍາວ່າ "**ຄວາມຮັກ**" ໃນແບບຂອງຕົນວ່າ **ຄວາມຮັກຄືການເຫັນແກ່ຕົວ** ກໍມີ, ບາງກໍວ່າ **ຄວາມຮັກຄືສິ່ງທີ່ຫຼອກລວງ ຄືຄວາມເຈັບປວດ** ແລະອີກຫຼາຍໆນິຍາມ ຂຶ້ນກັບວ່າໃຜໄດ້ສຳຜັດຄວາມຮັກໃນແງ່ມຸມໃດ ໃນຂະນະທີ່ບາງຄົນກໍຄິດວ່າ **ຮັກແທ້ບໍ່ມີຈິງ** ແຕ່ກໍຍັງມີອີກຫຼາຍໆຄົນທີ່ໃຊ້ເວລາທັງຊີວິດເພື່ອນຳຫາຮັກແທ້ ຈາກໃຜບາງຄົນ, ແມ່ນ! ເຮົາອາດຈະໄດ້ພົບຄົນທີ່ເປັນຮັກແທ້ຂອງເຮົາ ແຕ່ກໍບໍ່ໄດ້ໝາຍຄວາມວ່າ ເຮົາຈະເປັນຮັກແທ້ທີ່ຄົນໆນັ້ນນຳຫາຢູ່.



**ເຮັດດີຍ່ອມໄດ້ດີ** ເປັນຄຳເວົ້າທີ່ຖືກຕ້ອງທີ່ສຸດເພາະເວລາເກືອບ 3 ປີທີ່ຂ້າພະເຈົ້າປິດກັ້ນຕົວເອງອອກຈາກຄວາມຮັກ ເອົາເວລາທັງໝົດສຸມໃສ່ກັບການຮຽນ ເພື່ອຫວັງເອົາໃບປະລິນຍາໄປໃຫ້ພໍ່ແມ່ຊື່ນໃຈ ແລະ ສຳຄັນແມ່ນເພື່ອຕົນເອງຈະໄດ້ມີວຽກດີໆເຮັດ ເພາະບັນຫາປະລິນຍາເຕະຝຸ່ນເກີດມີຫຼາຍໃນສັງຄົມປັດຈຸບັນ ເພາະດຽວນີ້ເຂົາບໍ່ໄດ້ວັດຄວາມສາມາດຂອງຄົນຈາກໃບປະລິນຍາພຽງຢ່າງດຽວ ຖ້າຄວາມສາມາດບໍ່ມີ ໃບປະລິນຍາກໍກາຍເປັນພຽງເຈັ້ຍກະດາດແຜ່ນນຶ່ງເທົ່ານັ້ນເອງ.

ເພາະບໍ່ຢາກເຫັນໃບປະລິນຍາ ເປັນພຽງເຈັ້ຍກະດາດທີ່ໄຮ້ຄ່າ ຂ້າພະເຈົ້າຈຶ່ງໄດ້ທຸ້ມເທທັງແຮງກາຍແຮງໃຈທັງໝົດໃສ່ກັບມັນ ຈົນຄູອາຈານເພິ່ນເຫັນເຖິງຄວາມຕັ້ງໃຈ ແລະຄວາມສາມາດຈຶ່ງແນະນຳວຽກໃຫ້ ຂ້າພະເຈົ້າໄດ້ເຮັດວຽກຕັ້ງແຕ່ຍັງບໍ່ມີປະລິນຍາຈັກໃບ ແລະເຖິງແມ່ນວຽກຈະບໍ່ກົງກັບທີ່ຮຽນມາຮ້ອຍເປີເຊັນ ແຕ່ເພິ່ນກໍຍັງຮັບເຂົ້າເຮັດວຽກນຳທັງອົດທົນເຝິກວຽກໃຫ້ຈົນເປັນ ແລະທີ່ສຳຄັນກໍແມ່ນຂ້າພະ-ເຈົ້າໄດ້ມານອນແຊ່ເຮັດວຽກຢູ່ຫໍສະໝຸດ ໃຊ້ເວລາທັງໝົດຢູ່ກັບກອງໜັງສື ຢູ່ກັບນັກຂຽນທີ່ຂ້າພະເຈົ້າຕິດຕາມອ່ານຜົນງານເພິ່ນມາໂດຍຕະຫຼອດ. ນີ້ຖືເປັນການທຸ້ມເທທີ່ກຳໄລທີ່ສຸດເພາະທັງໄດ້ເຮັດວຽກ ແລະໄດ້ຮຽນຮູ້ໄປນຳ ຈຶ່ງເຮັດໃຫ້ເຂົ້າໃຈ ແລະໄດ້ຮຽນຮູ້ສິ່ງໃໝ່ໆໂດຍຜ່ານຕົວອັກສອນ.

ນັບຈາກນັ້ນ ສະຖານທີ່ທ່ຽວປະຈຳຂອງຂ້າພະເຈົ້າກໍຄື ຮ້ານໜັງສື ໂດຍມີຕົວອັກສອນເປັນພາຫະນະ ນຳພາຂ້າ-



ພະເຈົ້າທ່ອງທ່ຽວປະຈົນໄພໄປທຸກແຫ່ງຫົນ ມີປາກກາເປັນຕົວຊ່ອຍລະບາຍຄວາມຮູ້ສຶກ ແລະມີໃບເຈ້ຍເປັນເພື່ອນຮັບຟັງ ຂ້າພະເຈົ້າຖືວ່ານີ້ຄືຄວາມໂຊກດີອີກຢ່າງນຶ່ງໃນຊີວິດ.

ຈະແມ່ນຄວາມບັງເອີນ ຫຼືໂຊກຊະຕາກໍບໍ່ຮູ້ທີ່ນຳພາໃຫ້ພົບກັບຊາຍຄົນນັ້ນທີ່ຮ້ານໜັງສື ເພາະທຸກເທື່ອທີ່ຂ້າພະ-ເຈົ້າໄປ ແມ່ນຈະເຫັນລາວຢູ່ຫັ້ນກ່ອນແລ້ວ ຖ້າຫາກແມ່ນໄດ້ຍ່າງຕຳກັນ ຫຼືພວມຈະຈັບປຶ້ມເຫຼັ້ມດຽວກັນລະແມ່ນຄືໃນລະຄອນສາກທີ່ພະເອກນາງເອກພົ້ກັນເລີຍ.

ຊາຍຜູ້ທີ່ມີນິໄສກົງໄປກົງມາ ເອົາໃຈຄົນບໍ່ເປັນ ໄຮ້ເຊິ່ງຄວາມອ່ອນຫວານ ອີກທັງປາກຮ້າຍ ແຕ່ເປັນຫຍັງຫົວໃຈທີ່ວ່າແຂງກະດ້າງຂອງຂ້າພະເຈົ້າຈຶ່ງເລີ່ມອ່ອນລົງເມື່ອພົ້ໄດ້ລາວ.

ມາຮອດຕອນນີ້ ຂ້າພະເຈົ້າກໍເລີ່ມສົງໄສ ເປັນເພາະເຫດໃດ ເຮົາຈຶ່ງນັ່ງຍິ້ມຢູ່ຄົນດຽວໄດ້ຢ່າງມີຄວາມສຸກ ພຽງແຕ່ນຶກເຖິງຄົນໆນຶ່ງ, ເປັນຫຍັງ ຕ້ອງກະວົນກະວາຍຍາມເມື່ອບໍ່ເຫັນໜ້າ, ເປັນຫຍັງ ຕ້ອງຄິດເປັນຫ່ວງ ທັງຢາກຢູ່ຄຽງຂ້າງເພື່ອຮັບຟັງບັນຫາຂອງເຂົາ, ແລ້ວເປັນຫຍັງຫົວໃຈເຮົາຕ້ອງເຕັ້ນແຮງທຸກເທື່ອ ເມື່ອຢູ່ໃກ້ຄົນໆນັ້ນ ແລ້ວທັງໝົດນີ້ເອີ້ນວ່າ: **ຄວາມຮັກໄດ້ບໍ!.**

ໃນຊີວິດນີ້ເຮົາຈະໄດ້ພົບຄົນທີ່ຮັກ ແລະ ດີກັບເຮົາຢ່າງຈິງໃຈຢູ່ຈັກຄົນ ເພາະນອກຈາກພໍ່ແມ່ແລ້ວຈະມີໃຜທີ່ຈະຄອຍບອກເຕືອນ ແລະສັ່ງສອນໃນຍາມທີ່ເຮົາເຮັດຫຍັງບໍ່ຖືກບໍ່ຄວນ,ທັງໃຫ້ກຳລັງໃຈແລະຢູ່ຄຽງຂ້າງໃນຍາມທີ່ພົບບັນ

ຫາ ແລ້ວຈະມີໃຜທີ່ຈະຮັກເຮົາຢ່າງຈິງໃຈ ຮັກດ້ວຍໃຈທີ່ບໍລິສຸດຢ່າງໝັ້ນຄົງບໍ່ຄິດຫັກຫຼັງຫຼືທຳຮ້າຍໃຫ້ເຮົາເຈັບ ແລະຈະມີໃຜທີ່ພ້ອມຈະຢູ່ດູແລເຊິ່ງກັນ ແລະກັນໄປຈົນເຖິງລົມຫາຍໃຈສຸດທ້າຍຂອງຊີວິດ, ຂ້າພະເຈົ້າບໍ່ຮູ້ດອກວ່າທຸກຄົນຈະໄດ້ພົບຄົນໆນັ້ນຫຼືບໍ, ແຕ່ຕອນນີ້ ນະເວລານີ້ຂ້າພະເຈົ້າຄິດວ່າໄດ້ພົບຄົນໆນັ້ນແລ້ວ.

ເຊື່ອວ່າຄວາມຮູ້ສຶກເຫຼົ່ານີ້ທຸກຄົນຄົງເຄີຍເປັນ ຄວາມຮູ້ສຶກທີ່ບໍ່ຢາກໃຫ້ໃຜມາອອກຄຳສັ່ງ ຫ້າມນັ້ນຫ້າມນີ້, ຄວາມຮູ້ສຶກທີ່ວ່າຕົນເອງໃຫຍ່ແລ້ວ ຮູ້ຈັກດີຊົ່ວພໍທີ່ຈະຕັດສິນໃຈຫຍັງກໍໄດ້ດ້ວຍຕົນເອງ ແລະ ຄວາມຮູ້ສຶກທີ່ຢາກມີອິດສະຫຼະໃນການໃຊ້ຊີວິດຢູ່ນອກກອບ ໂດຍສະເພາະເລື່ອງຂອງຄວາມຮັກ.

ເວລາ2ປີປາຍທີ່ຂ້າພະເຈົ້າກັບລາວໄປມາຫາສູ່ກັນ ໂດຍທີ່ພໍ່ແມ່ກໍຮັບຮູ້ ເພາະລາວເປັນຄົນຊວນໃຫ້ພາໄປຮູ້ຈັກກັບພໍ່ແມ່ ກ່ອນທີ່ຈະປ່ຽນສະຖານະຈາກຄົນຮູ້ຈັກເປັນຄົນຮັກ ລາວບໍ່ພຽງແຕ່ເຂົ້າມາເປັນສ່ວນນຶ່ງໃນຊີວິດຂ້າພະເຈົ້າ ແຕ່ລາວຍັງຮັບຟັງພ້ອມຊ່ອຍແກ້ໄຂທຸກບັນຫາໃນຄອບຄົວ ທາງພໍ່ແມ່ຈຶ່ງຮັກ ແລະ ໄວ້ໃຈລາວຫຼາຍ.

ອາດເປັນເພາະຄວາມດີຂອງລາວ ຫຼື ເປັນເພາະຄິດວ່າຕົນເອງໃຫຍ່ພໍທີ່ຈະຕັດສິນໃຈ ແລະ ຮັບຜິດຊອບຫຍັງກໍໄດ້ແລ້ວບໍ! ຈຶ່ງເຮັດໃຫ້ຂ້າພະເຈົ້າໃຈອ່ອນຍອມໃຫ້ລາວໄດ້ຄອບຄອງທັງໃຈ ແລະ ກາຍ.

ຍອມຮັບວ່າຂ້າພະເຈົ້າຕັດສິນໃຈໄວເກີນໄປ ເລື່ອງແບບນີ້ບໍ່ຄວນເກີດຂຶ້ນ ຖ້າຫາກຍັງບໍ່ໄດ້ຜ່ານພິທີແຕ່ງດອງ



ແຕ່ຄິດໄດ້ກໍຊ້າໄປແລ້ວ ເພາະຕອນນີ້ໄດ້ມີອີກນຶ່ງຊີວິດເພີ່ມເຂົ້າມາໃຫ້ຮັບຜິດຊອບ ນຶ່ງຊີວິດທີ່ເກີດຈາກຄວາມຜິດພາດທີ່ຕັ້ງໃຈໂດຍມີພື້ນຖານຄືຄວາມຮັກ, ຜິດພາດທີ່ບໍ່ໄດ້ວາງແຜນຊີວິດໃຫ້ຮອບຄອບ.

ເພິ່ນວ່າ “ລູກຜູ້ຊາຍບໍ່ໄດ້ວັດກັນທີ່ເພດພຽງແຕ່ຢ່າງດຽວ ແຕ່ເຂົາວັດກັນທີ່ຄວາມຮັບຜິດຊອບນຳ” ຂ້າພະເຈົ້າຍັງຈື່ຄຳສອນຂອງພໍ່ສະເໝີວ່າ: **ສິ່ງທີ່ສຳຄັນກວ່າຄຳເວົ້າ ນັ້ນຄືການກະທຳ ແຕ່ການຮັບຜິດຊອບການກະທຳ ນັ້ນສຳຄັນທີ່ສຸດ** ແລ້ວມື້ນີ້ຊາຍຜູ່ທີ່ຂ້າພະເຈົ້າຈະໃຊ້ຊີວິດຢູ່ຮ່ວມນຳນັ້ນລາວກໍອອກມາສະແດງຄວາມຮັບຜິດຊອບ ໃນການກະທຳຂອງລາວແບບລູກຜູ່ຊາຍໃຫ້ເຫັນ ໂດຍການຍົກຂັນໝາກມາສູ່ຂໍຕາມປະເພນີ.

ໃນຕອນນີ້ເຮົາສອງຄົນບໍ່ພຽງແຕ່ເປັນແຟນຫຼືຜົວເມຍເທົ່ານັ້ນ ແຕ່ຍັງມີອີກໜ້າທີ່ ທີ່ຍິ່ງໃຫຍ່ຕ້ອງຮັບຜິດຊອບຮ່ວມກັນ ນັ້ນກໍຄືໜ້າທີ່ຂອງ “ພໍ່ແມ່” ແລ້ວຈາກຊາຍທີ່ແຂງກະດ້າງກໍເລີ່ມອ່ອນຫວານລົງ ເອົາໃຈເກັ່ງຂຶ້ນທັງໃສ່ໃຈເລື່ອງເລັກໆນ້ອຍໆ ມີຫຼາຍເທື່ອທີ່ເຮັດໃຫ້ຂ້າພະເຈົ້າຕົກຂຸມຮັກລາວອີກຄັ້ງ ຂ້າພະເຈົ້າອາດບໍ່ແມ່ນເຈົ້າຍິງໃນເທບນິຍາຍ ແຕ່ລາວຄືເຈົ້າຊາຍໃນຊີວິດຈິງຂອງຂ້າພະເຈົ້າ.

ນອກຈາກຄວາມຮັກແລ້ວ ຄວາມເຂົ້າໃຈ ແລະ ການອະໄພໃຫ້ກັນຖືວ່າເປັນພື້ນຖານສຳຄັນ ບໍ່ວ່າຈະຄົບຫາກັນໃນຖານະໃດ. ຄວາມສຳພັນສັນຜົວເມຍ ເມື່ອແຍກທາງກັນກໍກາຍເປັນຄົນອື່ນ ຕ່າງຈາກຄວາມສຳພັນແບບພໍ່ແມ່ລູກເຖິງ



ຈະຕັດສ່ຳໃດກໍບໍ່ຂາດ.

ແຕ່ຄົນເຮົາສ່ວນຫຼາຍ ເວລາທີ່ຜິດຖຽງກັບຊູ້ກັບແຟນ ຄຳຂໍໂທດສາມາດກ່າວອອກມາໄດ້ຢ່າງບໍ່ຂ້ອງບໍ່ຄາພ້ອມກັບນ້ຳຕາຂອງຄວາມເສຍໃຈທັງພ້ອມເຮັດທຸກຢ່າງເພື່ອໃຫ້ຄົນທີ່ຕົນຮັກພໍໃຈ. ແຕ່ເວລາທີ່ພໍ່ແມ່ສັ່ງສອນຫຼືຫ້າມປາມຫຍັງກໍຕາມ ລູກບາງຄົນມັກໂຕ້ຕອບດ້ວຍກິລິຍາທີ່ແຂງກະດ້າງ ຫຼືຮ້າຍໃສ່ຄືນ ຈົນນ້ຳຕາຜູ່ເປັນພໍ່ແມ່ ຕ້ອງຫຼັ່ງລົງດ້ວຍຄວາມເຈັບປວດ, ເພາະລູກໆມັກຄິດວ່າພໍ່ແມ່ບໍ່ເຂົ້າໃຈ ກໍຢາກໃຫ້ລອງຄິດກັນໃໝ່ ໃນເມື່ອພໍ່ແມ່ກໍເຄີຍໄດ້ເປັນລູກ ເຄີຍຜ່ານໄວຫຼິ້ນໄວກິນມາກ່ອນຕົນ ໃນຂະນະທີ່ຕົນຜູ່ເປັນລູກຍັງບໍ່ເຄີຍໄປຮອດນະຈຸດທີ່ຂຶ້ນຊື່ວ່າ ພໍ່ແມ່ນັ້ນຊ້ຳ!.

ແຕ່ກ່ອນ ຂ້າພະເຈົ້າກໍເປັນຄົນນຶ່ງ ທີ່ເຄີຍຮູ້ສຶກແບບນັ້ນ ຈົນມາເຖິງມື້ທີ່ໄດ້ພົບ **ຮັກແທ້** ຈຶ່ງໄດ້ເຂົ້າໃຈເຖິງຄວາມຮັກຄວາມຫ່ວງໃຍ ທີ່ພໍ່ແມ່ມີໃຫ້ລູກນັ້ນ ເປັນຄວາມຮັກທີ່ບໍລິສຸດຮັກ... ຮັກແບບບໍ່ມີເງື່ອນໄຂໃດໆ!.

**ໝູກັດຫູກາຈຶ່ງຮູ້ຄຸນແມວ ລູກແຂວນແອວຈຶ່ງຮູ້ຄຸນພໍ່ແມ່** ເປັນຄຳເວົ້າທີ່ຖືກຕ້ອງທີ່ສຸດ ເພາະເມື່ອໃດທີ່ຕົນເອງມີລູກຈະນຶກເຫັນພາບຄວາມລຳບາກຂອງສອງເຖົ້າໄດ້ຢ່າງຊັດເຈນ ຄືກັບຂ້າພະເຈົ້າໃນຕອນນີ້.

ໃນເມື່ອຂ້າພະເຈົ້າໄດ້ສຳຜັດ ໄດ້ເຮັດໜ້າທີ່ແມ່ແລ້ວກໍອົດບໍ່ໄດ້ທີ່ຈະແບ່ງປັນປະສົບການເທື່ອນີ້ອອກມາສູ່ສາຍຕາລູກໆທັງຫຼາຍໄດ້ຮັບຮູ້ ເພື່ອຈະໄດ້ເປັນເຄື່ອງໝາຍຊ່ອຍເຕືອນສະຕິລູກໆວ່າ “**ບຸນຄຸນພໍ່ແມ່ນັ້ນ ຍິ່ງໃຫຍ່ສ່ຳໃດ**”!.



ທ້າວ ຈັນສິລາ ອາຍຸໄດ້ 1 ມື້



1 ອາທິດ



## ໄສຍະ... “ອັນຕະລາຍ”

# I. ສຳຜັດແຮກ

ມີຫຼາຍຕໍ່ຫຼາຍຄູ່ແຕ່ງດອງທີ່ຢູ່ກິນນຳກັນມາດົນແຕ່ກໍບໍ່ເຄີຍໄດ້ທາຍາດໄວ້ສືບສະກຸນ ບາງຄົນກໍຕັ້ງທ້ອງຖືພາໄດ້ພຽງເດືອນສອງເດືອນກໍຫຼຸ ນີ້ຄືການສູນເສຍທີ່ເຈັບປວດທີ່ສຸດສຳລັບຄົນເປັນແມ່.

ເຖິງແມ່ນປັດຈຸບັນ ເຕັກໂນໂລຊີຈະພັດທະນາໄປໄກເຄື່ອງມືການແພດຈະທັນສະໄໝ ແຕ່ບັນຫາການມີລູກຍາກຫຼືບໍ່ມີລູກ ກໍຍັງເປັນບັນຫາທີ່ສ້າງຄວາມອຸກອັ່ງໃຫ້ຜົວເມຍຫຼາຍໆຄູ່, ເພາະເຖິງຈະກິນຢາ ເຂົ້າປຶກສາແພດໝໍ ບາງຄົນເພິ່ງໄສຍະສາດ ກິນຫວ້ານກິນຢາຕ່າງໆຫວັງໃຫ້ມີລູກແຕ່ກໍໄຮ້ວີ່ແວວ ມັນເປັນສຳຜັດທີ່ເຈັບປວດທໍລະມານຫຼາຍສຳລັບຄູ່ຮັກທີ່ແຕ່ງດອງແລ້ວ.

ເພາະເຫດນີ້ຈຶ່ງເຮັດໃຫ້ ການຮັບເອົາລູກຄົນອື່ນມາລ້ຽງເປັນທາງເລືອກສຸດທ້າຍທີ່ພໍ່ແມ່ຫຼາຍຄົນຕັດສິນໃຈເຮັດເພື່ອຫວັງຢ່າງໜ້ອຍໆຍາມຕົນແກ່ເຖົ້າໄປກໍຍັງມີລູກຢູ່ເບິ່ງແຍງ. ແຕ່ກົງກັນຂ້າມຄົນທີ່ບໍ່ພ້ອມ ຫຼືບໍ່ຢາກມີຜັດວ່າມີ ຈຶ່ງເກີດມີຂ່າວສະເທືອນໃຈໃຫ້ເຮົາເຫັນຢູ່ເລື້ອຍໆວ່າ ມີການເອົາລູກອອກ (ຫຼຸລູກ) ຫຼືເກີດລູກແລ້ວກໍເອົາລູກໄປຖິ້ມ...

ຍອມຮັບແຕ່ກ່ອນຂ້າພະເຈົ້າຄິດວ່າ ການທີ່ເອົາລູກໃຫ້ຄົນອື່ນໄປລ້ຽງນັ້ນ ຜູ່ເປັນພໍ່ແມ່ຄືໃຈດຳແທ້ ລູກຕົນເອງແທ້ໆຍັງໃຫ້ຄົນອື່ນໄດ້ບໍ່ສົມຄວນທີ່ຈະເປັນຮອດພໍ່ແມ່ຄົນຊ້ຳ



ຍິ່ງຄົນທີ່ເຂົາໄປເອົາລູກອອກ ແມ່ນເຂົາເຮັດໄດ້ຈັ່ງໃດຫົວໃຈຄົງໄຮ້ຄວາມຮູ້ສຶກຢ່າວ່າແຕ່ເປັນແມ່ຄົນເລີຍພຽງແຕ່ເປັນຄົນເຂົາກໍບໍ່ຄູ່ຄວນ. ແຕ່ມາຮອດຕອນນີ້ ຂ້າພະເຈົ້າກໍເລີ່ມເຂົ້າໃຈເຖິງເຫດຜົນນັ້ນແລ້ວວ່າເປັນຫຍັງເຂົາຄືເຮັດລົງໄດ້.

ຮອຍຍິ້ມພ້ອມນ້ຳຕາຍິ່ງອອກມາພ້ອມໆກັນ ຂ້າພະ-ເຈົ້າຍ່າງອອກຈາກຫ້ອງນ້ຳດ້ວຍຄວາມດີໃຈມືນຶ່ງລູບທ້ອງຄ່ອຍໆອີກເບື້ອງນຶ່ງຖືຫຼອດສີຂາວນ້ອຍລະຫວ່າງກາງມີຂີດແດງສອງຂີດໄຊຂຶ້ນຢູ່ ເຊິ່ງສະແດງໃຫ້ຮູ້ວ່າ ມີອີກນຶ່ງຊີວິດນ້ອຍໆກຳລັງຢູ່ໃນທ້ອງ.

ຫຼາຍຄວາມຮູ້ສຶກເກີດຂຶ້ນພ້ອມກັນໃນສະຖານະການດຽວເຮັດໃຫ້"ວ່າທີ່ແມ່" ຄືຂ້າພະເຈົ້າເວົ້າຫຍັງບໍ່ອອກຫົວໃຈເຕັ້ນແຮງຄືຈະລຸອອກມານອກໄດ້ຮອຍຍິ້ມພ້ອມນ້ຳຕາທີ່ຍິ່ງອອກມາພ້ອມກັນ ມັນເປັນສຳຜັດທີ່ມະຫັດສະຈັນຍິ່ງກວ່າຖືກຫວຍຮາງວັນທີນຶ່ງອີກ.

ສົມພໍດອກຊ່ວງສອງອາທິດຫຼັງນີ້ຂ້າພະເຈົ້າຮູ້ສຶກຢາກກິນແຕ່ສົ້ມ ກິນທໍ່ໃດກໍຄືວ່າອິ່ມບໍ່ເປັນກິນໄດ້ຕະຫຼອດເວລາບຶດລະຢາກ ຄາວລະຢາກ ທຳອິດຄຶດວ່າແມ່ນຕົນເອງເປັນຫຍັງ ຢາກກິນແຕ່ສົ້ມຢ້ານຊິເຈັບທ້ອງເຈັບໄສ້ຊິເສຍເວ-ລາເຮັດວຽກໄປຮຽນແພດອີກແຫຼະ ສຸດທ້າຍແລ້ວກໍແມ່ນມີຄົນນ້ອຍຢູ່ໃນທ້ອງນີ້ເອງ.



ຄົບຮອບ 1 ເດືອນ





2 ເດືອນ



# II. ຕັດສິນໃຈ

## ອາທິດທີ 5

ແຕ່ຂ່າວດີ ກໍມັກມາພ້ອມກັບຄວາມອຸກອັ່ງ ເມື່ອທຸກສິ່ງບໍ່ໄດ້ເປັນຢ່າງທີ່ຄິດ ໃນຂະນະທີ່ຕົນພວມຍິ້ມຍິນດີຢູ່ນັ້ນກໍນຶກຂຶ້ນໄດ້ວ່າ ຕົນເອງຍັງບໍ່ໄດ້ແຕ່ງດອງ ບໍ່ທັນສ້າງຄອບຄົວເຫດໃດຊິມີລູກໄດ້! ຄວາມອຸກອັ່ງປ່ຽນແທນຄວາມເບີກບານທັນທີ.

ຫຼາຍຄົນຄົງຄິດວ່າຂ້າພະເຈົ້າເປັນຍິງບໍ່ດີ ເປັນຍິງໃຈງ່າຍທີ່ຖືພາກ່ອນແຕ່ງແມ່ນບໍ່! ຂ້າພະເຈົ້າຍອມຮັບກັບຄວາມຜິດພາດທີ່ຕັ້ງໃຈໃນເທື່ອນີ້ ເພາະລູກທີ່ກຳລັງຈະມືນຕາມາເບິ່ງໂລກເກີດຈາກຄວາມຮັກຄວາມພໍໃຈຂອງພໍ່ ແລະແມ່ ຟັງເບິ່ງຄືວ່າຂ້າພະເຈົ້າບໍ່ຮູ້ສຶກລະອາຍແກ່ໃຈເລີຍແມ່ນບໍທີ່ເຮັດຜິດຮີດຜິດຄອງແນວນີ້ ຖ້າຈະຖາມວ່າອາຍບໍ່ ນັ້ນບໍ່ອາຍ ແຕ່ຂ້າພະເຈົ້າຈະອາຍ ແລະຮູ້ສຶກຜິດແຖມຍັງເປັນບາບ ຖ້າຂ້າ-ພະເຈົ້າຫາກຕັດໂອກາດບໍ່ໃຫ້ເດັກນ້ອຍຜູ່ນີ້ໄດ້ອອກມາມືນຕາເບິ່ງໂລກ.

ແຕ່ຖ້າຈະເອົາລູກໄວ້ ແລ້ວພໍ່ແມ່ເດຈະເປັນແນວໃດ? ພວກເພິ່ນຊິເອົາໜ້າໄປໄວ້ໃສ? ໃນເມື່ອຄວາມຫວັງດຽວຂອງຄອບຄົວຢູ່ທີ່ຂ້າພະເຈົ້າຫຼືຈະໄປເອົາອອກບັນຫາທຸກຢ່າງຈະໄດ້ຈົບລົງ? ແລ້ວຄວາມປອດໄພ ແລະສຸຂະພາບຂ້າພະເຈົ້າເດຈະເປັນແນວໃດ? ມັນຈະປອດໄພສໍ່າໃດ? ແຮ່ງເຫັນຂ່າວ

ວ່າການເອົາລູກອອກມີຄວາມສ່ຽງສູງ ທີ່ຈະຕິດພະຍາດນັ້ນນີ້ ແລະທີ່ສຳຄັນເດັກນ້ອຍບໍລິສຸດມີຄວາມຜິດຫຍັງຈຶ່ງຈະທຳລາຍເຂົາ!.

ຂ້າພະເຈົ້າຢຸດຄວາມຄຶດທັງໝົດນີ້ລົງ ແລ້ວຟ້າວໂທແຈ້ງຂ່າວນີ້ໃຫ້ຄົນທີ່ກຳລັງຈະເປັນພໍ່ໄດ້ຮູ້, ຄວາມອຸກອັ່ງກັງວົນໄດ້ດັບລົງ ຄວາມດີໃຈ ແລະຄວາມຫວັງຂ້າພະເຈົ້າກັບມາອີກຄັ້ງ ເມື່ອໄດ້ຍິນແຟນບອກວ່າ:

"ບໍ່ຕ້ອງເອົາອອກໃດ໋ ເຮົາສອງຄົນເຮັດຜິດກໍຮູ້ ແຕ່ບໍ່ຈຳເປັນຕ້ອງເຮັດບາບ ເຖິງມື້ນີ້ເຮົາຈະຍັງບໍ່ໄດ້ແຕ່ງດອງ ແຕ່ກໍບໍ່ໝາຍຄວາມວ່າເຮົາຈະແຕ່ງບໍ່ໄດ້ເດ ໃນເມື່ອເຮົາກໍຕົກລົງກັນແລ້ວເດວ່າ ກ່ອນເຂົ້າພັນສາປີນີ້ຂ້ອຍກັບເມືອກໍຈະໄປສູ່ຂໍໄວ້ ແລ້ວຖ້າອອກພັນສາປີໜ້າເຮົາກໍຈະແຕ່ງ ໃນເມື່ອເພິ່ນພ້ອມທີ່ຈະມາເກີດນຳເຮົາແລ້ວກໍຕ້ອງເອົາໄວ້ ເຖິງຈະມີກ່ອນແຕ່ງກໍຕາມເພາະຈັ່ງໃດເອົາກັນໄປເຮົາກໍຕ້ອງເອົາລູກຢູ່ແລ້ວ ບໍ່ຕ້ອງຄຶດຫຍັງຫຼາຍ ໂທແຈ້ງຂ່າວນີ້ໃຫ້ພໍ່ແມ່ຮູ້ ຂ້ອຍກັບເມືອແລ້ວຈະຍົກຂັນໝາກໄປຂໍທັນທີ!".



## ອາທິດທີ 6

ຂ້າພະເຈົ້າຮ່ຳຄຶດຢູ່ສອງສາມມື້ ກ່ອນຈະຕັດສິນໃຈເຮັດຕາມຄຳທີ່ແຟນບອກຍ້ອນໃຈກໍຢາກເອົາລູກໄວ້ແຕ່ທຸກຢ່າງກໍບໍ່ໄດ້ເປັນຕາມທີ່ຄຶດ ໃນເມື່ອພໍ່ແມ່ເອື້ອຍບໍ່ເຫັນດີນຳເພາະຕອນນີ້ແຟນຂ້າພະເຈົ້າໄດ້ຖືກຍ້າຍໄປເຮັດວຽກຢູ່ໄກພໍ່ແມ່ຈຶ່ງບໍ່ໝັ້ນໃຈວ່າລາວຈະກັບມາຂໍ ມາຮັບຜິດຊອບ ເພິ່ນຈຶ່ງບອກໃຫ້ໄປເອົາອອກ ເພື່ອຕັດບັນຫາແຕ່ຕົ້ນ ເພາະຕອນນີ້ທ້ອງຄົງຍັງບໍ່ໃຫຍ່.

"ຖ້າເຂົາມາຂໍ ມາແຕ່ງແທ້ ຈັ່ງເອົາລູກໃໝ່ກໍໄດ້" ພໍ່ແມ່ເພິ່ນວ່າ.

ຂ້າພະເຈົ້ານອນບໍ່ຫຼັບໄປຫຼາຍມື້ ກັບບັນຫາທີ່ແກ້ບໍ່ຕົກ ແຕ່ກໍຄົງເພາະຄວາມຮັກ ຄວາມຫວັງດີທີ່ມີຕໍ່ລູກເພິ່ນຈຶ່ງຕັດສິນໃຈໃຫ້ຂ້າພະເຈົ້າເຮັດແນວນັ້ນ ເພາະຄົງບໍ່ມີພໍ່ແມ່ຄົນໃດທີ່ບໍ່ຮັກບໍ່ຫ່ວງລູກຢາກໃຫ້ລູກໄດ້ຮັບແຕ່ສິ່ງດີໆ ເຊັ່ນດຽວກັບຂ້າພະເຈົ້າເຖິງຈະຍັງບໍ່ເຫັນໜ້າລູກແຕ່ກໍຮັກແລະພ້ອມທີ່ຈະປົກປ້ອງລູກໄວ້. "**ເພາະຄົນທີ່ທຸລະກິດລົ້ມລະລາຍ ກໍບໍ່ແມ່ນວ່າຈະຕ້ອງຂ້າຕົວຕາຍທຸກຄົນ, ດັ່ງດຽວກັບນັກສຶກສາທີ່ເສັງບໍ່ໄດ້ກໍບໍ່ໝາຍວ່າຕ້ອງລາອອກຈາກສະຖາບັນ ດັ່ງນັ້ນຄົນທີ່ຖືພາກ່ອນແຕ່ງດອງ ກໍບໍ່ຈຳເປັນທີ່ຈະຕ້ອງເອົາລູກອອກຄືກັນ**" ເພາະເຊື່ອວ່າທຸກບັນຫາຍ່ອມມີທາງອອກຫຼາຍກວ່ານຶ່ງທາງ ຢູ່ທີ່ເຮົາເປັນຄົນເລືອກວ່າຈະອອກທາງໃດຕ່າງຫາກ.



ເຖິງແມ່ນວ່າຈະມີເລື່ອງໃຫ້ຄຶດກັງວົນປານໃດກໍຕາມ ແຕ່ດ້ວຍສັນຊາດຕະຍານຂອງຄວາມເປັນແມ່ ຂ້າພະເຈົ້າກໍບໍ່ໄດ້ລະເລີຍທີ່ຈະເບິ່ງແຍງຕົວເອງ ເພາະຕອນນີ້ບໍ່ແມ່ນຕົວຄົນດຽວແລ້ວຍັງມີຊີວິດນ້ອຍໆຢູ່ໃນທ້ອງນຳ ຂ້າພະເຈົ້າພະຍາຍາມບໍ່ຄຶດບໍ່ກັງວົນ ຍາມກິນກໍຕ້ອງກິນ ເລືອກກິນແຕ່ແນວບຳລຸງທີ່ມີປະໂຫຍດຕໍ່ຕົນແລະລູກນ້ອຍ, ເຫຼົ້າຢາປາແປ້ງຂອງມຶນເມົາຕ່າງໆນັບທັງຊາກາເຟກໍຕ້ອງງົດທຸກຢ່າງ ຮອດຍາມນອນກໍພະຍາຍາມນອນໃຫ້ຫຼັບ ເຖິງແມ່ນຕາຈະບໍ່ຍອມຫຼັບລົງກໍຕາມ ເພາະຮູ້ດີວ່າ ຖ້າຂ້າພະເຈົ້າລະເລີຍບໍ່ໃສ່ໃຈຕໍ່ສຸຂະພາບແລ້ວກໍຈະມີຜົນກະທົບເຖິງລູກນຳ ແລະກໍຮູ້ດີວ່າພໍ່ແມ່ຄົງຜິດຫວັງໃນໂຕຂ້າພະເຈົ້າຫຼາຍ ທັງບໍ່ໝັ້ນໃຈວ່າເຂົາຈະມາສູ່ຂໍຕາມທີ່ເວົ້າແທ້ ຈົນກວ່າຈະເຫັນຂະບວນຂັນໝາກແຫ່ມາຢູ່ໜ້າເຮືອນ.

ເດືອນດຽວ ຍັງອີກພຽງເດືອນດຽວເທົ່ານັ້ນ ລາວກໍຈະກັບມາແລ້ວ ຍ້ອນລາວໄປວຽກຕ່າງແຂວງ ແລະຢູ່ຫ່າງໄກການໄປການມາຈຶ່ງບໍ່ສະດວກ, ມີພຽງແຕ່ຄຳເວົ້າທີ່ຜ່ານໂທລະສັບກໍບໍ່ອາດເພີ່ມຄວາມໝັ້ນໃຈໃຫ້ພໍ່ແມ່ໄດ້, ດັ່ງນັ້ນຄວາມກົດດັນມັນຈຶ່ງເພີ່ມຂຶ້ນເລື້ອຍໆ ດັ່ງດຽວກັບທ້ອງທີ່ໃຫຍ່ຂຶ້ນໄປທຸກມື້ ແຮ່ງເພີ່ມຄວາມກັງວົນໃຫ້ພໍ່ແມ່ ແລະເຮັດໃຫ້ຫົວໃຈທີ່ວ່າແຂງແກ່ນຂອງຂ້າພະເຈົ້າເລີ່ມອ່ອນລົງ.

ທຸກໆມື້ແມ່ ແລະເອື້ອຍຈະໂທມາຫາ ເລົ່າເຖິງເລື່ອງລາວຄວາມທຸກຍາກແຕ່ຄາວກ່ອນກີ້ ທີ່ລ້ຽງດູຂ້າພະເຈົ້າມາເຖິງກຳແພງນ້ຳຕາຈະໜາພຽງໃດກໍບໍ່ອາດກັ້ນໄວ້ໄດ້ ທຸກເທື່ອ



ທີ່ເຫັນເບີທາງບ້ານໂທມານ້ຳຕາກໍກຽມຖ້າທີ່ຈະໄຫຼໄວ້ແລ້ວ ຂ້າພະເຈົ້າເອງກໍບໍ່ອາດຈະສະຫຼະທາງໃດໄປໄດ້ ເພາະທັງສອງປຽບດັ່ງແກ້ວຕາ ແລະດວງໃຈ.

## ອາທິດທີ 7

"**ເວລາຈະຊ່ອຍໃຫ້ທຸກຢ່າງດີຂຶ້ນ**" ຄຳເວົ້ານີ້ຄົງໃຊ້ບໍ່ໄດ້ໃນສະຖານະການນີ້ ເພາະແຮ່ງເວລາຜ່ານໄປກໍແຮ່ງຄືວ່າສະຖານະການມັນໂຫດຮ້າຍໄປກວ່າເກົ່າ ເວລານຶ່ງເດືອນຜ່ານໄປຢ່າງຊ້າໆ ຄວາມກົດດັນຈາກທາງຄົວຄອບກໍເພີ່ມຂຶ້ນ ແມ່ເອງກໍຈົນນອນບໍ່ຫຼັບ ກິນບໍ່ແຊບອຸກອັ່ງຄຶດນຳຫຼາຍ (ແມ່ເວົ້າເວລາລົມໂທລະສັບນຳ) ຄຳເວົ້າຂອງແມ່ເຮັດໃຫ້ໃຈຂ້າພະເຈົ້າເຕັ້ນຊ້າລົງ ຮ່າງກາຍຄືຈັ່ງບໍ່ມີແຮງ ຕອນນັ້ນຄຶດຫຍັງບໍ່ອອກບໍ່ຮູ້ຈະເລືອກທາງໃດ ນຶກເຫັນພາບລູກທີ່ພວມຈະເກີດມາຈິນຕະນາການໄປເຖິງໃບໜ້າຂອງລາວ ຂ້າພະເຈົ້າກໍຍິ້ມອອກມາຢ່າງມີຄວາມສຸກ ແຕ່ພໍນຶກເຖິງພໍ່ແມ່ນ້ຳຕາກໍໄຫຼ ເພາະພວກເພິ່ນເອງກໍບໍ່ຍອມໃຈອ່ອນ.

"ຖ້າເອົາໄວ້ແລ້ວເຂົາບໍ່ມາຂໍ ບໍ່ມາແຕ່ງ ຖ້າເຂົາຖິ້ມເຂົາປະໄປເດຈະເຮັດແນວໃດ ຄຶດເບິ່ງແມພໍ່ແມ່ເພິ່ນທຸກຍາກສ່ຳໃດ ເພິ່ນອົດສົ້ມອົດຫວານກໍເພື່ອທ້ອນເງິນໄວ້ໃຫ້ໂຕຮຽນ ເພິ່ນກໍຫວັງເພິ່ງແຕ່ໂຕໃຫ້ໂຕມີວຽກດີໆເຮັດເບິ່ງໂຕເຮັດແມມັນເປັນບໍ ຄຶດເບິ່ງໃຫ້ດີໆ...!" ຄຳເວົ້າຂອງເອື້ອຍທີ່ໂທມາ

ຫາ ເຮັດໃຫ້ໂຫລະສັບຫຼຸດຈາກມືຂ້າພະເຈົ້າກັບບາດໃນຫົວຄິດເຫັນພາບສອງເຖົ້າທີ່ຕາກແດດຍອນຝົນ ກົ້ມໜ້າຄຸມເຮັດວຽກໜັກເພື່ອລ້ຽງດູຂ້າພະເຈົ້າຈົນເຕີບໃຫຍ່ ແລ້ວຂ້າພະເຈົ້າຊິຕອບແທນພວກເພິ່ນຈັ່ງຊີ້ບໍ! ແຮ່ງຄຶດກໍແຮ່ງສັບສົນ ຖ້າສະໝອງເປັນເຄື່ອງຈັກປານນີ້ຄົງຈະລະເບີດໄປແລ້ວ.

**"ຄວາມຄຶດກໍຄືນ້ຳ ຖ້າເຮົາກວນຫຼາຍນ້ຳກໍແຮ່ງຂຸ່ນ"** ຂ້າພະເຈົ້າຈຶ່ງຢຸດທຸກຄວາມຄຶດທີ່ສັບສົນລົງ ແລ້ວໂທຫາໝູ່ສະໜິດສອງຄົນ ເພື່ອປຶກສາຫາທາງອອກທີ່ດີທີ່ສຸດແຕ່ພວກເຂົາກໍເຫັນບໍ່ຕ່າງກັບພໍ່ແມ່ ແຮ່ງເພີ່ມຄວາມກົດດັນຂຶ້ນຫຼາຍກວ່າເກົ່າ.

ຖ້າວ່າດ້ວຍຄວາມຮັກແລະບຸນຄຸນຂອງພໍ່ແມ່ຂ້າພະເຈົ້າໃນຖານະລູກ ກໍບໍ່ຄວນເຮັດໃຫ້ພວກເພິ່ນຕ້ອງເປັນທຸກເຖິງພຽງນີ້ ແຕ່ຖ້າດ້ວຍໜ້າທີ່ ແລະຄວາມຮັບຜິດຊອບຂອງແມ່ ຂ້າພະເຈົ້າກໍຕ້ອງເບິ່ງແຍງ ແລະປົກປ້ອງລູກຈາກອັນຕະລາຍທັງປວງ ແຕ່ຕອນນີ້ຂ້າພະເຈົ້າບໍ່ສາມາດເຮັດໜ້າທີ່ຫຍັງໄດ້ເລີຍ.

"ຂ້ອຍຕ້ອງໄດ້ເລື່ອນການເດີນທາງອອກໄປອີກຍ້ອນເສັ້ນທາງເມືອນັ້ນຂົວຫັກ ຕ້ອງໄດ້ລໍຖ້າເຂົາສ້ອມແປງແລ້ວກ່ອນຈຶ່ງຈະໄປໄດ້!" ຄຳເວົ້າຂອງລາວເຮັດໃຫ້ໃຈຂ້າພະເຈົ້າຕົກວາບ ຫຼືຈະເປັນແນວຄວາມພໍ່ແມ່ເວົ້າແທ້ ລາວຈະບໍ່ມາຂໍບໍ່ມາຮັບຜິດຊອບຄືດັ່ງທີ່ລາວເວົ້າ, ແຮ່ງເຮັດໃຫ້ໃຈກະວົນກະວາຍຄຶດໄປຕ່າງໆນາໆ ນັ່ງບໍ່ຕິດຕັ່ງຄືຈັ່ງມີສົງຄາມແຫ່ງຄວາມຢ້ານຕ່າງໆກໍຜຸດຂຶ້ນຢູ່ເຕັມຫົວເກືອບຈະບໍ່ເປັນອັນ



ເຮັດຫຍັງເລີຍ ໃຈກໍເປັນກະວົນກະວາຍ ສະໝອງກໍເປັນວຸ່ນໆນ້ຳຕາກໍກຽມທ່າວ່າແຕ່ຊິໄຫຼ ຍາມນອນກໍບໍ່ເປັນອັນຫຼັບອັນຕື່ນຂອງກິນທີ່ວ່າແຊບຊ້ອຍກໍໄຮ້ລົດຊາດຈືດຊືດໄປໝົດຂ້າພະເຈົ້າຮູ້ດີ ຖ້າຍັງສືບຕໍ່ເປັນແບບນີ້ໄປອີກຄົງບໍ່ດີທັງຕໍ່ກັບຕົນເອງກໍຄືລູກ ການຕັດສິນໃຈຄັ້ງໃຫຍ່ທີ່ສຳຄັນຈຶ່ງຄວນທີ່ຈະເກີດໄດ້ແລ້ວ.

## ອາທິດທີ 8

ຂ້າພະເຈົ້າຮູ້ດີວ່າການຕັດສິນໃຈໃນເທື່ອນີ້ມັນສຳຄັນຫຼາຍ ທັງສ້າງຄວາມເຈັບປວດຕໍ່ຫົວໃຈຂອງພວກຂ້າພະເຈົ້າທັງສອງ ຄືມີເຫຼັກກ້າທີ່ເຜົາໄຟຈົນແດງແລ້ວມາສຽບແທງໃສ່ກະດອງໃຈພ້ອມເອົາເກືອທາຊ້ຳແຕ່ເຖິງຈະເຈັບປວດປານໃດ ເມື່ອໄດ້ຕັດສິນໃຈໄປແລ້ວກໍຕ້ອງຈຳໃຈເຮັດມັນລົງໄປແລະຕ້ອງຍອມຮັບກັບຜົນທີ່ຈະເກີດຂຶ້ນຫຼັງຈາກນີ້ໃຫ້ໄດ້.

ຕ້ອນຮັບເຊົ້າມື້ໃໝ່ດ້ວຍທ້ອງຟ້າທີ່ມືດຄຶ້ມໄຮ້ແສງຂອງຕາເວັນສ່ອງ ບໍ່ຕ່າງກັບສີໜ້າຂອງຂ້າພະເຈົ້າທີ່ເຕັມໄປດ້ວຍຄວາມໂສກເສົ້າ ທຸກລະທົມ, ຂ້າພະເຈົ້າຂັບລົດຈັກອອກໄປຢ່າງຊ້າໆ ລະຫວ່າງທາງນ້ຳຕາກໍຊຶມຍ້ອຍບໍ່ຂາດ ຈົນມາຮອດຈຸດໝາຍ ຂ້າພະເຈົ້າກ້າວຂາອອກຈາກລົດ ຕາທັງສອງຈື່ງເບິ່ງແຕ່ບໍ່ເຫັນສິ່ງໃດ ທັງທີ່ມີຜູ່ຄົນຕັ້ງມາກມາຍ ມືທັງສອງ



ສັ່ນໆ ຂາຄືຈັ່ງກ້າວບໍ່ໄປ, ແຕ່ເມື່ອມາຮອດແລ້ວຈັ່ງໃດກໍຕ້ອງເຂົ້າໄປ.

"ຖ້າຫາກໍໄດ້ເດືອນປາຍນີ້ກິນຢາກໍອອກ ແຕ່ຖ້າສອງເດືອນໄປແລ້ວບໍ່ຮັບຮອງວ່າຈະອອກຮ້ອຍເປີເຊັນ" ຫູຂ້າພະເຈົ້າຟັງແຕ່ບໍ່ໄດ້ຍິນສິ່ງທີ່ເຂົາເວົ້າ ໃນສະໝອງຕອນນັ້ນກຳລັງຄຶດລະເມີ ຢາກໃຫ້ຊີວິດຈິງ ເຮົາສາມາດກຳນົດອອກແບບໄດ້ຄືຈັ່ງລະຄອນ ທີ່ພໍຕາເວັນສ່ອງແສງລົງມາ ທ້ອງກໍໃຫຍ່ຈົນໃກ້ຈະເກີດ ພໍຕາເວັນຕົກຄວາມມືດຄືບຄານເຂົ້າມາ ລູກກໍເກີດແລ້ວ ແລະພໍແຕ່ແສງແດດສາຍລົມພັດຜ່ານລູກກໍໃຫຍ່ເປັນບ່າວເປັນສາວຢ່າງໄວວາ ແລ້ວຈາກນັ້ນຂ້າພະເຈົ້າກໍຈະໄດ້ຢູ່ກັບລູກຢ່າງມີຄວາມສຸກ.

ຖ້າເຮັດໄດ້ແນວນັ້ນແທ້ ຂ້າພະເຈົ້າຈະບໍ່ລໍຊ້າແມ່ນແຕ່ວິນາທີດຽວ ທີ່ຈະໜີ ໜີໄປໃຫ້ໄກໆ ໄກຈາກບັນຫາເຫຼົ່ານີ້ແລ້ວໄປຢູ່ກັບລູກພຽງສອງຄົນ ແຕ່ນີ້ຄືຊີວິດຈິງ ຊີວິດທີ່ຕ້ອງຕໍ່ສູ້ ຊີວິດທີ່ບໍ່ມີສິ່ງໃດໄດ້ມາໂດຍງ່າຍ ຂ້າພະເຈົ້າຈຶ່ງຕ້ອງຢູ່ກັບຄວາມຈິງ ຊີວິດຈິງໃຫ້ໄດ້ ແລະຕ້ອງກ້າປະເຊີນໜ້າກັບທຸກບັນຫາຢ່າງເຂັ້ມແຂງ.

ຂ້າພະເຈົ້າຕັດສິນໃຈຈະຊື້ຢາໄປກິນ ແຕ່ຄົນຂາຍບອກວ່າ:

"ມື້ນີ້ເປັນມື້ວັນສິນສິບຫ້າຄ່ຳບໍ່ຂາຍຢານີ້"(ຢ້ານບາບວ່າຕີ) ເຂົານັດມື້ໜ້າຈັ່ງມາໃໝ່ ສະແດງວ່າຂ້າພະເຈົ້າກັບບ້ານມືເປົ່າ ແຕ່ກໍດີ ເພາະຢ່າງໜ້ອຍລູກກໍໄດ້ຢູ່ກັບຂ້າພະເຈົ້າໄປອີກມື້ນຶ່ງ.



ເຊົ້າມື້ໃໝ່ຂ້າພະເຈົ້າກໍກັບໄປໃໝ່ ແຕ່ເຂົາຜັດບອກວ່າ "ຢາບໍ່ມີ ຂາຍໄປໝົດແລ້ວ" ຮື! ຂາຍໝົດແລ້ວ ຂາຍໝົດໄດ້ຈັ່ງໃດໃນເມື່ອວານນີ້ຍັງເຫັນມີຢູ່ຫຼາຍກັບຂ້າພະເຈົ້າບໍ່ຢາກຈະເຊື່ອ ເພາະນັ້ນໝາຍເຖິງຊີວິດເດັກນ້ອຍບໍລິສຸດຫຼາຍສິບຄົນໄດ້ຖືກທຳລາຍລົງ ດ້ວຍນ້ຳມືຂອງຄົນທີ່ຂຶ້ນຊື່ວ່າແມ່.

ແຕ່ເຖິງຢ່າງໃດຂ້າພະເຈົ້າກໍພໍໃຈໃນຄຳຕອບນັ້ນ ແລະກ່ອນຈະອອກຈາກຮ້ານນັ້ນ ເຂົາຍັງແນະນຳໃຫ້ໄປເບິ່ງອີກຮ້ານນຶ່ງ ຫຼືບໍ່ກໍໄປເອົາອອກເລີຍ. ແຕ່ຂ້າພະເຈົ້າບໍ່ສົນໃຈຟັງດອກ ຈະວ່າມັນແມ່ນເລື່ອງແປກ ຫຼືບັງເອີນຫຍັງກໍບໍ່ຮູ້ເພາະຮ້ານຂາຍຢາສອງສາມຮ້ານ ຢູ່ລະຫວ່າງທາງກັບນັ້ນປິດໝົດທຸກຮ້ານເລີຍ ຫຼືເຖິງຈະເປີດຂ້າພະເຈົ້າກໍຄົງບໍ່ລົງແວ່ດອກ, ສະຫຼຸບກໍຄືລູກຂອງຂ້າພະເຈົ້າຈະຕ້ອງໄດ້ມີໂອກາດມືນຕາມາເຫັນໜ້າພໍ່ແມ່ ເພາະຕໍ່ຈາກນີ້ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມລູກຈະຕ້ອງຢູ່ກັບຂ້າພະເຈົ້າ.

ດ້ວຍຄວາມດີໃຈຕອນນັ້ນບໍ່ວ່າເຫັນຫຍັງກໍຢາກໄປໝົດ ທັງໝາກໄມ້ ເຄື່ອງບຳລຸງຂ້າພະເຈົ້າຊື້ມາເພື່ອສະຫຼອງກັບລູກ ຄົງເພາະຄຶດໜັກອຸກອັ່ງຫຼາຍມື້ເຂົ້າປາກໍບໍ່ຢາກ ມາມື້ນີ້ຈຶ່ງໄດ້ກິນຊຸດໃຫຍ່ຄືກັບວ່າບໍ່ໄດ້ກິນຫຍັງມາດົນ.

3 ເດືອນ





4 ເດືອນແລ້ວເດີ້!



## III. ຄວາມກັງວົນ

### ອາທິດທີ 9

ຄົງບໍ່ມີໃຜທີ່ຈະເຊື່ອວ່າບໍ່ມີຢາຂາຍ ຫຼືຮ້ານຢາຈະປິດພ້ອມກັນໝົດ ແຕ່ມັນເປັນຄວາມຈິງ ແລ້ວຂ້າພະເຈົ້າກໍບໍ່ລໍຊ້າທີ່ຈະໂທແຈ້ງພໍ່ແມ່ ເພິ່ນເອງກໍຄົງບໍ່ເຊື່ອ ແຕ່ກໍເວົ້າຫຍັງບໍ່ໄດ້ແລ້ວ ເພາະຈັ່ງໃດຂ້າພະເຈົ້າກໍໄດ້ເຮັດຕາມຄວາມຕ້ອງການຂອງເພິ່ນແລ້ວ ເຖິງຈະບໍ່ສຳເລັດກໍຕາມ.

ບາດນີ້ເຖິງທີ ທີ່ຂ້າພະເຈົ້າຈະເລືອກໃນສິ່ງທີ່ໃຈຕ້ອງການແລ້ວ, ເຖິງແມ່ນເພິ່ນຢາກຈະຫ້າມ ແຕ່ກໍບໍ່ມີປະໂຫຍດຫຍັງແລ້ວ ເພາະເພິ່ນຮູ້ດີວ່າຂ້າພະເຈົ້າຄົງຮັກລູກບໍ່ຕ່າງຈາກທີ່ເພິ່ນຮັກຂ້າພະເຈົ້າ.

ເມື່ອຕັດສິນໃຈທີ່ຈະເອົາໄວ້ແລ້ວ ບໍ່ວ່າໃຜຈະເວົ້າຫຍັງ ຫຼືຈະເກີດຫຍັງຂຶ້ນກໍບອກກັບຕົວເອງວ່າຈະບໍ່ປ່ຽນໃຈຂ້າພະ-ເຈົ້າຕ້ອງເຂັ້ມແຂງ ຢືນຢັນໃນການຕັດສິນໃຈໃນເທື່ອນີ້ ເມື່ອພໍ່ແມ່ເຫັນວ່າຂ້າພະເຈົ້າບໍ່ຍອມຖອຍແລ້ວແທ້ໆ ເພິ່ນຈຶ່ງບໍ່ຫ້າມ ແລະກໍບອກໃຫ້ເຂົາມາຂໍໄວໆ ກ່ອນທີ່ທ້ອງຈະໃຫຍ່ຫຼາຍກວ່ານີ້.

ຄວາມດີໃຈຕື່ນເຕັ້ນກັບມາອີກຄັ້ງເພາະທຸກຢ່າງລົງໂຕກັນດີແລ້ວ ແຕ່ແຟນຍັງບໍ່ສາມາດມາໄດ້ ໃນໃຈກໍຍັງລັກກັງວົນຢູ່ເລັກນ້ອຍ ແຕ່ເພາະຄວາມເຊື່ອໃຈ ແລະຄວາມຮັກ



ທີ່ມີໃຫ້ ຈຶ່ງພໍເຮັດໃຫ້ຂ້າພະເຈົ້າໝັ້ນໃຈໄດ້ວ່າລາວຈະບໍ່ຕົວະແນ່ນອນ.

ແຕ່ກໍຍັງຫວັ່ນໃຈຢູ່ເລັກນ້ອຍ ໃນເມື່ອພໍ່ແມ່ບໍ່ເຫັນດີນຳແຕ່ຕົ້ນແນວນີ້ ແລ້ວເພິ່ນຊິຮັກຫຼານທີ່ກຳລັງຈະເກີດມານີ້ຫຼືບໍ່? ເພິ່ນຈະຮັກຈະໃຫ້ອະໄພຂ້າພະເຈົ້າໄດ້ ຫຼືບໍ່? ແມ່ນຢູ່ວ່າເຖິງລູກຈະເຮັດຜິດພາດສ່ຳໃດ ພໍ່ແມ່ກໍພ້ອມອະໄພໃຫ້ໄດ້ແຕ່ຂ້າພະເຈົ້າກໍຍັງບໍ່ກ້າສູ້ໜ້າເພິ່ນໄດ້ເຕັມທີ່ ບໍ່ກ້າທີ່ຈະແນມໜ້າເບິ່ງແວວຕາ ເພາະຢ້ານ ຢ້ານທີ່ຈະເຫັນຄວາມຜິດຫວັງອອກມາຈາກແວວຕາຄູ່ນັ້ນອີ່ຫຼີ.

ແຕ່ບໍ່ວ່າຜົນມັນຈະອອກມາໃນຮູບໃດ ເມື່ອໄດ້ເລືອກແລ້ວກໍຕ້ອງເດີນໃຫ້ສຸດທາງ ແຮ່ງໃກ້ຈະຮອດມື້ນັດໝາຍພໍ່ກໍໂທນຳເກືອບທຸກມື້ ເພາະຢ້ານວ່ານັດຈະເໜົ່າ ຢ້ານວ່າທີ່ລູກເຂີຍບໍ່ມາຕາມນັດ ເພາະຖ້າເປັນດັ່ງນັ້ນ ຂ້າພະເຈົ້າຄົງຕ້ອງໄດ້ອູ້ມລູກທ້ອງໃຫຍ່ໃຫ້ພວກເພິ່ນອັບອາຍແທ້ໆ ເພາະວັນເວລາກໍໄດ້ລ່ວງເລີຍມາດົນເຖິງທ້ອງຈະບໍ່ທັນໃຫຍ່ຫຼາຍແຕ່ອາຍຸເດືອນກໍຄົງບໍ່ໜ້ອຍກວ່າສອງເດືອນແລ້ວ.

### ອາທິດທີ 10

ເມື່ອຮອດມື້ທີ່ນັດໝາຍຂ້າພະເຈົ້າພ້ອມແຟນ ແລະຍາດພີ່ນ້ອງຂອງລາວກໍພາກັນເມື່ອບ້ານ ຂ້າພະເຈົ້າຄຶດໄປຕະຫຼອດທາງວ່າ ພໍ່ແມ່ຈະເຮັດສີໜ້າແນວໃດຈະມີຮອຍຍິ້ມໃຫ້ ຫຼືບໍ່? ເພິ່ນຍັງຈະເວົ້າລົມກັບຂ້າພະເຈົ້າຄືເກົ່າທີ່ຜ່ານມາ



ຫຼືບໍ່? ທັງຄຶດອຸກໃຈ ທັງເມົາລົດຮາກແຕກຮາກແຕນໄປສຸດທາງ ຄົງເພາະມີອາການແພ້ທ້ອງນຳແດ່ ຈົນໂຕປຽກແອດແລດ ໜ້າຕາຈືດເຫຼືອງ ຕາກໍເກືອບວ່າຈະມືນບໍ່ຂຶ້ນ.

ແລ້ວລົດກໍເຄື່ອນມາຈອດຢູ່ໜ້າເຮືອນມີຜູ້ຄົນຈຳນວນບໍ່ໜ້ອຍທີ່ພວມນັ່ງລົມກັນຢູ່ຢ່າງມ່ວນຊື່ນ, ຂ້າພະເຈົ້າກ້າວຂາລົງຈາກລົດ ສາຍຕາແນມຫາພໍ່ກັບແມ່ດ້ວຍໃຈສັ່ນແກມກັງວົນ,ບໍ່ດົນພວກເພິ່ນກໍຍ່າງອອກມາແຕ່ໃນເຮືອນພ້ອມກັບຄຳເວົ້າທີ່ວ່າ:

“ພາກັນກິນເຂົ້າລະຫວາ ພໍ່ເຮັດລາບໄວ້ຖ້າ...” ເບິ່ງຈາກສີໜ້າ ດວງຕາຂອງເພິ່ນທັງສອງ ຂ້າພະເຈົ້າບໍ່ຄຶດເລີຍວ່າຈະພໍ້ແວວຕາແບບນີ້ ແວວຕາທີ່ມີແຕ່ຄວາມຍິນດີ ແລະເປັນຫ່ວງເປັນໃຍຕໍ່ລູກ.

ຍ້ອນອາການເມົາລົດຍັງບໍ່ເຊົາ ຕື່ມໃສ່ໄດ້ກິ່ນຂົວຂົ້ວແກງຕ່າງໆໃນເຮືອນຄົວລອຍລົມມາ ຄືວ່າເໝັນວ່າຂົວເອົາແທ້ເອົາວ່າຈຶ່ງຟ້າວແລ່ນເຂົ້າຫ້ອງນ້ຳທັນທີ ເພາະຖ້າຊ້າອີກໜ້ອຍດຽວຢ້ານໄດ້ຂາຍເຂົ້າປຽກຢູ່ຫັ້ນແທ້ໆ ແລະຄົນທີ່ພວມກິນສົ້ມຊຸມກັນຢູ່ຫັ້ນກໍຄົງຈະກືນບໍ່ລົງຄໍ.

ແຕ່ພໍອອກຈາກຫ້ອງນ້ຳມາ ກໍເຫັນແມ່ຢືນຖ້າຢູ່ແລ້ວພ້ອມກັບຄຳຖາມທີ່ຂ້າພະເຈົ້າເກືອບກັ້ນນ້ຳຕາໄວ້ບໍ່ຢູ່...

“ເປັນຈັ່ງໃດ ຍັງເມື່ອຍຢູ່ບໍ? ຮາກຫຼາຍບໍ? ວິນຫົວ ຫຼືວ່າເປັນແນວໃດແດ່? ແມ່ຜ່ານ້ຳໝາກພ້າວໄວ້ຢູ່ຕູ້ເຢັນໄປກິນແມ ເພື່ອຊິມີແຮງຂຶ້ນ!” ຂ້າພະເຈົ້າຍິ້ມພ້ອມຕາກໍເຫຼືອດໄປເຫັນໝາກພ້າວເປັນແຂງຖືກຕັດລົງມາກອງໄວ້.

ສິ່ງທີ່ຂ້າພະເຈົ້າກັງວົນມາຕະຫຼອດ ສຸດທ້າຍກໍ່ບໍ່ມີຫຍັງ ຕອນນີ້ເລີ່ມເຂົ້າໃຈແລ້ວວ່າ ຄວາມຮັກ ຄວາມຫ່ວງໃຍທີ່ພໍ່ແມ່ມີຕໍ່ລູກນັ້ນຍິ່ງໃຫຍ່ແລະກໍໄຮ້ພົມແດນ **"ຄົນເຮົາຈະພົບຮັກແທ້ກໍໃນມື້ທີ່ໄດ້ເປັນພໍ່ແມ່ຄົນນີ້ເອງ"** ແລະຕອນນີ້ຂ້າພະເຈົ້າກໍໄດ້ພົບກັບມັນແລ້ວ ຮັກແທ້ທີ່ແສນບໍລິສຸດ, ຮັກທີ່ມີແຕ່ຢາກໃຫ້ສິ່ງທີ່ດີທີ່ສຸດຕໍ່ເຂົາ, ຮັກທີ່ປາດຖະໜາເຫັນພຽງຮອຍຍິ້ມຂອງເຂົາ, ຮັກທີ່ແມ່ນບໍ່ເຫັນໜ້າກໍສຸກໃຈເມື່ອນຶກເຖິງ ຮັກທີ່ບໍ່ຈຳເປັນຕ້ອງເວົ້າ ແຕ່ສຽງກໍດັງກ້ອງຢູ່ໃນໃຈບໍ່ເຄີຍມິດ ຮັກທີ່ພ້ອມຈະສະຫຼະໄດ້ທຸກຢ່າງແມ່ນແຕ່ຄວາມສຸກຫຼືຊີວິດຂອງຕົນ, ຮັກທີ່ມີແຕ່ຈະເພີ່ມຂຶ້ນໆ ເລື້ອຍໆບໍ່ມີມື້ສິ້ນສຸດເປັນຮັກແທ້ທີ່ມີພຽງພໍ່ ແລະແມ່ທີ່ມອບໃຫ້ລູກໄດ້.

ແຕ່ໃນຄວາມຄຶດກັບກັນ ຂ້າພະເຈົ້າກໍຍັງຮູ້ສຶກຜິດທີ່ເຮັດໃຫ້ພວກເພິ່ນຜິດຫວັງຖ້າທຸກຢ່າງມັນຄ່ອຍເປັນຄ່ອຍໄປກໍແຮ່ງຈະມີຄວາມສຸກຫຼາຍກວ່ານີ້, ແຕ່ກໍເອົາເທາະ! ຜົນມັນອອກມາແບບນີ້ກໍດີທີ່ສຸດແລ້ວ.

ບັນຍາກາດພາຍໃນງານ ຄຶກຄື້ນໄປດ້ວຍສຽງຫົວ ແລະຄວາມສຸກ ຄືຈັ່ງວ່າບໍ່ໄດ້ມີບັນຫາຫຍັງເກີດຂຶ້ນມາກ່ອນ ແຕ່ຂ້າພະເຈົ້າຍັງມີອາການເມື່ອຍໆວິນໆຢູ່ເລັກນ້ອຍ ບາງເທື່ອກໍຍັງຮູ້ສຶກປວດຮາກ ແມ່ຈຶ່ງບອກໃຫ້ນອນພັກຢູ່ ບໍ່ຖ້າຊ່ອຍເຮັດຫຍັງກໍໄດ້ ເພາະມີຫຼາຍຄົນເຮັດຢູ່ແລ້ວ.

ຕະຫຼອດມື້ແມ່ມີແຕ່ຫາແນວກິນມາໃຫ້ກິນ ບໍ່ຈັກນ້ຳໝາກພ້າວ, ໝາກກ້ວຍນ້ຳ, ຂະໜົມນົມເນີຍຕ່າງໆ ຄືຢ້ານຫຼານເພິ່ນບໍ່ແຂງແຮງ ນ້ຳຕາແຫ່ງຄວາມຍິນດີເປັນແນວໃດ



ມື້ນີ້ຂ້າພະເຈົ້າໄດ້ສຳຜັດກັບຄວາມຮູ້ສຶກນັ້ນແລ້ວ ຍິ່ງກວ່າຄວາມຍິນດີ ແຕ່ມັນເປັນທີ່ສຸດຂອງຄວາມຮູ້ສຶກທີ່ພຽງຄຳວ່າຂອບໃຈຄືງໃຊ້ຕອບແທນບໍ່ພໍ.

ເກືອບ8ໂມງແລງ ງານສູ່ຂໍກໍເລີ່ມຂຶ້ນ ເຖົ້າແກ່ລຸງຕາທັງສອງຝ່າຍນັ່ງຊ້ອງໜ້າກັນພ້ອມຂັນໝາກຂັນພູ ເຫຼົ້າແກ້ວກອກຢາ ແລະເງິນຄຳກຳແກ້ວທີ່ທາງຝ່າຍຊາຍກະກຽມມາເພື່ອເປັນຄ່ານ້ຳຕູ້ນ້ຳນົມ (ຄ່າດອງ) ພ້ອມການຈັດຕັ້ງບ້ານທີ່ກຽມເອກະສານມາລົງບັນທຶກເປັນລາຍລັກອັກສອນ.

"ຂ້ອຍຈະຮັກ ຊື່ສັດ ແລະດູແລເຈົ້າກັບລູກໃຫ້ດີທີ່ສຸດຈົນລົມຫາຍໃຈສຸດທ້າຍ"ຄຳສັນຍາທີ່ອອກຈາກປາກຊາຍຜູ້ທີ່ເປັນທີ່ຮັກເຮັດຂ້າພະເຈົ້າຍິ້ມບໍ່ຫຸບ. ພິທີດຳເນີນໄປປະມານເຄິ່ງຊົ່ວໂມງກໍສັ່ງສຸດ ພິທີການຈົບລົງດ້ວຍດີ ກ່ອນງານຈະເລີກລາກໍມີພາເຂົ້າສາມັກຄີກິນຮ່ວມກັນຢ່າງມ່ວນຊື່ນ.

## ອາທິດທີ 11

ເມື່ອບັນຫາທຸກຢ່າງຈົບລົງດ້ວຍດີແລ້ວ ກັບມາເຮັດວຽກກໍຄືວ່າມີຄວາມສຸກ ກິນອີ່ມນອນຫຼັບສະບາຍ ເພາະບໍ່ມີບັນຫາຫຍັງໃຫ້ຄຶດກັງວົນ ຈະມີກໍແຕ່ເລື່ອງປັບໂຕໂດຍສະເພາະເລື່ອງອາຫານການກິນຕ້ອງໄດ້ລະມັດລະວັງເປັນພິເສດຍັງໄຄແຕ່ວ່າບໍ່ແພ້ອາຫານຄືບາງຄົນທີ່ໄດ້ກິ່ນກະທຽມກໍຮາກເໝັນຫັ້ນເໝັນນີ້ ສຳລັບຂ້າພະເຈົ້າແມ່ນກິນໄດ້ຕາມປົກກະ



ຕິ ບໍ່ແມ່ນປົກກະຕິ ແຕ່ກິນຫລາຍກ່ອນປົກກະຕິ.

ສ່ວນການໄປການມາກໍຕ້ອງໄດ້ລະວັງ ເພາະທ້ອງຫາກໍໄດ້ແຕ່ສອງສາມເດືອນ ຖືຍັງຢູ່ໃນຊ່ວງທີ່ອັນຕະລາຍຢູ່ເພາະເຫັນຫຼາຍຄົນທີ່ມັກຫຼຸລູກໃນຊ່ວງນີ້ ເຄື່ອງໜັກຂອງໜາກໍແມ່ນບໍ່ຍົກບໍ່ຍໍເພາະຢ້ານແຕ່ລູກຊິໄດ້ຮັບອັນຕະລາຍ ເຖິງແມ່ນວຽກທີ່ເຮັດຈະບໍ່ໄດ້ໃຊ້ແຮງປານໃດກໍຕາມ.

ທັງພໍ່ແມ່ ແລະແຟນກໍໂທຫາຖາມຂ່າວເກືອບທຸກມື້ໂດຍສະເພາະແມ່ ທີ່ເປັນຫ່ວງນຳເລື່ອງອາຫານການກິນຂອງເຜັດຂອງເຄັມກໍໃຫ້ຫຼຸດຜ່ອນລົງ ໃຫ້ກິນໝາກໄມ້ ນົມ ແລະຂອງບຳລຸງ ແລ້ວກໍພັກຜ່ອນໃຫ້ຫຼາຍໆ ຄືຈະຄືເພິ່ນວ່າຫັ້ນແຫຼະເນາະ **"ຮັກລູກສ່ຳໃດ ຮັກຫຼານຫຼາຍກວ່າ"**.

ໃນຂະນະທີ່ແຟນບອກວ່າ ບໍ່ຖ້າບຳລຸງຫຼາຍຈົນເກີນໄປ ລູກຊິໂຕໃຫຍ່ໂພດ ມັນຊິຍາກບາດຍາມເກີດ ໄວ້ເກີດມາແລ້ວຈັ່ງບຳລຸງລ້ຽງເອົາ ແຕ່ດ້ວຍຄວາມຫ່ວງ ແລະກັງວົນຢ້ານລູກຈະບໍ່ແຂງແຮງ ຂ້າພະເຈົ້າກໍກິນຢ່າງເຕັມທີ່ ຕາມດີໝາກສົ້ມ ພຽງແຕ່ຫຼຽວເຫັນໝາກຫຸ່ງຢູ່ຕົ້ນນ້ຳລາຍກໍໄຫຼຖ້າແລ້ວ ຫຼືພຽງແຕ່ເຫັນໝາກສົ້ມຢູ່ໃນໂທລະທັດ ຫຼືມືຖືກໍແມ່ນກືນນ້ຳລາຍນຳວັບໆ ຖ້າບໍ່ໄດ້ກິນຄືໃຈຊິຂາດລົງກັບບ່ອນນີ້ແຫຼະ ຂໍແຕ່ວ່າຄຶດຢາກຫຍັງຕ້ອງໄດ້ໄປຊອກກິນໃຫ້ໄດ້ ຄືງເພາະຢາກແຕ່ສົ້ມ ເຂົ້າປາເລີຍບໍ່ຄຶດຢາກປານໃດ ແຕ່ກໍຕ້ອງໄດ້ກິນຕາມປົກກະຕິ.



## ອາທິດທີ 12

ອາກາດທີ່ຮ້ອນອົບເອົ້າ ແຕ່ຜູ້ຄົນຄຶກຄື້ນກັນຢ່າງມ່ວນຊື່ນ ໃນເທດສະການງານບຸນປີໃໝ່ລາວທີ່ປວງຊົນຊາວລາວພາກັນປະຕິບັດມາຫຼາຍຟ້າຫລ້າປີ ເຊິ່ງຈະຢູ່ລະຫວ່າງກາງເດືອນເມສາຂອງທຸກໆປີຖືໄດ້ວ່າເປັນງານບຸນປະຈຳຊາດທີ່ທຸກຊົນເຜົ່າຕ່າງໆກໍພາກັນຫຼິ້ນນ້ຳຫົດສົງກັນທຸກທົ່ວໜ້າ.

ບາງຄົນກໍເຂົ້າວັດໃສ່ບາດຢາດນ້ຳຫົດສົງພະພຸດທະຮູບ ບາງກໍເລາະຫົດສົງຜູ້ເຖົ້າຜູ້ແກ່ຢູ່ໃນບ້ານ ລູກເຕົ້າເຮັດສົມມາພໍ່ແມ່ ບາງເຮືອນກໍເຮັດບາສີສູ່ຂວັນເອົາໂຊກເອົາໄຊ. ແຕ່ສຳລັບຂ້າພະເຈົ້າປີນີ້ຕ່າງທຸກໆປີ ເພາະທຸກປີຂ້າພະເຈົ້າຈະໄປວັດໃສ່ບາດ ແລ້ວກໍຍັງໄດ້ເລາະຫົດສົງຜູ້ເຖົ້າຢູ່ຕາມບ້ານໃຫ້ເພິ່ນໃຫ້ພອນ.

ແຕ່ປີນີ້ຈະໄດ້ເຮັດກໍແຕ່ສົມມາພໍ່ແມ່ທໍ່ນັ້ນ ເພາະຂ້າພະເຈົ້າມີແຕ່ນອນ ຄືຈັ່ງວ່າອຶດຫຼັບຫິວນອນມາເປັນເດືອນໆ ໝູ່ຄູ່ຍາດພີ່ນ້ອງຕ່າງໆກໍພາກັນມາຫຼິ້ນນຳຢູ່ເຮືອນກິນເຂົ້າຊຸມກັນຢ່າງເຮຮາແຕ່ຂ້າພະເຈົ້າຜັດນອນເສີຍບໍ່ມີຄວາມວ່າຢາກຫຼິ້ນ ຢາກກິນຫຍັງນຳພວກເພິ່ນເລີຍແມ່ນແຕ່ໜ້ອຍເລື່ອງເຫຼົ້າຢາປາແປ້ງແຮ່ງບໍ່ໃກ້ເລີຍ ແມ່ນແຕ່ນ້ຳອັດລົມກໍຍັງງົດຈະກິນກໍແຕ່ນ້ຳດື່ມທຳມະດາ ຫຼືບໍ່ກໍນ້ຳໝາກໄມ້ທໍ່ນັ້ນ.

ຊ່ວງນີ້ຮູ້ສຶກວ່າມີແຕ່ຢາກນອນຢ່າງດຽວ ຕື່ນຂຶ້ນມາ

5-6 ໂມງ ອາບນ້ຳກິນເຂົ້າແລ້ວບໍ່ພໍຊົ່ວໂມງສອງຊົ່ວໂມງກໍແມ່ນຫາວງາບໆຕາມືນບໍ່ຂຶ້ນຈຳເປັນກໍໄດ້ນອນອີກ ຕື່ນຂຶ້ນມາກໍພໍດີເປັນຕາກິນເຂົ້າສວາຍ ຫຼັງຈາກກິນເຂົ້າສວາຍແລ້ວບ່າຍໆສຽງນົກສຽງຈັກຈັ່ນຮ້ອງສ່ຳກັບວ່າມັນຮ້ອງເພັງກ່ອມແຮ່ງນອນຫຼັບດີຄຶດວ່າຕອນສວາຍນອນຫຼາຍປານນັ້ນແລ້ວກາງຄືນຄົງຈະບໍ່ຢາກນອນ ແຕ່ບໍ່ເລີຍແຮ່ງຢາກນອນແຕ່ 7 ໂມງແລງ. ສະຫຼຸບເລີຍວ່າຊ່ວງທິດນີ້ຂ້າພະເຈົ້າມີແຕ່ກິນລະນອນຈະເຮັດວຽກຫຍັງກໍຄືວ່າບໍ່ມີເຫື່ອບໍ່ມີແຮງແຕ່ຍັງໄຄວ່າບໍ່ວິນຫົວປວດຮາກ ເຂົ້າປາອາຫານກໍກິນໄດ້ປົກກະຕິ ໝາກສົ້ມໝາກແສວຜັດບໍ່ຄຶດຢາກປານໃດຫຼືເພາະຖ້າກິນສົ້ມແລ້ວຄົງຈະບໍ່ຢາກນອນບໍ.!

ນອກຈາກຢາກນອນແລ້ວຊ່ວງນີ້ຍັງຄຶດຢາກແຕ່ຂອງຫວານໆເຢັນໆຕາມດີກະແລັມ ເຖິງຮ້ານຂາຍຈະຢູ່ໄກແຕ່ແຟນກໍອອກໄປຫາຊື້ມາໃຫ້ກິນ ແຕ່ລະຫວ່າງທາງກໍຖືກລັດທົດນ້ຳຈິນປຽກອອດລອດ ກະແລັມກໍເກືອບວ່າລະລາຍຈົນໝົດຈັ່ງມາຮອດເຮືອນ ແຕ່ລົດຊາດມັນກໍຍັງແຊບ ແຊບທີ່ສຸດເທົ່າທີ່ເຄີຍກິນມາເລີຍ.!







ໄລຍະ...

"ປຸ່ມແປ"



## IV. ຄວາມຢາກ

### ອາທິດທີ 13

ງານລ້ຽງຍ່ອມມີມື້ເລີກລາ ຫຼັງຈາກບຸນສົງການແລ້ວຕ່າງກໍພາກັນກັບໄປເຮັດວຽກໃຜລາວຕາມປົກກະຕິ ແລະກໍເຖິງເວລາສົມຄວນແລ້ວທີ່ຈະໄປຝາກທ້ອງ ໃນມື້ນັ້ນຂ້າພະເຈົ້າຕື່ນແຕ່ເຊົ້າເພື່ອກຽມໄປໂຮງໝໍຕັ້ງໃຈໄປແຕ່ເຊົ້າຈັ່ງຊິບໍ່ມີຄົນຫຼາຍ ແຕ່ພໍໄປຮອດກໍເຫັນຄົນລໍຖ້າຢູ່ເຕັມແລ້ວ ຈຳເປັນຕ້ອງໄດ້ລໍຖ້າຄິວຢູ່ເປັນຊົ່ວໂມງຈຶ່ງໄດ້ເຂົ້າກວດ.

ຄົງເພາະທ້ອງທົວສາວແດ່ ຈຶ່ງບໍ່ໃຫຍ່ຫຼາຍເກືອບວ່າບໍ່ເຫັນທ້ອງເລີຍກະວ່າໄດ້ ຖ້າບໍ່ບອກວ່າມີລູກກໍຄົງບໍ່ມີໃຜຮູ້ການຝາກທ້ອງເທື່ອທຳອິດຄຶດວ່າຄົງຈະບໍ່ມີບັນຫາຫຍັງແຕ່ມື້ທີ່ໄປນັ້ນທ່ານໝໍໃຫຍ່ຫຼາຍຄົນເພິ່ນຄາປະຊຸມ ໝໍທີ່ຮັບໜ້າທີ່ຢູ່ຫັ້ນຈຶ່ງບອກໃຫ້ຂ້າພະເຈົ້າໄປເອໂກເບິ່ງຢູ່ຄລີນິກ ຍ້ອນທ້ອງນ້ອຍຫຼາຍ ເພິ່ນຈຶ່ງຢາກໃຫ້ໄປກວດເບິ່ງວ່າລູກແຂງແຮງສົມບູນບໍ່.

ນະຕອນນັ້ນຄວາມກັງວົນກໍ່ເກີດຂຶ້ນອີກຄັ້ງ ຫົວໃຈເປັນວຸ່ນໆນັ່ງບໍ່ຕິດຕັ່ງສະໝອງກໍຮັບໜ້າທີ່ຄຶດໄປຕ່າງໆນາໆຢ້ານຈະເປັນຄືໝູ່ທີ່ລາວຖືພາລູກຜູ່ທຳອິດ ທ້ອງກໍນ້ອຍໆແລ້ວສຸດທ້າຍລາວກໍເສຍລູກໄປອີ່ຫຼີ ແຕ່ຂ້າພະເຈົ້າກໍພະຍາຍາມຄຶດໃນແງ່ທາງທີ່ດີໄວ້ ພໍທ່ານໝໍຈັດຢາບຳລຸງໃຫ້ແລ້ວກໍຟ້າວ



ອອກໄປຄລີນິກທັນທີ ດ້ວຍຄວາມຕື່ນເຕັ້ນ ແລະກັງວົນ.

ຢູ່ຄລີນິກພາຍໃນຫ້ອງເອໂກ ມີພຽງຕຽງໃຫ້ນອນແລະເຄື່ອງອຸປະກອນຄ້າຍໂທລະທັດນ້ອຍວາງຢູ່ຂ້າງຕຽງທ່ານໝໍບອກໃຫ້ຂ້າພະເຈົ້ານອນລົງ ແລ້ວກໍບີບນ້ຳຢາໃສໆລົງໃສ່ທ້ອງ ແລ້ວກໍເອົາອຸປະກອນຄ້າຍຄືໄຟສາຍຈໍ້າລົງໃສ່ຍ້າຍໄປມາ ແລ້ວກໍມີຮູບພາບອອກໃຫ້ເຫັນຢູ່ໜ້າຈໍ ແຕ່ຂ້າພະ-ເຈົ້າເບິ່ງບໍ່ອອກດອກວ່າອັນໃດເປັນອັນໃດ ຍ້ອນມັນເປັນພາບຂາວດຳເບິ່ງຈັ່ງໃດກໍຄືກັນໝົດ ໃນຂະນະທີ່ກວດໃຈກໍເຕັ້ນຕຶກໆມືທັງສອງຂ້າງກຳກຳປັ້ນໄວ້ຢ່າງແໜ້ນ ຈົນຮູ້ສຶກໄດ້ເຖິງຄວາມປຽກຊຸ່ມຂອງນ້ຳເຫື່ອທີ່ອອກໃນມື.

ເວລາຜ່ານໄປບໍ່ພໍເທົ່າໃດນາທີ ທ່ານໝໍກໍເວົ້າຂຶ້ນ:

"ເປັນຜູ່ຊາຍເດີ!"

"ຫື!" ຂ້າພະເຈົ້າບໍ່ແນ່ໃຈທີ່ທ່ານໝໍເວົ້າ ເພາະບໍ່ຄຶດວ່າຈະຮູ້ເພດແລ້ວ ຈຶ່ງຖາມໝໍຄືນວ່າ:

"ເປັນຊາຍຊັ້ນຫວາຄືຮູ້ໄວແທ້! ຄືຫາກໍໄດ້ຈັກເດືອນນຶ່ງ? ແລ້ວແຂງແຮງດີບໍ່?"

"ຮູ້ແລ້ວນີ້ເດ ຊິໄດ້ 14 ອາທິດແລ້ວ ຜູ່ບາງຄົນໄດ້ 12 ອາທິດກໍຮູ້ແລ້ວ ແຕ່ບາງຄົນ 16, 17 ຫຼື20 ອາທິດແລ້ວກໍຍັງບໍ່ຮູ້ກໍມີ ຂຶ້ນກັບທ່າທີ່ລູກຢູ່ນຳ" ທ່ານໝໍເວົ້າພ້ອມຊີ້ມືໃສ່ໜ້າຈໍໃຫ້ເບິ່ງ ແຕ່ກໍເບິ່ງບໍ່ອອກດອກ.

"ກໍແຂງແຮງດີ ແຕ່ຢາກໂຕນ້ອຍໜ້ອຍນຶ່ງ ໝໍຊິເອົາຢາບຳລຸງໃຫ້ກິນເພີ່ມ ບໍ່ມີບັນຫາຫຍັງດອກ ບໍ່ຕ້ອງກັງວົນເດີເດັກນ້ອຍທຳອິດກໍໂຕນ້ອຍແນວນີ້ລະ". ທ່ານໝໍເວົ້າແລ້ວກໍ

ວາງເຄື່ອງກວດລົງ ກົດເອົາຮູບພາບຈາກການເອໂກອອກມາຖືວ່າແລ້ວໆ.

ຂ້າພະເຈົ້າບໍ່ອາດຈະເກັບຂ່າວນີ້ໄວ້ຄົນດຽວໄດ້ ຄົນທຳອິດທີ່ໂທບອກກໍຄືແມ່ ລາວຕ່າງກໍດີໃຈທີ່ຈະໄດ້ຫຼານຊາຍ ລາວແຮ່ງບອກໃຫ້ກິນອາຫານບຳລຸງຫຼາຍໆ ເພື່ອໃຫ້ລູກໂຕໃຫຍ່ແຂງແຮງເພາະລາວເອງກໍກັງວົນບໍ່ໜ້ອຍທີ່ຮູ້ວ່າຫຼານໂຕນ້ອຍ ສ່ວນແຟນກໍດີໃຈບໍ່ຕ່າງກັນເພາະໃຈກໍຢາກໄດ້ລູກຊາຍຢູ່ແລ້ວ.

## ອາທິດທີ 14

ເຖິງແມ່ນທ່ານໝໍຈະບອກບໍ່ໃຫ້ກັງວົນເລື່ອງລູກໂຕນ້ອຍ ແລະເຖິງແມ່ນຈະໄດ້ຢາມາກິນແລ້ວ ແຕ່ໃນໃຈມັນກໍຍັງໜີບໍ່ພົ້ນທີ່ຈະບໍ່ກັງວົນ ເພາະທ້ອງ3-4ເດືອນແລ້ວແຕ່ເກືອບວ່າບໍ່ໃຫຍ່ຂຶ້ນເລີຍຈາກຕອນທີ່ບໍ່ທັນມີລູກກໍເລີຍຄິດຢ້ານວ່າລູກຊິບໍ່ແຂງແຮງ ຂ້າພະເຈົ້າຈຶ່ງກິນທຸກຢ່າງທີ່ຄິດຢາກ ແລະອາຫານບຳລຸງລູກຫຼາຍແນວກໍຊື້ມາກິນ ບໍ່ຈັກນ້ຳນົມ ໝາກໄມ້ອາຫານເສີມຕ່າງໆ.

ຄືງດ້ວຍຕົນເອງບໍ່ໄດ້ຢູ່ນຳພໍ່ແມ່ແດ່ ແຟນກໍຢູ່ຄົນລະບ່ອນ ຈຶ່ງເຮັດໃຫ້ກັງວົນຫຼາຍຢ້ານວ່າລູກຊິເປັນຈັ່ງຊັ້ນຈັ່ງຊີ້ ຄິດໄປຫັ້ນມານີ້ສາລະພັດຢ່າງ ແຮ່ງຄົນທີ່ເຮັດວຽກນຳກັນມັກເວົ້າຢອກເລື້ອຍໆ "ລະວັງແຟນໄປມີກິກຢູ່ພຸ້ນເດີ! ຢູ່ໄກກັນດົນໆຈັ່ງມາພໍ້ກັນເທື່ອນຶ່ງນ່າ" ໄດ້ຍິນແນວນັ້ນຄວາມລະແວງ



ກໍຊັດເຂົ້າມາຫາທັນທີ.

ຜູ່ຊາຍເມື່ອຍາມຢູ່ໄກແຟນຊິໝັ້ນຄົງໄດ້ພຽງໃດລາວຊິບໍ່ຖິ້ມຕົນເອງກັບລູກໄປບໍ? ແລ້ວຖ້າລາວບໍ່ກັບມາເດຊິເຮັດຈັ່ງໃດ? ຖ້າລາວຫາກແບ່ງໃຈໃຫ້ຍິງອື່ນຊິຍອມຮັບໄດ້ແນວໃດ? ຄິດໄປຄິດມານ້ຳຕາກໍໄຫຼລົງເອົາຊື່ໆ ຄວາມຮູ້ສຶກຄວາມຄິດໃນຊ່ວງນັ້ນຜັນປ່ຽນໄປຕະຫຼອດ ມັກຄິດເອງ ຕັດສິນເອງແລ້ວກໍໄຫ້ເອງໂດຍບໍ່ກ່ຽວກັບເຫດແລະຜົນໃດໆ, ຖ້າມື້ໃດບໍ່ໄດ້ລົມກັນ ກໍແຮ່ງຄິດໄປໄກຢ້ານວ່າເຂົາຊິໝົດຮັກຕົນເອງ.

ຕາມດີຍາມກາງຄືນທີ່ງຽບສະຫງັດ ຄວາມຄິດແຮ່ງແລ່ນໄປໄກ ເຮັດໃຫ້ນອນບໍ່ຄ່ອຍຫຼັບ ຄິດຢາກເຫັນໜ້າກໍໄດ້ເບິ່ງພຽງຮູບຖ່າຍ ຢາກຍິນສຽງກໍຕ້ອງຜ່ານທາງໂທລະສັບ ຢາກເວົ້າຢາກລົມຢາກຢອກໄຍກັນຫຼິ້ນຢາກເຫັນຮອຍຍິ້ມກໍໄດ້ແຕ່ຄິດເຖິງຊ່ວງເວລາເກົ່າໆທີ່ຜ່ານມາ ຕອນນັ້ນຂ້າພະເຈົ້າບໍ່ຕ່າງຫຍັງກັບຄົນບ້າເລີຍ ທີ່ນັ່ງເຮັດວຽກຢູ່ດີໆບາງເທື່ອນ້ຳຕາກໍຄ່ອຍໆໄຫຼອອກມາ, ຍາມນອນມືກ່າຍໜ້າຜາກມືນຕາຄ້າງສະໝອງກໍລ່ອງລອຍໄປໄກແສນໄກ. ແຕ່ຍັງໄຄທີ່ພໍ່ແມ່ໂທຫາເກືອບວ່າທຸກມື້ ເມື່ອໄດ້ລົມກັບເພິ່ນແລ້ວກໍຮູ້ສຶກວ່າຕົນເອງບໍ່ໂດດດ່ຽວ.

ລະຫວ່າງຄວາມອຸກອັ່ງ ກໍໄດ້ມີສິ່ງດີໆທີ່ເຮັດໃຫ້ຂ້າພະເຈົ້າຕື່ນເຕັ້ນທັງດີໃຈທີ່ສຸດ ຈື່ໄດ້ວ່າມື້ນັ້ນແມ່ນວັນທີ 15 ພຶດສະພາ 2017 ໃນຕອນບ່າຍທີ່ພວມນັ່ງກິນໝາກແຕງຢູ່ນັ້ນ ກໍສຳຜັດໄດ້ເຖິງຄວາມເໜັງຕີງທີ່ຢູ່ພາຍໃນທ້ອງເໝືອນດັ່ງມີຕີນນ້ອຍໆກຳລັງຖີບຕຸບໆຢູ່ ສຳຜັດເທື່ອທຳອິດເຮັດໃຫ້



ຂ້າພະເຈົ້າຢຸດຊິ້ງໄປຊົ່ວຂະນະ ມືລູບທ້ອງຄ່ອຍໆ ທັງເຜີຍິ້ມອອກມາແບບບໍ່ຮູ້ຕົວ ດວງຕາທັງສອງມີນ້ຳໃສໆໂອບຫຸ້ມຢູ່ ຈົນຄົນທີ່ນັ່ງຫຼິ້ນຢູ່ນຳກັນແປກໃຈຈຶ່ງອົດຖາມບໍ່ໄດ້ຂ້າພະເຈົ້າກໍຕອບໄປດ້ວຍຄວາມດີໃຈວ່າ: "**ລູກຂ້ອຍເລີ່ມເໜັງແລ້ວ!**".

## ອາທິດທີ 15

ຖ້າມື້ໄປກວດນັ້ນທ່ານໝໍວ່າຊິໄດ້14ອາທິດມາຮອດທິດນີ້ກໍຄືງຈະໄດ້15ອາທິດແລ້ວທີ່ລູກຢູ່ໃນທ້ອງ15ອາທິດທີ່ເຮົາມີກັນແລະກັນ, ຊ່ວງອາທິດນີ້ຮູ້ສຶກວ່າຢາກກິນທັງເຂົ້າທັງສົ້ມກິນທໍ່ໃດກໍຄືວ່າອີ່ມບໍ່ເປັນ ເຫັນໝາກຂາມຢູ່ປາຍຍອດກໍຍັງຫາວິທີເອົາລົງມາກິນໃຫ້ໄດ້ ຖ້າຄືແຕ່ກ່ອນກໍຄືງແຕ່ງແຈ່ວຂຶ້ນໄປງອຍຢູ່ງ່າກິນແລ້ວ ແຕ່ດຽວນີ້ເຮັດແບບໄດ້ບໍ່ໄດ້ແລ້ວ ເພາະຖ້າຜິດພາດມາຂ້າພະເຈົ້າອາດຈະສູນເສຍລູກໄປໄດ້.

ຕາມປົກກະຕິແລ້ວຄົນເຮົາກໍຈະກິນເຂົ້າມື້ລະ3ຄາບ ແຕ່ດຽວນີ້ຂ້າພະເຈົ້າແມ່ນກິນ 6 ຄາບເກືອບບໍ່ຄ່ຳ ນີ້ບໍ່ໄດ້ນັບລວມອາຫານເສີມ ປະເພດໝາກໄມ້ ແລະຂອງຫວານ ບາງເທື່ອກໍສົງໄສວ່າກິນໄປໄດ້ແນວໃດ ຕັ້ງບັກຫຼາຍໆ ພໍແຕ່ຕື່ນເຊົ້າມາຕ້ອງໃຫ້ໄດ້ກິນຫຍັງສາກ່ອນ ກ່ອນທີ່ຈະຮອດໂມງກິນເຂົ້າເຊົ້າ ແລ້ວຍາມທີ່ເຮັດວຽກຕ້ອງມີແນວຫຍ້ຳແນວກິນໄປນຳບໍ່ຂາດ ແຕ່ບໍ່ເກີນສອງຊົ່ວໂມງ ຕ້ອງໄດ້ກິນເຂົ້າອີກ ກ່ອນຈະຮອດຕອນສວາຍ ແລະກ່ອນຈະກິນເຂົ້າແລງກໍຕ້ອງໄດ້



ກິນອີກເທື່ອນຶ່ງສອງເທື່ອ ສະຫຼຸບວ່າພາຍໃນທິດນັ້ນຂ້າພະເຈົ້າກິນເຂົ້າຄາບລະສອງເທື່ອ.

ອາຫານແມ່ມານບໍ່ວ່າຈະເປັນຂອງບຳລຸງ ຂອງກັບເຂົ້າຕ່າງໆກໍຕ້ອງໄດ້ເລືອກຫາກິນແຕ່ແນວດີໆ ທັງນີ້ຄ່າໃຊ້ຈ່າຍກໍເພີ່ມຂຶ້ນນຳ ແລະເຖິງວ່າແຟນຈະຢູ່ໄກ ເຖິງລາວຈະດູແລໃກ້ສິດບໍ່ໄດ້ ແຕ່ລາວກໍອຳນວຍຄວາມສະດວກເລື່ອງການເງິນໃຫ້ບໍ່ຂາດ ເພາະລາວກໍຮູ້ດີວ່າຕ້ອງໄດ້ໃຊ້ຈ່າຍຫຼາຍຂຶ້ນ.

ຈະວ່າໄປມັນກໍດີຢ່າງນຶ່ງທີ່ຂ້າພະເຈົ້າຫ່ວງແຕ່ກິນ ຈຶ່ງເຮັດໃຫ້ບໍ່ມີເວລາຄິດເລື່ອງອື່ນຫຼາຍປານໃດ ຈະມີກໍແຕ່ຍາມນອນທີ່ມັກຈະຄິດນັ້ນຄິດນີ້ໄປເລື້ອຍ ແລະເພື່ອບໍ່ຢາກຄິດຫຼາຍ ຂ້າພະເຈົ້າຈຶ່ງເລືອກທີ່ຈະອ່ານໜັງສື ຈົນປຶ້ມປົກໜ້າບາງເທື່ອກໍນັ່ງສະມາທິຈົນໄຫງ້ຍຫຼັບລົງ ແລະບາງຄືນກໍເອົາໃບເອໂກມາເບິ່ງຮູບຂອງລູກ ເຖິງແມ່ນຈະເບິ່ງບໍ່ອອກກໍຕາມ ແຕ່ກໍເຮັດໃຫ້ໃຈເປັນສຸກ ແລະນອນຫຼັບຝັນດີ ເຖິງແມ່ນພຽງແຕ່ໄດ້ນອນກອດຮູບ.

ແຕ່ຊ່ວງອາທິດນີ້ລູກບໍ່ຄ່ອຍເໜັງປານໃດ ສອງສາມມື້ຈັ່ງເໜັງເທື່ອນຶ່ງ ແລະກໍເໜັງຄ່ອຍໆ ຈົນຂ້າພະເຈົ້າເປັນກັງວົນຢ້ານລູກບໍ່ແຂງແຮງ, ໂທແຈ້ງຕໍ່ແມ່ເພິ່ນກໍມີແຕ່ບອກໃຫ້ໄປກວດເບິ່ງ ແລະຫາແນວບຳລຸງກິນໃຫ້ຫຼາຍ ພັກຜ່ອນແດ່ ເພາະຖ້າແມ່ເຮັດວຽກເມື່ອຍຫຼາຍ ລູກໃນທ້ອງກໍຄືງຈະເມື່ອຍ ແລະບໍ່ຄ່ອຍເໜັງ.

ເພື່ອຄວາມສະບາຍໃຈ ຂ້າພະເຈົ້າກໍບໍ່ຄິດເອງໃຫ້ເປັນທຸກ ຟ້າວໄປຫາຄຳຕອບຈາກທ່ານໝໍທັນທີ

“ບໍ່ຕ້ອງຄຶດຫຼາຍເດີ ລູກຍັງນ້ອຍເປັນປົກກະຕິທີ່ຈະບໍ່ເໜັງຫຼາຍ ຖ້າບໍ່ມີອາການເຈັບ ຫຼືປັ້ນແຮງໆກໍຖືວ່າບໍ່ເປັນຫຍັງ ມີແຕ່ໃຫ້ກິນອາຫານບຳລຸງ ແລະພັກຜ່ອນໃຫ້ພຽງພໍກໍໄດ້ແລ້ວ”ໄດ້ຟັງແນວນັ້ນແລ້ວກໍສະບາຍໃຈຂຶ້ນກັບຈາກພົບທ່ານໝໍຕາມທາງມາກໍໄດ້ແວ່ຊື້ໝາກໄມ້ ແລະນົມເພື່ອບຳລຸງເລື່ອງວຽກກໍຈັດສັນໃໝ່ໝົດຄືເຮັດວຽກຕາມໂມງບໍ່ຄືແຕ່ກ່ອນທີ່ພໍແຕ່ແກະຂີ້ຕາກໍນັ່ງຢູ່ໜ້າຄອມໂລດ ຈົນບາງເທື່ອລືມກິນຮອດເຂົ້າ ຍາມນອນກໍພະຍາຍາມນອນແຕ່ເວັນ ບໍ່ນັ່ງເຮັດວຽກຈົນເດິກດື່ນຄືແຕ່ກ່ອນແລ້ວເພື່ອສຸຂະພາບຕົນກໍຄືລູກ.

## ອາທິດທີ 16

ຄົງເນື່ອງຈາກອາທິດແລ້ວກິນຫຼາຍໂພດມາທິດນີ້ຈຶ່ງບໍ່ຄ່ອຍຢາກເຂົ້າປານໃດ ສົ້ມກໍບໍ່ຄຶດຢາກໃຫ້ກິນ ຫຼືບໍ່ກິນກໍໄດ້ເພາະຊ່ວງນີ້ມີແຕ່ຮາກກັບຮາກ ພໍແຕ່ຕື່ນຂຶ້ນມາກໍແມ່ນເລີ່ມຮາກ ຍາມຖູແຂ້ວກໍຖູບໍ່ທັນແລ້ວຈັກເທື່ອ ຍ້ອນຮາກອອກມາກ່ອນ ແມ່ນແຕ່ນ້ຳທີ່ກິນຢູ່ທຸກມື້ທຸກຍາມກໍຮູ້ສຶກວ່າຄາວພໍແຕ່ຊິເອົາໃສ່ປາກກໍແມ່ນຮາກອອກມາກ່ອນລະ, ຮາກຫຼາຍຈົນຂົມສົບຂົມປາກຮາກຈົນເກືອບຈະບໍ່ມີຫຍັງອອກມາບາງມື້ຮາກຫຼາຍຈົນມີເລືອດອອກນຳ ຮາກແລ້ວກໍເມື່ອຍແອດແລດໜ້າຫູ່າຕາເຫຼືອງວິນເກົ້າເມົາຫົວທຸກເທື່ອ ຄົງດ້ວຍເຫດນີ້ຈຶ່ງ



ເຮັດໃຫ້ຊ່ວງທິດນີ້ເມື່ອຍຫຼາຍ ຮ່າງກາຍຄືບໍ່ມີແຮງມັກວິນຫົວຢູ່ເລື້ອຍໆ ແຮ່ງຕ້ອງໄດ້ລະວັງໂດຍສະເພາະເລື່ອງລົດລາງແມ່ນບໍ່ຂັບເລີຍ ເພາະຢ້ານວ່າຊິເປັນວິນຢູ່ກາງທາງ ແຕ່ເຖິງແມ່ນຈະລະວັງປານນັ້ນມັນກໍຍັງເກີດເລື່ອງຂຶ້ນຈົນໄດ້.

ເຊົ້າມື້ນຶ່ງອາກາດປາກົດວ່າຮ້ອນແຕ່ເຊົ້າ ແສງແດດອັນແສບຮ້ອນ ໄດ້ສ່ອງລົງມາແຜດເຜົາແຕ່ເຊົ້າໆ ໃນຂະນະທີ່ຂ້າພະເຈົ້າພວມຂຶ້ນຂັ້ນໄດທີ່ສູງເຖິງ 9 ຂັ້ນ ຢູ່ບ່ອນເຮັດວຽກນັ້ນ ພໍແຕ່ຂຶ້ນໄປຫວິດຫົວຂັ້ນໄດ ຕາກໍມືດຕຶບລົ້ມລົງກັບໜ້ອງຂາຄືວ່າເປັນລ່ອຍລົ້ມລົງກັບທີ່ ໄຄແຕ່ມືທັນຄວາໄປຈັບປະຕູໄວ້ທັນບໍ່ຊັ້ນລະໄດ້ກິ້ງລົງຂັ້ນໄດຫັ້ນຄັກໆ ຂ້າພະເຈົ້ານັ່ງຊຶງຫຼັບຕາຢູ່ຫັ້ນດົນເຕີບຈຶ່ງຄ່ອຍໆມືນຕາຂຶ້ນ ມືຈັບປະຕູໄວ້ຢ່າງແໜ້ນ ກ່ອນທີ່ຈະຄ່ອຍໆລຸກໄປນອນພັກຢູ່ໃນຫ້ອງ.

ຫຼັງຈາກເຫດການໃນເທື່ອນັ້ນ ເຮັດໃຫ້ຂ້າພະເຈົ້າເປັນກັງວົນຫຼາຍ ຈຶ່ງຂໍລາພັກສາມມື້ເພື່ອຈະໄດ້ພັກຜ່ອນ ເພາະບໍ່ຢາກລຸກຍ່າງໄປມາຫຼາຍ ເພາະສິ່ງທີ່ຈະເກີດຂຶ້ນຫາກແມ່ນລົ້ມລົງໄປ ຜົນຮັບຄົງບໍ່ຄຸ້ມກັນແທ້ໆ,

ທຳອິດກໍຄຶດວ່າຊິບໍ່ບອກໃຫ້ໃຜຮູ້ແລ້ວແຕ່ກໍອົດບໍ່ໄດ້ພໍພໍ່ແມ່ຮູ້ເພິ່ນກໍບອກໃຫ້ອອກມາພັກຢູ່ເຮືອນ ຢູ່ໃກ້ພີ່ນ້ອງມີຫຍັງຈັ່ງຊ່ອຍກັນໄດ້, ແຟນກໍເຫັນດີນຳໃຫ້ກັບມາຢູ່ບ້ານນຳພໍ່ແມ່ເພື່ອຄວາມສະບາຍໃຈຍ້ອນເຮົາສອງຄົນຢູ່ໄກກັນເບິ່ງແຍງກັນໄດ້ພຽງສຽງເວົ້າຜ່ານໂທລະສັບທໍ່ນັ້ນ.

ຂ້າພະເຈົ້າຄຶດທົບທວນຢູ່ຫຼາຍມື້ເຕີບ ວ່າຈະກັບໄປຢູ່ບ້ານເລີຍບໍ່ ແຕ່ດ້ວຍວຽກທີ່ຍັງຄ້າງຢູ່ຫຼາຍ ແລະອາການດັ່ງ



ກ່າວກໍຄ່ອຍໆດີຂຶ້ນແລ້ວ ຈຶ່ງຕັດສິນໃຈຢູ່ເຮັດວຽກຕໍ່ໄປອີກກ່ອນຈະມີກໍແຕ່ເພີ່ມຄວາມດູແລເອົາໃຈໃສ່ພັກຜ່ອນກິນອາຫານໃຫ້ພຽງພໍ.

ຫຼາຍຄົນຄົງຄຶດວ່າຖືພາສ່ຳນີ້ກໍຄືວ່າເອົາແທ້ເອົາວ່າແມ່ນບໍ່ ແມ່ນຢູ່ອາການບາງຄົນເວລາຖືພາອາດຈະບໍ່ສະແດງຫຍັງຫຼາຍ ແຕ່ສຳລັບບາງຄົນກໍເປັນເອົາແທ້ເອົາວ່າ ຄົນທີ່ບໍ່ເປັນກັງວົນຄົງຍ້ອນໄດ້ຢູ່ໃກ້ພໍ່ແມ່ຄອບຄົວ ຫຼືຍາດພີ່ນ້ອງທີ່ຊ່ອຍເບິ່ງແຍງຢູ່ໃກ້ພໍໃຫ້ອຸ່ນໃຈ ແຕ່ສຳລັບຂ້າພະເຈົ້າທີ່ເບິ່ງຄືກັງວົນຫຼາຍກໍຍ້ອນແມ່ນຖືພາລູກຜູ່ທຳອິດແດ່ແລະສຳຄັນແມ່ນຢູ່ໄກທັງພໍ່ແມ່ຍາດພີ່ນ້ອງ ໄກແມ່ນແຕ່ແຟນ ເພາະອອກມາເຮັດວຽກຕົວຄົນດຽວ ເຖິງຈະມີອ້າຍເອື້ອຍໃນບ່ອນເຮັດວຽກ ແຕ່ກໍຍັງອົດທີ່ຈະຄຶດກັງວົນບໍ່ໄດ້ ເພາະຄວາມຮັກຄວາມຫ່ວງໃຍຂອງຄອບຄົວທີ່ຜ່ານທາງໂທລະສັບຄົງຊ່ອຍເອົາຂ້າພະເຈົ້າໄປໂຮງໝໍບໍ່ໄດ້ ຖ້າຫາກບໍ່ສະບາຍ ຫຼືເປັນຫຍັງຂຶ້ນມາ ຄົງໝາຍເຖິງສຸຂະພາບກໍຄືຊີວິດຂ້າພະເຈົ້ານຳ ເພາະເຫດນີ້ຂ້າພະເຈົ້າຈຶ່ງອົດຄຶດບໍ່ໄດ້.



6 ເດືອນ





7 ເດືອນ

# V. ຄວາມຄິດ

## ອາທິດທີ 17

ເນື່ອງຈາກອາທິດແລ້ວນີ້ໄດ້ພັກຜ່ອນນອນເອົາແຮງຫຼາຍ ມາທິດນີ້ຈຶ່ງມີແຮງຂຶ້ນແດ່ ລູກກໍໃຫຍ່ຂຶ້ນນຳ ນີ້ກໍພໍດີໄດ້ 17 ອາທິດແລ້ວ, ສຳຜັດໄດ້ວ່າເລີ່ມເໜັງແຮງຂຶ້ນ ແລະເໜັງຖີ່ຂຶ້ນ ແຕ່ອາການຮາກໆວິນໆກໍຍັງຄືງເປັນຢູ່ແຕ່ບໍ່ຮ້າຍແຮງທໍ່ທິດແລ້ວນີ້ ຈະຮາກກໍແຕ່ຕອນເຊົ້າກັບຕອນແລງ ແລະກໍມີບາງຄືນທີ່ນອນຫຼັບຢູ່ດີໆ ພໍຮູ້ເມື່ອຂຶ້ນມາຍາມເດິກກໍປວດຮາກ ແຕ່ກໍບໍ່ຮາກພໍໃຫ້ນອນຍາກ ແຮ່ງວ່ານອນບໍ່ຄ່ອຍຫຼັບ.

ພໍນອນບໍ່ຫຼັບສະໝອງກໍຄຶດຫາເລື່ອງນັ້ນເລື່ອງນີ້ໄປເລື້ອຍຕາມດີແນວກິນ ໂດຍສະເພາະຂອງຫວານໆ ຫຼັບຕາລົງກໍແມ່ນເຫັນພາບໃນຫົວ ຂະໜົມເຄັກນຸ່ມໆຫອມໆທີ່ຖືກວາງຢູ່ຈານຮາດໜ້າດ້ວຍຊັອກໂກແລັດຍ້ອຍລົງຕາມຂອບຂ້າງ ຕາມດ້ວຍກະແລັມເຢັນໆຫຼາກສີສັນຢູ່ຈອກສີໃສໆໂອ່ຍ..! ຄຶດມາລະຢາກໃຫ້ມັນມາວາງຢູ່ຕໍ່ໜ້ານີ້ແທ້ໆ ແຕ່ກໍໄດ້ພຽງຄຶດເພາະເດິກດື່ນທ່ຽງຄືນແລ້ວຊິໄປຫາຊື້ໄດ້ຢູ່ໃສອົດໃຈອີກບໍ່ພໍທໍ່ໃດຊົ່ວໂມງກໍເຊົ້າແລ້ວ.

ເລື່ອງສົ້ມກໍບໍ່ໄດ້ນ້ອຍໜ້າ ຄຶດຢາກແຕ່ແນວມັນບໍ່ມີ ຄຶດຢາກຕຳໝາກຕ້ອງໃສ່ກະປູຍອດປາແດກຫອມໆພ້ອມດ້ວຍໝາກເຂືອຫຍ້ຳກຸບໆເວົ້າມາລະນ້ຳລາຍແຕກແຕ່ກໍໄດ້



ພຽງຄຶດ ເພາະຍາມນັ້ນບໍ່ແມ່ນຍາມໝາກຕ້ອງເປັນ ແຕ່ກໍອົດໃຈບໍ່ຟັງຈຳເປັນຕ້ອງໄດ້ຂີ່ລົດເລາະຊື້ ເຮັດແນວໃດໄດ້ແນວຕົນຢູ່ຄົນດຽວຊິຫາຊິໃຊ້ໃຜກໍເກງໃຈ, ແຕ່ເລາະຈົນທົ່ວເຂດນັ້ນແຕ່ກໍບໍ່ມີໝາກຕ້ອງພໍໜ່ອຍ ເລີຍໄດ້ຊື້ໝາກມ່ວງມາຕຳໃສ່ໃບລົ້ນໄມ້ແທນ ເຖິງຈະບໍ່ຄຶດຢາກປານໃດແຕ່ກໍກິນໝົດຖ້ວຍບັກໃຫຍ່ ພໍຊ່ອຍບັນເທົາຄວາມຢາກລົງໄດ້ແດ່ ແຕ່ພໍກິນໝົດບໍ່ພໍທໍ່ໃດກໍເລີ່ມຢາກຂຶ້ນມາອີກແລ້ວ ຖ້າຈະຕາມໃຈປາກແທ້ ຂ້າພະເຈົ້າຄົງບໍ່ໄດ້ເຮັດວຽກເຮັດງານຫຍັງລະ ແນວວ່າຢາກຢູ່ຕະຫຼອດອັນໃດພໍອົດໄດ້ຈຶ່ງອົດໃຈໄວ້ກ່ອນ.

ສ່ວນເລື່ອງຂອງກິນກັບເຂົ້າ ກໍແມ່ນຢາກແຕ່ແນວມັນເຮັດຍາກຫາຍາກຄຶດຢາກເອາະກົບໃສ່ໜໍ່ໄມ້ສົ້ມຢາກໆຢາກຈົນນ້ຳລາຍໄຫຼ ພຽງແຕ່ຄຶດຊື່ໆກໍກືນນ້ຳລາຍນຳປັບໆເຊິ່ງທັງກົບ ແລະໜໍ່ໄມ້ສົ້ມກໍຍັງຢູ່ຕະຫຼາດພຸ້ນ ແຕ່ມັນກໍບໍ່ແມ່ນອຸປະສັກ ເຖິງວ່າຂ້າພະເຈົ້າຈະຕ້ອງຫຍຸວໄປຕະຫຼາດຢູ່ສອງສາມມື້ຈັ່ງໄດ້ກົບມາເອາະກໍຕາມ.

ພໍແຕ່ໄດ້ກົບມາກໍບໍ່ລໍຊ້າຟ້າວໜຶ້ງເຂົ້າສຸກຫອມໆກຽມໄວ້ຖ້າ ແລ້ວກໍລົງມືຈັດການເຮັດເອາະກົບ ໃສ່ໝາກແຄ່ນໜ້ອຍນຶ່ງເພີ່ມຄວາມຫອມພ້ອມໃບຂີງ,ຜັກຫອມໂຮຍໃສ່ເພີ່ມສີສັນເລັກນ້ອຍ, ບໍ່ຮູ້ວ່າແຊບຫຼືບໍ່ ຮູ້ແຕ່ວ່າໃນຄາບນັ້ນຂ້າພະເຈົ້າກິນເຂົ້າເກືອບໝົດຕິບເລີຍ, ບໍ່ແປກໃຈເລີຍວ່າເປັນຫຍັງແມ່ມານຈັ່ງຕຸ້ຍນ້ຳໜັກຂຶ້ນເປັນສິບເປັນຊາວກິໂລ ເພາະກິນແລ້ວເຊົາບໍ່ເປັນແນວນີ້ນີ້ເອງ ກໍແນວວ່າສອງຄົນນັ້ກໍຕ້ອງກິນຫຼາຍແຫຼະເນາະ.!



## ອາທິດທີ 18

ຫຼາຍມື້ຫຼາຍວັນຜ່ານໄປ ທ້ອງກໍເລີ່ມໃຫຍ່ຂຶ້ນຕາມເວລາ ຫຼາຍຄົນກໍເວົ້າຫຼາຍແນວ ແລະທີ່ໜີບໍ່ພົ້ນກໍແມ່ນເຂົາຈະມັກເວົ້າຢອກເລື່ອງແຟນ “**ສົງໄສລາວລັກເອົາເມຍໃໝ່ແລ້ວປານນີ້ຍັງບໍ່ມາ!**” ເຊື່ອວ່າຜູ່ຍິງທຸກຄົນ ຍາມເມື່ອແຟນຢູ່ໄກກໍຄົງຈະອົດຄຶດບໍ່ໄດ້ ແຮ່ງເຮົາຮັກຫຼາຍເທົ່າໃດ ກໍແຮ່ງຄຶດຫຼາຍເທົ່ານັ້ນ ເຖິງແມ່ນຄວາມຈິງມັນບໍ່ໄດ້ເປັນແບບນັ້ນກໍຕາມ.

ຊ່ວງນີ້ນ້ຳຕາຈຶ່ງໄຫຼອອກງ່າຍ ງ່າຍກ່ອນສັ່ງເຝີກິນອີກພຽງແຕ່ຄຶດເຖິງຄຳເຂົາເວົ້າ ບວກໃສ່ພາບໃນສະໝອງທີ່ກຽມພ້ອມຈະຜຸດຂຶ້ນມາໄດ້ຕະຫຼອດເວລານັ້ນ ມັນຄືດັ່ງມີມີດປາຍແຫຼມໆຄົມໆປັກຈຸບໃສ່ກາງກະດອງໃຈ ແລ້ວນ້ຳຕາກໍທຳໜ້າທີ່ໄຫຼອອກມາໂລດ ຍ້ອນເຫດນີ້ຂ້າພະເຈົ້າຈຶ່ງໄດ້ພະຍາຍາມເຮັດແຕ່ວຽກເພື່ອຈະບໍ່ໄດ້ຄຶດຫຍັງຫຼາຍ ແຕ່ຄວາມຄຶດຮອດມັນບໍ່ເຊົາໃຜອອກໃຜ ຄຶດຮອດຈ້ອຍໆ ໝາກຫົວໃຈມັນບໍ່ຍອມເຊື່ອຟັງຄຳສັ່ງຂອງສະໝອງເລີຍ.

ຂ້າພະເຈົ້າຮູ້ດີວ່າການທີ່ມານັ່ງຄຶດຫຼາຍ ແລ້ວນອນບໍ່ຫຼັບແນວນີ້ມັນຈະສົ່ງຜົນຕໍ່ລູກນຳ ແຕ່ມັນກໍຫ້າມຄວາມຄຶດບໍ່ໄດ້ແທ້ໆ, ເພາະຖ້າເປັນແນວເຂົາເວົ້າແທ້ ຂ້າພະເຈົ້າຊິບໍ່ໄດ້ຫອບລູກນຳຫາຜົວບໍ! ແລ້ວໄທບ້ານໄທເມືອງກໍຄືຊິພາກັນຫົວຂວັນນິນທາຍ່າງເມົາມັນປາກແທ້ໆ.

ຂ້າພະເຈົ້າກໍບໍ່ເຂົ້າໃຈວ່າເປັນຫຍັງຕ້ອງຄຶດກັງວົນ



ໃນເລື່ອງນີ້ ເພາະຄວາມຈິງແລ້ວແຟນກໍໂທຫາທຸກມື້ຖາມຂ່າວຄາວຕະຫຼອດ ລາວທັງຮັກ ທັງຫ່ວງໃຍປານນີ້ ແລ້ວລາວຊິຫັກຫຼັງແບ່ງໃຈໄປໃຫ້ຄົນອື່ນໄດ້ບໍ! ຄວາມຄຶດສັບໄປວົນມາ ຄຶດລະແວ່ງສົງໄສຢູ່ຕະຫຼອດ ຈົນບໍ່ສາມາດຄວບຄຸມອາລົມຕົນເອງໄດ້ ມີແຕ່ງຸດງິດ ແລະຢາກຮ້າຍ.

ຂ້າພະເຈົ້າໄດ້ທົດລອງຫຼາຍວິທີເພື່ອທີ່ຈະຢຸດຄວາມຄຶດພວກນີ້ລົງ ແລ້ວທາງອອກທີ່ດີທີ່ສຸດໃນຕອນນັ້ນກໍຄື ການເຮັດສວນ ຟັງເບິ່ງຄືແປກນໍ້! ແຕ່ມັນຊ່ອຍໄດ້ອີ່ຫຼີ ເພາະເວລາທີ່ຂ້າພະເຈົ້າລົງຢູ່ສວນ ໄດ້ປູກຫັ້ນ ຝັງນີ້ມັນເຮັດໃຫ້ລືມຄຶດເລື່ອງອື່ນໄປເລີຍ.

ຕອນນີ້ລູກກໍໄດ້ 18 ອາທິດແລ້ວ ເລື່ອງຮາກກໍຄ່ອຍໆຈາງໄປ ຖ້າບໍ່ໄດ້ກິ່ນຫຍັງແຮງໆຂີວໆກໍບໍ່ຮາກ ເຂົ້າປາອາຫານກໍໄດ້ກິນຕາມປົກກະຕິ ແຕ່ເລື່ອງສົ້ມແມ່ນບໍ່ຄຶດຢາກພໍດີ້ ສ່ວນຫຼາຍຈະຢາກປະເພດໝາກໄມ້ຕາມດີໝາກແຕງລາຍກິນໝົດເທື່ອລະໜ່ວຍ.

## ອາທິດທີ 19

ຊ່ວງທິດນີ້ລູກເໜັງແຮງຂຶ້ນ ແລະຄົງຈະເລີ່ມໄດ້ຍິນແລ້ວ ເພາະຕອນທີ່ພໍ່ເພິ່ນໂທມາ ແລ້ວເອົາໃຫ້ຟັງນຳແຮ່ງເໜັງແຮງ ຄືລູກຈະຮູ້ ແລະເຂົ້າໃຈນີ້ແຫຼະ ແລ້ວຖ້າບອກວ່າພໍ່ຊິມາຫາ ຄືແຮ່ງວ່າເໜັງຕະຫຼອດເລີຍ ເຮັດຄືວ່າຈະເຂົ້າໃຈແລ້ວແທ້ໆນິ.

ສະນັ້ນ, ເວລາຫວ່າງ ຕາມດຶກ່ອນຈະເຂົ້ານອນ ຂ້າພະເຈົ້າຈຶ່ງອ່ານນິທານໃຫ້ລູກຟັງຕະຫຼອດ ກ່ອມທັງລູກທັງແມ່ເລີຍ ເພາະອ່ານນິທານໃຫ້ຟັງເທື່ອໃດລູກກໍເໜັງໄປນຳຮອດຕອນຕື່ນເຕັ້ນລູກກໍແຮ່ງເໜັງແຮງຖີບທ້ອງຢູ່ຕຸບໆ.

ມັນກໍແປກດີນໍ້ ທີ່ເຮົາສາມາດຮັກຄົນໆນຶ່ງໄດ້ທັງທີ່ບໍ່ເຄີຍເຫັນໜ້າ ຫ່ວງໃຍທັງທີ່ບໍ່ໄດ້ຍິນແມ່ນແຕ່ສຽງ ຄົນທີ່ບໍ່ເຄີຍເຫັນໜ້າບໍ່ໄດ້ຍິນສຽງແຕ່ເປັນກຳລັງໃຈໃຫ້ເຮົາໄດ້ຢ່າງມະສານ ມັນເປັນຄວາມຮັກທີ່ໄຮ້ເຫດຜົນແທ້ໆ.

ຊ່ວງນີ້ອາການແພ້ຕ່າງໆກໍບໍ່ມີ ຈະມີກໍແຕ່ອາການປັ້ນທ້ອງອາດເປັນເພາະນັ່ງເຮັດວຽກຢູ່ດົນ ແຕ່ກໍພະຍາຍາມບໍ່ຄຸມວຽກຫຼາຍໝັ່ນລຸກໝັ່ນນັ່ງຍ່າງອອກກຳລັງກາຍເລື້ອຍໆ ເລາະເບິ່ງຫັ້ນເບິ່ງນີ້ ເບິ່ງດອກໄມ້ ເກືອປາ ຟັງສຽງນົກ ສຽງແມງຮ້ອງ ມັນຄືມົນສະເໜ່ຂອງທຳມະຊາດທີ່ຊ່ອຍຜ່ອນຄາຍໄດ້ດີ ແລະລູກກໍຄົງຈະຜ່ອນຄາຍໄປນຳ.

ຖືວ່າໂຊກດີທີ່ຂ້າພະເຈົ້າໄດ້ຢູ່ກັບທຳມະຊາດທີ່ໄຮ້ມົນລະພິດ ບໍ່ມີດອກຄວັນລົດຂີວໆ ມີແຕ່ອາຍຂອງນ້ຳໝອກຄ້າງໃບໄມ້ຍາມເຊົ້າທີ່ເຫັນແລ້ວເຢັນຕາ, ບໍ່ມີສຽງທໍ່ລົດດັງໆ ມີແຕ່ສຽງດົນຕີທຳມະຊາດ ເສບໃຫ້ຟັງທຸກໆມື້ ມັນຊ່າງມ່ວນອອນຊອນແທ້ໆ, ບໍ່ມີເລື່ອງລາວໃຫ້ວຸ່ນວາຍສັບສົນ ມີແຕ່ກອງໜັງສືໃຫ້ເລືອກອ່ານ, ບໍ່ມີດອກຕຶກສູງໆທາງຄອນກຣີດ ທີ່ແຜ່ອາຍຮ້ອນໆອອກມາມີແຕ່ຕົ້ນໄມ້ໃຫຍ່ໃຫ້ລົມເຢັນພ້ອມອອກດອກງາມໆໃຫ້ເບິ່ງ ແຕ່ເສຍດາຍຖ້າຄອບຄົວໄດ້ຢູ່ພ້ອມໜ້າຄົງຈະແສນມີຄວາມສຸກ.



ເວົ້າແລ້ວກໍພໍດີແຟນກັບມາແຕ່ວຽກ ຈຶ່ງພາກັນເມືອຢາມບ້ານຫາພໍ່ແມ່ ຄອບຄົວໄດ້ຢູ່ພ້ອມໜ້າພ້ອມຕາ ພໍ່ແມ່ກໍດີໃຈ ແລະກໍຄົງຕື່ນເຕັ້ນກັບຫຼານນ້ອຍທີ່ກຳລັງຈະອອກມາໃຫ້ເພິ່ນອູ້ມ ເອົາໝາກພ້າວລົງໄວ້ຖ້າເປັນແຊງ ຂ້າເປັດຂ້າໄກ່ໄວ້ໃຫ້ກິນ ຄົງຢ້ານຫຼານເພິ່ນຈະບໍ່ແຂງແຮງ.

ສ່ວນ "ວ່າທີ່ພໍ່" ທີ່ດົນໆຈັ່ງມາ ພໍມາຮອດກໍລົມກັບລູກຢ່າງໃຫຍ່ ລູກກໍບໍ່ໃຫ້ນ້ອຍໜ້າ ພໍໄດ້ຍິນສຽງພໍ່ກໍເໜັງຂຶ້ນຖີບທ້ອງແມ່ຕຸບໆ ລູກຄົງຮັບຮູ້ໄດ້ເຖິງຄວາມຮັກຂອງພໍ່ແມ່ ແລະກໍຄົງດີໃຈທີ່ພໍ່ມາຫາ.

ຄວາມສຸກເລັກໆນ້ອຍໆເກີດຂຶ້ນໃນຊ່ວງເວລາສັ້ນໆ ແຕ່ຄວາມຊົງຈຳດີໆຈະຍັງຄົງຢູ່ບໍ່ຈາງຫາຍໄປ, ກໍຄືເພິ່ນວ່າຫັ້ນແລ້ວເວລາແຫ່ງຄວາມສຸກມັກຜ່ານໄປໄວສະເໝີ ມີເວລາທີ່ຢູ່ນຳກັນພຽງສັ້ນໆກໍໄດ້ຈາກກັນໄປເຮັດວຽກຄືເກົ່າແລ້ວ.

## ອາທິດທີ 20

ຖ້າໃນຊີວິດຈິງສາມາດກຳນົດໄດ້ຄືຈັ່ງນິຍາຍກໍຄົງຈະດີນໍ້ ຈະໄດ້ຂຽນລັດຕັດຕອນໃຫ້ຮອດມື້ທີ່ຈະໄດ້ເຫັນໜ້າແກ້ວຕາດວງໃຈອອກມາໄວໆ ແຕ່ໃນເມື່ອມັນບໍ່ສາມາດເຮັດໄດ້ກໍຕ້ອງໃຊ້ຊີວິດໃນທຸກມື້ໃຫ້ດີ,ຊ່ວງນີ້ແມ່ນຕ້ອງຟ້າວເລັ່ງເຮັດວຽກໃຫ້ແລ້ວ ເພາະຕັ້ງໃຈໄວ້ວ່າອີກເດືອນນຶ່ງຈະກັບໄປຢູ່ບ້ານນຳພໍ່ແມ່ ເພາະຕອນນີ້ທ້ອງກໍຈະໄດ້ 6 ເດືອນແລ້ວ ເດືອນໜ້າກໍເຈັດເດືອນ ແຮ່ງທ້ອງແກ່ເທົ່າໃດຄວາມກັງວົນ



ກໍເພີ່ມຂຶ້ນເພາະເຫັນເອື້ອຍຂ້າພະເຈົ້າລາວທ້ອງເຈັດເດືອນກໍເກີດ ຂ້າພະເຈົ້າກໍອົດຄຶດບໍ່ໄດ້ ທັງຄວາມຢ້ານກໍທໍ່ກັນ ຖ້າໄດ້ຢູ່ນຳຄອບຄົວກໍຄົງຈະອຸ່ນໃຈຂຶ້ນ.

ທ້ອງ5-6ເດືອນແຕ່ກໍຍັງບໍ່ໃຫຍ່ປານໃດ ຫຼາຍຄົນກໍທ້ວງຄືທ້ອງນ້ອຍແທ້ ລູກອອກມາຊິບໍ່ໂຕນ້ອຍຫວາ! ໄປກວດເບິ່ງລະບໍ? ລູກແຂງແຮງສົມບູນຢູ່ບໍ? ເມື່ອເຈິຄຳຖາມແນວນັ້ນ ຫົວເອີກຄົນເປັນແມ່ກໍອົດຄຶດບໍ່ໄດ້ດອກ, ແຕ່ລູກກໍເໜັງເປັນປົກກະຕິ ຄືທ່ານໝໍວ່າ ຄົງຈະແຂງແຮງດີຢູ່.

ທຸກໆມື້ຂ້າພະເຈົ້າຈະລູບທ້ອງຄ່ອຍໆແລ້ວກໍເລົ່ານິທານຫຼືບໍ່ກໍລົມກັບລູກ ແລ້ວລູກກໍຈະເໜັງຕຸບໆຂຶ້ນ, ຕາມດຶຕອນກາງຄືນນອນຫຼັບຢູ່ດີໆກໍສະເດີດຕື່ນຍ້ອນລູກຖີບ ຄົງເພາະທ້ອງເລີ່ມໃຫຍ່ຂຶ້ນແດ່ຈຶ່ງເຮັດໃຫ້ນອນຍາກ ນອນສະແຄງກໍຂັດໆເຄືອງໆ ນອນຫງາຍແຮ່ງບໍ່ໄດ້ເລີຍຫາຍໃຈຝືດເຂົ້າກັບໜ້ອງ ຊ່ວງນີ້ຈຶ່ງນອນບໍ່ຄ່ອຍຫຼັບປານໃດ ແຖມຍັງຫຍຸ້ງເບິາເຂົ້າຫ້ອງນ້ຳຕະຫຼອດ ຄືນນຶ່ງສີ່ຫ້າເທື່ອ ຫຼືຫຼາຍກ່ອນຫັ້ນກໍມີ, ຄົງເພາະເຫດນີ້ຈຶ່ງເຮັດໃຫ້ຮູ້ສຶກເມື່ອຍງ່າຍ ຍັງໄຕແຕ່ເລື່ອງອາຫານການກິນ ຊ່ວງນີ້ກິນໄດ້ທຸກແນວ ຕາມດີຂອງຫວານ ແລະໝາກໄມ້ ແມ່ນກິນໄດ້ຕະຫຼອດ ໂດຍສະເພາະໝາກແຕງລາຍ ຫຼືລູກຈະມັກໝາກແຕງບໍ່! ເວລາກິນລົງໄປລູກກໍຈະຖີບທ້ອງແມ່ແຮງໆຄ້າຍຢາກບອກວ່ານີ້ແຫຼະຂອງມັກລູກ!.



8 ເດືອນ





9 ເດືອນແລ້ວ

# VI. ຄວາມໃສ່ໃຈ

## ອາທິດທີ 21

21 ອາທິດແລ້ວ ທີ່ສອງແມ່ລູກເຮົາຫຼິ້ນໝາກລີ້ກັນຢູ່ ເຊື່ອວ່າແມ່ມານທຸກຄົນຄົງຮ້ອນໃຈ ຢາກເຫັນໜ້າລູກໄວໆ ແລະປາສະຈາກບໍ່ໄດ້ເຊິ່ງຄວາມຕື່ນເຕັ້ນວ່າລູກຊິອອກມາເປັນແນວໃດ? ຊິໜ້າຕາຄືໃຜ? ຊິແຂງແຮງດີບໍ່? ແລະອີກຫຼາຍໆຢ່າງທີ່ເຮັດໃຫ້ໃຈເຕັ້ນບໍ່ຖືກຈັງຫວະ.

ອາກາດເຢັນໃນຕອນເຊົ້າຂ້າພະເຈົ້າຕື່ນມາດ້ວຍໃບໜ້າທີ່ສົດໃສບໍ່ຕ່າງກັບທຸກມື້ ແຕ່ເຊົ້ານີ້ຫົວໃຈຕ້ອງຕົກລົງຢູ່ປາຍຕີນເມື່ອຫຼຽວເຫັນວ່າມີເລືອດອອກຕອນເຂົ້າຫ້ອງນ້ຳດ້ວຍຄວາມຕົກໃຈຈົນຕີນມືສັ່ນຂຶ້ນກັບໜ້ອງ ໜ້າເຫຼືອງກັບບາດ ຫົວໃຈເຕັ້ນໄວເກີນຈັງຫວະ ໃນຫົວສະໝອງກໍຄິດໄປຕ່າງໆ ຂ້າພະເຈົ້າບໍ່ອາດຢູ່ກັບຄວາມກັງວົນນັ້ນໄດ້ແມ່ນແຕ່ອີກນາທີດຽວ. ດັ່ງນັ້ນ, ບໍ່ລໍຊ້າຟ້າວໄປຫາໝໍທັນທີ ໄປທັງທີ່ໜ້າຍັງບໍ່ລ້າງ.

ໄຄແຕ່ວ່າມິດລີນິກຢູ່ບໍ່ໄກພໍແຕ່ໄປຮອດກໍຟ້າວເລົ່າເຫດການທີ່ປະສົບມາໃຫ້ທ່ານໝໍຟັງທັນທີດ້ວຍຄວາມຮ້ອນຮົນໃຈ ແຕ່ທ່ານໝໍເບິ່ງຄືໃຈເຢັນເອົາແທ້ເອົາວ່າ ຄືບໍ່ມີຫຍັງເກີດຂຶ້ນ ໃນຂະນະທີ່ຫົວໃຈຂ້າພະເຈົ້າກຳລັງຖືກແຜດເຜົາດ້ວຍກອງໄຟໃຫຍ່.



"ໃຈເຢັນກ່ອນເດີໝໍຊິກວດເບິ່ງກ່ອນ" ຜ່ານໄປບໍ່ດົນທ່ານໝໍກໍເວົ້າຂຶ້ນ:

"ທຸກຢ່າງປົກກະຕິ ໃຫ້ຟັງເບິ່ງອາການ ຖ້າບໍ່ເຈັບ ບໍ່ປັ້ນທ້ອງແຮງ ຫຼືຖ້າບໍ່ມີອາການໃດຜິດປົກກະຕິ ກໍບໍ່ມີຫຍັງໜ້າເປັນຫ່ວງ ທີ່ມີເລືອດອອກຄົງເກີດຈາກການທີ່ເຮົາເຮັດວຽກໜັກ ຍົກຂອງໜັກ ຫຼືນັ່ງຫຼາຍກໍເປັນໄດ້ ແຕ່ຢ່າງໃດກໍຢ່າວາງໃຈຫຼາຍ ໃຫ້ພັກຜ່ອນຫຼາຍໆກິນອາຫານຕາມປົກກະຕິ" ເມື່ອໄດ້ຟັງທ່ານໝໍເວົ້າ ກໍປານມີທ່າຝົນໃຫຍ່ຊັດລົງມາມອດໄຟທີ່ພວມແຜດເຜົາໃຈຢູ່ນັ້ນໃຫ້ດັບລົງ ຂ້າພະເຈົ້າຫາຍໃຈບາດໃຫຍ່ໆດ້ວຍຄວາມໂລ່ງໃຈ ກ່ອນທີ່ຈະກ່າວຂອບໃຈທ່ານໝໍ.

ເມື່ອເປັນດັ່ງນັ້ນ ເລື່ອງເຮັດວຽກກໍຜ່ອນລົງຫຼາຍ ເພາະຖ້າມີເທື່ອໜ້າອາດຈະບໍ່ໂຊກດີຄືເທື່ອນີ້ ອີກຢ່າງວຽກທີ່ເຮັດກໍເກືອບວ່າແລ້ວໝົດລະ ເລີຍມີເວລາໄດ້ພັກຜ່ອນ ແລະກໍກິນຢ່າງດຽວ ແຕ່ກໍແປກທັງທີ່ວ່າກິນຫຼາຍ ແຕ່ນ້ຳໜັກຂຶ້ນພຽງເດືອນລະໂລທໍ່ນັ້ນ.

ທຳອິດກໍກັງວົນຢ້ານວ່າລູກຈະບໍ່ແຂງແຮງ ຢ້ານວ່າລູກຊິໂຕນ້ອຍບໍ່ໄດ້ຕາມເກນ ຈຶ່ງໜີບໍ່ພົ້ນໄປຂໍຄຳປຶກສານຳທ່ານໝໍ ເພິ່ນກໍວ່າບໍ່ເປັນຫຍັງດອກ ນ້ຳໜັກຂຶ້ນເດືອນລະໂລກໍຖືວ່າບໍ່ຜິດປົກກະຕິ ເພາະນ້ຳໜັກຈະເພີ່ມຂຶ້ນຫຼາຍແມ່ນຊ່ວງໄດ້8-9ເດືອນພຸ້ນອາດຈະເພີ່ມຂຶ້ນເດືອນລະ5-10ກິໂລພຸ້ນໃດ່.

ຖ້າຄືຕອນເປັນສາວນ້ຳໜັກຂຶ້ນຮອດເດືອນລະ2-



3ໂລ ກໍຄົງຄິດໜັກຂະໜາດ ແຕ່ຕອນນີ້ຄິດຫ່ວງພຽງແຕ່ລູກເທົ່ານັ້ນ ໂຕຂ້າພະເຈົ້າຊິຈ່ອຍ ຫຼືຕຸ້ຍສ່ຳໃດກໍບໍ່ສຳຄັນ ສຳລັບຂ້າພະເຈົ້າແລ້ວ ຂໍພຽງໃຫ້ລູກເກີດມາແຂງແຮງສົມບູນກໍພໍໃຈແລ້ວ.

## ອາທິດທີ 22

ແຮ່ງໃກ້ເວລາຈະໄດ້ກັບເມືອຢູ່ບ້ານ ແຮ່ງຄືວ່າກັງວົນຫຼາຍຂຶ້ນ ຄວາມຢ້ານຢູ່ໆກໍປາກົດຂຶ້ນເຕັມຫົວ ຄົງດ້ວຍເຫດການໃນອາທິດກ່ອນ ຈຶ່ງເຮັດໃຫ້ຂ້າພະເຈົ້າຢ້ານແຕ່ວ່າລູກຊິອອກກ່ອນກຳນົດ ຕອນນັ້ນໝາກຫົວໃຈແມ່ນໜີກັບໄປຢູ່ບ້ານຖ້າແລ້ວ. ເພາະຫຼຽວໄປທາງໃດກໍບໍ່ເຫັນໜ້າຄອບຄົວມີແຕ່ຄວາມງຽບເຫງົາ, ຕົ້ນໄມ້ເຖິງມັນຈະໃຫ້ຄວາມຮົ່ມເຢັນສະບາຍກໍຈິງ ແຕ່ມັນກໍບໍ່ໄດ້ຊ່ວຍໃຫ້ອຸ່ນໃຈຂຶ້ນໄດ້.

ເຊື່ອວ່າຄົນທີ່ຢູ່ໄກຄອບຄົວ ແຮ່ງວ່າຖືພາແບບນີ້ຄົງອົດຄິດບໍ່ໄດ້ດອກ ແຮ່ງແມ່ມານແຮ່ງໃຈນ້ອຍຄິດຫຼາຍອົດບໍ່ໄດ້ແທ້ໆທີ່ຈະບໍ່ຄິດ ຍັງໄຄແຕ່ວ່າຂ້າພະເຈົ້າມີປຶ້ມເປັນໝູ່ ແລະສ່ວນຫຼາຍແລ້ວແມ່ນຈະຫາອ່ານປຶ້ມກ່ຽວກັບຄູ່ມື ແມ່ມືໃໝ່ການດູແລສຸຂະພາບ ລວມທັງອາຫານການກິນແລະຫຼາຍໆເລື່ອງທີ່ກ່ຽວກັບແມ່ມານ ແຕ່ປານນັ້ນກໍຍັງລັກຄິດຫັ້ນຄິດນີ້ຢູ່ຈົນໄດ້.



ຄົນທີ່ຮັກກັນພຽງແຕ່ຫ່າງໄກກັນໜ້ອຍດຽວ ເຊື່ອວ່າທຸກຄົນຄົງເປັນ ແລະປະຕິເສດບໍ່ໄດ້ເຖິງຄວາມຄິດຮອດ ທັງຄວາມລະແວງກັນຂຶ້ນ ທຸກມື້ຕ້ອງໄດ້ລາຍງານວ່າໄປໃສ ໄປກັບໃຜ ເຮັດຫຍັງຢູ່ແດ່ແມ່ນບໍ່? ດີບໍ່ດີພຽງແຕ່ໂທໄປເຂົາບໍ່ຮັບສາຍ ຫຼືບໍ່ຕອບຂໍ້ຄວາມ ອີກຝ່າຍກໍຈະຄິດມະໂນໄປເອງແລ້ວວ່າເຂົາປ່ຽນໄປ ຫຼືລັກໄປມີຄົນໃໝ່, ແມ່ນ! ທຸກຄົນເປັນແບບນັ້ນລວມທັງໂຕຂ້າພະເຈົ້າເອງແຮ່ງວ່າຖືພາທັງຕຸ້ຍທັງດຳຕື່ມອີກ ຄວາມຢ້ານມັນຈຶ່ງປະຕິເສດບໍ່ໄດ້ທີ່ຈະບໍ່ຄິດ.

ເພາະເຫັນມາຫຼາຍຕໍ່ຫຼາຍຄູ່ເວລາເມຍຖືພາ ຫຼືເກີດລູກໃໝ່ ຜົວກໍມັກຈະລັກໄປມີນ້ອຍມີໃຫຍ່ ຍ້ອນຄວາມງາມຂອງເມຍຫຼຸດລົງ ບໍ່ເປັນທີ່ພໍໃຈ, ແລ້ວຂ້າພະເຈົ້າເດລະ ແຮ່ງວ່າຢູ່ໄກກັນຄົນລະບ່ອນຕາບໍ່ເຫັນຫູບໍ່ຍິນຖ້າເຂົາຄິດບໍ່ຊື່ນຳລັກໄປມີໃໝ່ກໍຄົງບໍ່ຮູ້ຫຍັງ, ຕອນນີ້ຂ້າພະເຈົ້າບໍ່ຕ່າງຫຍັງກັບຄົນທີ່ຖືກຜົວປະ ແຖມຍັງອູ້ມທ້ອງເອ່ງເລ່ງໆຢູ່ ແລ້ວໃຜລະຈະອົດບໍ່ຄິດໄດ້.

ຄົງດ້ວຍສະພາບແວດລ້ອມທີ່ມິດງຽບ ໄຮ້ໝູ່ຄູ່ໃຫ້ເວົ້າລົມນຳແດ່ ຈຶ່ງຫຼີກໜີບໍ່ພົ້ນທີ່ຈະຢູ່ກັບແຕ່ຄວາມຄິດຕົນເອງນີ້ຂະໜາດວ່າແຟນໂທວີດີໂອໄດ້ເຫັນໜ້າກັນທຸກມື້ບາງມື້ກໍສອງສາມເທື່ອ ເຖິງປານນັ້ນຂ້າພະເຈົ້າຍັງເຊົາຄິດຫຼາຍບໍ່ໄດ້ ມີແຕ່ພະຍາຍາມອ່ານຫາໜັງສືໃຫ້ຫຼາຍ ຫາວຽກເຮັດໄປເລື້ອຍໆ ບາງເທື່ອກໍຮຽນເຮັດເຂົ້າຕົ້ມເຂົ້າໜົມຕາມປຶ້ມຕຳລາຫາປູກດອກໄມ້ ຫຼືກິດຈະກຳເບົາໆເຮັດພໍບໍ່ໃຫ້ຄິດລະເມີໄປໄກ, ແຕ່ກໍຕ້ອງຂອບໃຈທຸກເຫດການເພາະມັນໄດ້ສ້າງຄວາມ

ເຂັ້ມແຂງໃຫ້ຂ້າພະເຈົ້າຫຼາຍສົມຄວນ.

## ອາທິດທີ 23

ມາທິດນີ້ກໍໄດ້ນັບນິ້ວມື້ລໍຖ້າ ເພາະຄວາມງຽບເຫງົາໃກ້ຈະໝົດລົງ ອາທິດໜ້ານີ້ແລ້ວທີ່ຈະກັບໄປຢູ່ບ້ານນຳພໍ່ແມ່ເພື່ອຄວາມສະບາຍໃຈ ເພາະຖ້າເກີດຫຍັງຂຶ້ນມາກໍຈະບໍ່ເປັນກັງວົນ, ທັງລູກກໍເໜັງແຮງ ແລະເໜັງຕະຫຼອດ ຫຼືວ່າລູກຈະດີໃຈທີ່ຈະໄດ້ກັບໄປຢູ່ນຳພໍ່ຕູ້ແມ່ຕູ້ແລ້ວ.

ແຕ່ຊ່ວງນີ້ຂ້າພະເຈົ້າຮູ້ສຶກບໍ່ຢາກຫຍັງເລີຍກິນເຂົ້າໜ້ອຍດຽວກໍຄືວ່າອີ່ມ ໝາກໄມ້ໝາກຕອກກໍບໍ່ຄິດຢາກ ນ້ຳນົມເຂົ້າໜົມຫວານແຮ່ງແລ້ວແມ່ນບໍ່ຄິດຈັບໃສ່ປາກຈັກຄຳລວມທັງໝາກສົ້ມກໍບໍ່ຄິດອອກຢາກພໍດີ້ ມີແຕ່ຢາກນອນນອນເທົ່າໃດກໍຄືວ່າບໍ່ອີ່ມຈັກເທື່ອ ຕາຄືຊິມືນບໍ່ຂຶ້ນ ປານຄືນບໍ່ໄດ້ນອນມາເປັນທິດເປັນເດືອນ.

ແຕ່ຖ້າປ່ອຍເຮັດຕາມໃຈແນວນີ້ຄົງບໍ່ໄດ້ ຢ້ານລູກຊິບໍ່ໄດ້ຮັບສານອາຫານພຽງພໍ ເຖິງຢາກບໍ່ຢາກກໍຕ້ອງກິນ ກິນໄດ້ໜ້ອຍກໍພະຍາຍາມກິນຢູ່ເລື້ອຍໆ. ແຕ່ຄິດໄປຄິດມາ ການທີ່ຢາກນອນຕະຫຼອດກໍດີແນວນຶ່ງ ເພາະມັນເຮັດໃຫ້ບໍ່ຕ້ອງຄິດຫຍັງຫຼາຍ ແຕ່ຖ້ານອນຫຼາຍຜັດເຮັດໃຫ້ເຮົາເມື່ອຍ ອ່ອນເພຍງ່າຍ ແມ່ນແຕ່ຍ່າງຂຶ້ນຂັ້ນໄດກໍຫາຍໃຈປາແລ້ວ ທັງຕີນ



ມືກໍຄືວ່າມຶນຢູ່ເລື້ອຍໆ ບາງເທື່ອຂາກໍປັ້ນແຂງທັງປວດເໜັງຈົນບໍ່ໄດ້,ການປັບຕົວໃຫ້ທັນກັບອາການ ແລະອາລົມໃນທຸກມື້ຖືວ່າເປັນເລື່ອງສຳຄັນສຳລັບແມ່ມານແທ້ໆ.

## ອາທິດທີ 24

ຄວາມງຽບເຫງົາໄດ້ຈົບສິ້ນລົງແລ້ວ ເມື່ອໄດ້ກັບມາຢູ່ບ້ານນຳພໍ່ແມ່, ນີ້ກໍໄດ້ 24 ອາທິດແລ້ວທີ່ມີຄົນນ້ອຍຢູ່ໃນທ້ອງ, ແຕ່ຊ່ວງນີ້ຜັດຮູ້ສຶກຄັດໆທ້ອງຕາມດິຍາມນອນກາງຄືນປິ່ນໄປປິ່ນມາ ນອນບໍ່ຄ່ອຍຫຼັບທັງຫາຍໃຈຝືດ ຄືຈັ່ງມີຫຍັງໜັກໆມາເຕັງເອິກໄວ້, ທັງອາລົມກໍຢາກຮ້າຍໃຜເຮັດຫຍັງກໍຄືວ່າຄັດຫູຂວາງຕາບໍ່ຖືກໃຈຈັກຢ່າງ ທັງງຸດງິດສີໜ້າເຄັ່ງຄຶມທັງຫິນຫວາຍຢູ່ຕະຫຼອດ.

ສ່ວນເລື່ອງອາຫານກິນຫຍັງໜ້ອຍນຶ່ງກໍຄືວ່າແໜ້ນທ້ອງແຕ່ປາກຍັງຢາກຢູ່ ຕາມດີຂອງຫວານແມ່ນຢາກຢູ່ຕະຫຼອດແຕ່ກໍກິນໄດ້ໜ້ອຍດຽວ ແຕ່ເຖິງປານນັ້ນນ້ຳໜັກກໍຍັງຂຶ້ນຫຼາຍໃນຊ່ວງນີ້ ລູກກໍຄົງຈະໂຕໃຫຍ່ຂຶ້ນເຊັ່ນກັນ.

ເມື່ອຮູ້ວ່າອາລົມແປປ່ຽນຄືແນວນັ້ນ ຂ້າພະເຈົ້າຈຶ່ງເລືອກທີ່ຈະຢູ່ຄົນດຽວມິດໆຂຽນໜັງສືໄປເລື້ອຍໆ ບາງເທື່ອກໍດົນເປັນຊົ່ວໂມງໆກໍຄືວ່າບໍ່ຮູ້ອິດເມື່ອຍ ຫົວສະໝອງກໍຄືວ່າແລ່ນດີເອົາແທ້ເອົາວ່າ ຈົນແມ່ໄດ້ບອກບໍ່ໃຫ້ນັ່ງຫຼາຍ ໝັ່ນລຸກ



ໝັ່ນຍ່າງໄປມາແດ່!ນອນພັກແດ່!ຫຼືເປັນເພາະນັ່ງຫຼາຍ ໂພດບໍ່ທ້ອງຈຶ່ງມັກປັ້ນແບບຄັດໆ ແລະຢູ່ຍາກ.

ນີ້ກໍຍັງຕັ້ງສອງເດືອນກ່ອນຈະເກີດ ແຕ່ພໍ່ແມ່ເພິ່ນກໍກະກຽມທັງຫ້ອງນອນ ບ່ອນທີ່ຈະໃຫ້ນັ່ງກຳ ທັງເຮັດຕຽງໃໝ່ໃຫ້ຄົງຈະຕື່ນເຕັ້ນກັບຫຼານນ້ອຍຫຼາຍ ແຕ່ກໍດີເພາະບໍ່ມີໃຜຮູ້ວ່າລູກຊິອອກມື້ໃດແທ້.

ຄົງມົວແຕ່ເຮັດວຽກ ກຽມພັ້ນກຽມນີ້ຢູ່ຫຼາຍຢ່າງ ຈົນລືມໄປວ່າສອງມື້ແລ້ວ ທີ່ບໍ່ໄດ້ລົມໂທລະສັບກັບແຟນເລີຍລາວເອງກໍບໍ່ໂທຫາ ຂໍ້ຄວາມກໍບໍ່ເຫັນ ຄິດພໍ້ກໍຕອນທີ່ພີ່ນ້ອງເພິ່ນຖາມຫາ,ຄວາມຄິດມັນແລ່ນມາຕຳຕຶກບາດນຶ່ງຂ້າພະ-ເຈົ້າຟ້າວສົ່ງຂໍ້ຄວາມຫາ ກໍບໍ່ເຫັນຕອບກັບ ໂທຫາກໍບໍ່ຕິດຄວາມຄິດຮອດທັງຄຶດລະແວງກໍແລ່ນມາພ້ອມໆກັນເໝືອນກັບຖືກນ້ຳກົດສາດໃສ່ໜ້າ ຄວາມຮູ້ສຶກມັນບໍ່ສາມາດອະທິບາຍເປັນຄຳເວົ້າໄດ້ເລີຍ ທັງຢ້ານ ທັງກັງວົນໄປຕ່າງໆນາໆລາວໄປລັກມີຄົນໃໝ່ ຫຼືເຈັບເປັນບໍ່ສະບາຍອັນໃດກໍບໍ່ຮູ້ ເພາະແຕ່ກ່ອນເຖິງຈະບໍ່ຫວ່າງສ່ຳໃດ ຢ່າງໜ້ອຍກໍມື້ລະເທື່ອທີ່ໂທຫາແຕ່ນີ້ງຽບຫາຍໄປເລີຍ.

ຄືນນັ້ນໝົດຄືນຂ້າພະເຈົ້າພະຍາຍາມຂົ່ມຕາໃຫ້ຫຼັບແຕ່ກໍຫຼັບບໍ່ລົງ,ນອນອ່ານຂໍ້ຄວາມເກົ່າໆ ເບິ່ງຮູບເກົ່າໆແລ້ວນ້ຳຕາກໍໄຫຼລົງຊະໆ,ພະຍາຍາມຈະບໍ່ຄິດບໍ່ໄຫ້ແຕ່ກໍອົດບໍ່ໄດ້ຫົວໃຈມັນຮ້ອນຮົນກະວົນກະວາຍ ຖ້າໄປໄດ້ຂ້າພະເຈົ້າຄົງບໍ່ລໍຊ້າທີ່ຈະໄປໃຫ້ເຫັນດ້ວຍຕາແລ້ວ ວ່າມັນເກີດຫຍັງຂຶ້ນກັນແທ້ ແຕ່ນີ້ເຮັດໄດ້ພຽງຄິດເທົ່ານັ້ນ.



ມາຮອດຕອນນີ້ຂ້າພະເຈົ້າເຂົ້າໃຈຄວາມຮູ້ສຶກຂອງຜູ້ຍິງທີ່ຖືພາບໍ່ມີຜົວ(ລູກບໍ່ມີພໍ່)ແລ້ວວ່າເປັນແນວໃດມັນແສນໂດດດ່ຽວ ແລະເຈັບປວດທີ່ສຸດ ລູກໆທີ່ເກີດມາມີພຽງແມ່ນັ້ນຖືວ່າໂຊກດີແລ້ວທີ່ມີແມ່ທີ່ເຂັ້ມແຂງທີ່ສຸດ.

ພໍຕື່ນເຊົ້າມື້ໃໝ່ ສຽງໂທລະສັບກໍດັງຂຶ້ນຂ້າພະເຈົ້າຟ້າວກົດຮັບທັນທີ...

“ສອງມື້ຫຼັງພັ້ນໂທລະສັບເພ ພໍແປງແລ້ວກໍຟ້າວໂທຫາທັນທີ ທັງຄິດຮອດ ແລະເປັນຫ່ວງ”

“ແມ່ນຫວາ!” ຂ້າພະເຈົ້າເວົ້າພ້ອມຍິ້ມອອກມາແບບແຫ້ງໆເພາະຍັງຄົງມີຄວາມນ້ອຍໃຈຢູ່.

“ບໍ່ຄຽດເດີ້ ແລະບໍ່ຕ້ອງນ້ອຍໃຈ ໂທລະສັບເພອີ່ຫຼີຕອນນີ້ຂ້ອຍພວມແລ່ນເອກະສານ ຊິຍ້າຍໄປເຮັດວຽກຢູ່ແຖວບ້ານພຸ້ນແຫຼະ ຈັ່ງຊິໄດ້ຢູ່ໃກ້ດູແລເຈົ້າ ແລະລູກ” ນີ້ຖືວ່າເປັນຂ່າວດີທີ່ສຸດ ເຮັດໃຫ້ຂ້າພະເຈົ້າເຊົານ້ອຍໃຈໄດ້ທັນທີ.

10 ເດືອນແລ້ວ



ໄລຍະ...

“ພິສູດຮັກ... ແທ້”



# VII. ຄວາມຢ້ານ

## ອາທິດທີ 25

ອາການທີ່ປ່ຽນແປງໃນຊ່ວງນີ້ຮ້າຍກ່ອນສະພາບອາກາດເກືອບປັບໂຕນຳບໍ່ທັນ, ທັງເມື່ອຍ ທັງເພຍ ແໜ້ນທ້ອງທັງປັ້ນທ້ອງຢູ່ເລື້ອຍໆ ແລະກໍມັກເຈັບທ້ອງນຳ ມັນເຈັບແບບຮຸ່ມໆ ຊິເຈັບແຮງກໍບໍ່ເຈັບ ເຈັບພໍໃຫ້ຢູ່ຍາກ ແຕ່ຈັກແມ່ນແນວໃດແຮ່ງວ່າເຈັບທ້ອງແຮ່ງວ່າຢາກແຕ່ສົ້ມຄຶດເຫັນກໍນ້ຳລາຍໄຫຼ ແຕ່ກໍອົດໃຈໄວ້ບໍ່ຍອມກິນ ເພາະຢ້ານວ່າມັນຊິເຈັບແຮງກວ່າເກົ່າ, ແຕ່ເຖິງປານນັ້ນ ຍັງຖອກທ້ອງຈົນບໍ່ໄດ້ຫຼັບໄດ້ນອນ ຖ່າຍທ້ອງຈົນເມື່ອຍແອກແລກທັງວິນເກົ້າເມົາຫົວນັ່ງກໍເມື່ອຍນອນກໍເມື່ອຍ ຈົນໄດ້ໄປຄລີນິກກາງເດິກເລີຍ.

ຫຼັງຈາກເລົ່າອາການໃຫ້ໝໍຟັງແລ້ວ ເພິ່ນກໍຈັດຢາໃຫ້ກິນ ໂຊກແຕ່ວ່າກິນຢາແລ້ວອາການມັນກໍຄ່ອຍໆດີໄປ, ພໍຕື່ນເຊົ້າມາກໍບໍ່ລີລໍໄປໂຮງໝໍໃຫຍ່ເພື່ອກວດຄືນ ແລະຝາກທ້ອງນຳເລີຍ. ທ່ານໝໍກໍເອໂກເບິ່ງ ແລ້ວບອກວ່າ:

“ບໍ່ມີຫຍັງຜິດປົກກະຕິເດີ້! ລູກນ້ອຍແຂງແຮງດີ ນ້ຳໜັກໄດ້ 1,4 ກິໂລ ປະມານທ້າຍເດືອນເກົ້າກໍໜ້າຈະເກີດແລ້ວ ແລະເພິ່ນຍັງແນະນຳໃຫ້ກິນນ້ຳໝາກພ້າວ ແລະໝາກກ້ວຍນ້ຳ ແລ້ວພັກຜ່ອນໃຫ້ໃຫ້ຫຼາຍ”.

ໃນເມື່ອບໍ່ມີຫຍັງໜ້າເປັນຫ່ວງແລ້ວ ກໍໜ້າຈະດີໃຈ



ແຕ່ໃນໃຈຄືວ່າບໍ່ຊື່ນປານໃດ ຄືຍັງມີຫຍັງອຸກອັ່ງຢູ່. ແມ່ນ! ຂ້າພະເຈົ້າຍັງໃຈບໍ່ດີທີ່ຮູ້ວ່າລູກໄດ້ພຽງ 1,4 ກິໂລ. ເພາະຕອນນີ້ກໍໄດ້ເຈັດເດືອນແລ້ວ ຄືຫາກໍໄດ້ແຕ່ໂລປາຍ ຍັງອີກພຽງເດືອນສອງເດືອນກໍເກີດແລ້ວ ນ້ຳໜັກຊິເພີ່ມຂຶ້ນອີກຈັກຂີດ ລູກຊິບໍ່ໂຕນ້ອຍໂພດບໍ່? ລູກຊິແຂງແຮງດີຢູ່ບໍ່? ຄວາມຄິດເຫຼົ່ານັ້ນຄ້າຍຄືລູກປານຍິງກະໜ່ຳມາໃສ່ຫົວ ຂ້າພະເຈົ້າກັງວົນໃຈຫຼາຍ ຫຼືທີ່ຜ່ານມາບຳລຸງໜ້ອຍໄປບໍ ລູກຈັ່ງນ້ຳໜັກໜ້ອຍແທ້, ຂ້າພະເຈົ້າບໍ່ອາດກັບບ້ານພ້ອມກັບຄຳຖາມແລະຄວາມຄາໃຈນີ້ໄດ້ ຈຶ່ງຖາມທ່ານໝໍໄປ...

“ລູກເຈົ້າແຂງແຮງດີ ນ້ຳໜັກກໍຢູ່ໃນເກນ ຖ້າໃຫ້ຮອດ 8-9 ເດືອນ ນ້ຳໜັກລູກຈະເພີ່ມຂຶ້ນເປັນສອງເທົ່າ ແມ່ບໍ່ຕ້ອງກັງວົນໃຈເນາະບໍ່ມີຫຍັງໜ້າເປັນຫ່ວງແລ້ວສາມາດກັບບ້ານໄປພັກຜ່ອນໄດ້ແລ້ວ” ຄຳເວົ້າຂອງທ່ານໝໍຄືດັ່ງລົດເຄນມາຍົກກອງເຫຼັກທີ່ທັບຖົມອອກ ຕອນນີ້ສະບາຍໃຈ ແລະບໍ່ມີຫຍັງໜ້າເປັນຫ່ວງແລ້ວ.

## ອາທິດທີ 26

ຫຼັງຈາກທີ່ເຊົາຮາກໄປຫຼາຍທິດແລ້ວ ຢູ່ໆກໍຮູ້ສຶກປວດຮາກຂຶ້ນມາອີກຕາມດີຕອນເຊົ້າຕື່ນນອນມາໃໝ່ໆ ກັບເວລາແຕ່ງກິນມັກຈະຂີວທັ້ນຂີວນີ້. ແຕ່ກິນເຂົ້າປາອາຫານໄດ້ປົກກະຕິດີ ຈະລະວັງກໍແຕ່ສົ້ມ ຫຼືຂອງດອງເພາະຢ້ານຈະຖອກທ້ອງອີກ, ຊ່ວງນີ້ທ້ອງມັກຈະປັ້ນຢູ່ຕະຫຼອດ ທັງແຂງ ລູກກໍ



ເໜັງແຮງຂຶ້ນ, ແຄ່ງຂາກໍເລີ່ມໃຄ່ບວມ ຫຼາຍຄົນບອກວ່າລົງເສົາແລ້ວ ທຳອິດກໍບໍ່ເຂົ້າໃຈດອກວ່າລົງເສົາແມ່ນຫຍັງ ຈຶ່ງຖາມຄືນຈຶ່ງໄດ້ຮູ້ວ່າ ແມ່ມານທີ່ໃກ້ຈະເກີດແຄ່ງຂາຕີນມືຈະໃຄ່ຫຼືທີ່ເຂົາເອີ້ນວ່າລົງເສົານັ້ນເອງ. ຖ້າເປັນດັ່ງນັ້ນກໍສະແດງວ່າອີກບໍ່ດົນເຮົາສອງຄົນກໍຈະໄດ້ເຫັນໜ້າກັນແລ້ວ ມັນຍິ່ງເພີ່ມຄວາມຕື່ນເຕັ້ນດີໃຈເປັນທະວີຄູນຂຶ້ນ.

ແຕ່ຄິດໄປຄິດມາ ລູກກໍຫາໄດ້ເຈັດເດືອນ ເປັນຫຍັງຄືລົງເສົາໄວແທ້ຊັ້ນ! ຄວາມກັງວົນກໍ່ໂຕຂຶ້ນອີກຄັ້ງ ເພາະຖ້າເປັນຄືເພິ່ນເວົ້າແທ້ກໍຢ້ານວ່າຊິເກີດກ່ອນກຳນົດ ທ້ອງກະຍັງບໍ່ໃຫຍ່ຫຼາຍ ຈຶ່ງໄດ້ແຕ່ພາວະນາເຖິງແມ່ນລູກຈະເກີດຕອນໃດກໍຂໍໃຫ້ລູກແຂງແຮງຄືບສາມສິບສອງແມ່ກໍພໍໃຈແລ້ວ.

ສະພາບອາກາດຊ່ວງນັ້ນກໍປ່ຽນແປງຕະຫຼອດ ເລີຍປັບໂຕນຳບໍ່ທັນ ຫວັດໄອຈຶ່ງມາຖາມຂ່າວ ບໍ່ແມ່ນຖາມຂ່າວທຳມະດາ ແຕ່ຖາມຈົນບໍ່ໄດ້ຫຼັບໄດ້ນອນ ເພາະໄອຈົນບໍ່ໄດ້ຢູ່ໄດ້ເຊົາ ທັງເວັນ ທັງຄືນ ໄອຫຼາຍຈົນເຈັບຄໍ ປາກເກືອບບໍ່ອອກສຽງ, ທັງນ້ຳມູກກໍຍ້ອຍ ເຊັດດັງຈົນແດງ ທັງແສບ ຊິກິນຢາກໍກິນບໍ່ໄດ້ກິນໄດ້ແຕ່ນ້ຳຂີງອຸ່ນໆ ມັນກໍຊ່ວຍຫຍັງບໍ່ໄດ້ຫຼາຍ.

ຂ້າພະເຈົ້າໄອຫຼາຍຈົນເມື່ອຍມີແຕ່ຢາກນອນນັ່ງບໍ່ພໍສິບນາທີຕ້ອງແມ່ນລົ້ມຫົວລົງນອນໂລດ, ຍ່າງບໍ່ພໍເທົ່າໃດກໍເມື່ອຍ ຄືແຂນຂາຊິເປັນລ່ອຍ ຫາຍໃຈກໍບາດໃຫຍ່ໆ ຄືຄົນໃກ້ຈະໝົດແຮງ ທັງມືນຕາກໍບໍ່ຂຶ້ນ ຖ້າຊິນອນຫຼາຍກໍຄືງບໍ່ດີປານໃດ ແຕ່ມັນກໍຈຳເປັນເພາະບໍ່ມີແຮງເຮັດຫຍັງແທ້ໆ.

### ອາທິດທີ 27

ໃນໂລກນີ້ບໍ່ມີຫຍັງທີ່ແນ່ນອນ ເຮົາບໍ່ຄວນປະໝາດ ບໍ່ວ່າຈະເລື່ອງໃດ ໂດຍສະເພາະເລື່ອງທີ່ບໍ່ຄາດຄິດ ຫຼືອຸບັດຕິເຫດມັກເກີດຂຶ້ນໄດ້ສະເໝີ ເຖິງແມ່ນເຮົາຈະລະວັງດີປານໃດກໍຕາມ.

ໃນມື້ທີ່ຫມໍນັດໄປຝາກທ້ອງຂ້າພະເຈົ້າກໍຂັບລົດໄປຄືນດຽວຄືທຸກເທື່ອ ເພາະສຸກສາລາບ້ານກໍຢູ່ບໍ່ໄກ ຄົງຈະບໍ່ມີບັນຫາຫຍັງ, ຂ້າພະເຈົ້າກໍຂັບລົດໄປຢ່າງຊ້າໆ ແຕ່ພໍຮອດຄ້ອຍລົງພູແຖວໂຮງຮຽນ ກໍພະຍາຍາມຄ່ອຍທີ່ສຸດແລ້ວແຕ່ກໍປ່າງງ່າງລົງຫັ້ນຈົນໄດ້ ຄົງເພາະທາງມື່ນຈາກຝົນຕົກມື້ຄືນນີ້ແດ່, ຄວາມຄິດດຽວຕອນນັ້ນຄື ລູກຊິໄດ້ຮັບອັນຕະລາຍຫຍັງບໍ່? ຂ້າພະເຈົ້າເປັນແມ່ທີ່ບໍ່ໄດ້ເລື່ອງເລີຍ ນາທີນັ້ນຄິດຫາແຕ່ໂຮງໝໍ ຕ້ອງຟ້າວໄປໂຮງໝໍໃຫ້ໄວທີ່ສຸດ ເພື່ອກວດເບິ່ງວ່າລູກໄດ້ຮັບການກະທົບກະເທືອນຫຍັງບໍ!.

ພໍລຸກຂຶ້ນໄດ້ຂ້າພະເຈົ້າກໍຟ້າວຂັບລົດໄປຫາໝໍທັນທີໂດຍບໍ່ສົນໃຈວ່າຕົນເອງມີບາດແຜບ່ອນໃດແດ່ໃນຂະນະທີ່ໄປຫາໝໍນັ້ນ ກໍຄິດຫ່ວງແຕ່ລູກ ໃນໃຈອອກຮ້ອນຮົນ ແຕ່ກໍຂັບລົດຢ່າງມີສະຕິທີ່ສຸດໄຄແຕ່ຄລີນິກຢູ່ບ້ານເພິ່ນເປີດຈຶ່ງບໍ່ໄດ້ຂັບລົດໄປຮອດໂຮງໝໍໃຫຍ່ທີ່ຢູ່ໄກກວ່າ.

ພໍໄປຮອດຂ້າພະເຈົ້າກໍຟ້າວເຂົ້າໄປຫາທ່ານໝໍທັນ



ທີ ແລ້ວຟ້າວເລົ່າເຫດການທີ່ເກີດຂຶ້ນໃຫ້ຟັງດ້ວຍຄວາມກະວົນກະວາຍໃຈ.

"ກວດຕອນນີ້ເລີຍກໍບໍ່ຮູ້ຫຍັງມີແຕ່ໃຫ້ເມືອນອນພັກຜ່ອນ ກິນອາຫານບຳລຸງຕາມປົກກະຕິ ເບິ່ງອາການຖ້າບໍ່ມີຫຍັງຜິດປົກກະຕິກໍບໍ່ເປັນຫຍັງ" ເຖິງທ່ານໝໍຈະບອກບໍ່ເປັນຫຍັງ ແຕ່ກໍຍັງບໍ່ສະບາຍໃຈ ຢາກໃຫ້ເພິ່ນກວດໃຫ້ລະອຽດ.

"ຊັ້ນກໍເອໂກໃຫ້ເຮົາແດ່ ແລ້ວລະຊິໄປຝາກທ້ອງຢູ່ສຸກສາລາ" ເມື່ອຜົນເອໂກອອກມາວ່າປົກກະຕິດີ ຈຶ່ງໄດ້ສະບາຍໃຈຂຶ້ນແດ່ ແຕ່ກໍຕ້ອງເຝົ້າເບິ່ງນຳ ຖ້າມີອາການຜິດປົກກະຕິໃດໆແມ່ນຕ້ອງຟ້າວໄປໂຮງໝໍທັນທີແຕ່ເວລາຜ່ານໄປເປັນອາທິດກໍບໍ່ມີຄວາມຜິດປົກກະຕິໃດໆ.

### ອາທິດທີ 28

ເຫດການໃນອາທິດກ່ອນ ເຮັດໃຫ້ຂ້າພະເຈົ້າບໍ່ຢາກຈັບຮອດລົດຈັກຊ້ຳ ແລ້ວຄືນທີ່ກັງວົນ ແລະເປັນຫ່ວງກວ່າ ກໍແມ່ນແຟນຂ້າພະເຈົ້າເອງແລ້ວອາທິດນີ້ກໍຈະສິ້ນສຸດການໂທວີດີໂອເບິ່ງໜ້າກັນລະ ເພາະລາວໄດ້ຍ້າຍມາເຮັດວຽກຢູ່ໃກ້ບ້ານພີ້ແລ້ວ.

ຊ່ວງນີ້ລູກກໍເໜັງແຮງຂຶ້ນ ແລະເໜັງຖີ່ຂຶ້ນ ບາງເທື່ອກໍເໜັງລັກສະນະເປັນຄື້ນໆລອງລູບເບິ່ງກໍຈະແຂງໆ ບາງເທື່ອກໍເຫັນຄ້າຍຄືແຂນ ຕີນ ແລະມືນໆຄືກັບຫົວໂປຂຶ້ນ ທຸກເທື່ອ



ທີ່ເຫັນເຮັດໃຫ້ໃຈເຕັ້ນຕຸບໆໃນຫົວກໍຈິນຕະນາການໄປເຖິງໃບໜ້ານ້ອຍໆ ດວງຕາໃສໆ ລູກອອກມາຈະຄືພໍ່ ຫຼືແມ່ນໍ່າ!.

ເວລາຫຍັບໃກ້ເຂົ້າມາເທື່ອລະໜ້ອຍໆອີກບໍ່ດົນແລ້ວທີ່ເຮົາຈະເຫັນໜ້າກັນ. ແຕ່ເວລາແຮ່ງໃກ້ເຂົ້າມາທໍ່ໃດກໍປະຕິເສດບໍ່ໄດ້ເຖິງຄວາມກັງວົນ ແຮ່ງໄດ້ຍິນໝູ່ເລົ່າໃຫ້ຟັງເຖິງຄວາມເຈັບປວດຕອນໃກ້ຊິເກີດ ຂ້າພະເຈົ້າຍອມຮັບວ່າຄືດຢ້ານ ແຕ່ເມື່ອນຶກເຖິງໜ້າລູກຄວາມກັງວົນກໍຫຼຸດລົງ.

ຊ່ວງນີ້ເປັນອີກຊ່ວງ ທີ່ຂ້າພະເຈົ້າບໍ່ຄ່ອຍຢາກກິນເຂົ້າປານໃດ ຂອງຫວານ ຂອງສົ້ມກໍບໍ່ຄິດຢາກ ໝົດມື້ບໍ່ໃຫ້ກິນເລີຍກໍຍັງໄດ້ ຈະກິນກໍແຕ່ນ້ຳພຽງເລັກນ້ອຍ ແຕ່ເມື່ອນຶກເຖິງລູກໃນທ້ອງແລ້ວ ຢາກບໍ່ຢາກກໍຕ້ອງກິນປະຕິເສດບໍ່ໄດ້.

ອາດເປັນເພາະວ່າຄັດທ້ອງນຳແດ່ ເລີຍບໍ່ແຊບເຂົ້າຕີນມືກໍເລີ່ມໃຄ່ຂຶ້ນມາອີກ ຫຼັງຈາກທີ່ເຊົາໄປໄດ້ສອງສາມທິດແຮ່ງໃກ້ເຖິງເດືອນຄອງ ແຂນຂາຕີນມືກໍແຮ່ງໃຄ່ຂຶ້ນເບັ່ງອຶ່ງຕຶ່ງ,ທ້ອງກໍເຄັ່ງຢູ່ຕະຫຼອດຈະນັ່ງຈະນອນກໍຍາກເຄັ່ງພໍປານແກ້ມເດັກນ້ອຍຍາມໝາວ ທີ່ເປັນແບບນີ້ຄົງເພາະລູກໃຫຍ່ຂຶ້ນໄວຄືທ່ານໝໍວ່າໃກ້ເດືອນຄອງເທົ່າໃດລູກກໍຈະໃຫຍ່ຂຶ້ນໄວຂ້າພະເຈົ້າຢ້ານວ່າມັນເຄັ່ງຫຼາຍແລ້ວມັນຊິຍະແຕກອອກເປັນຮອຍຄືແຜນທີ່ຄັກໆແຫຼະ! ແຕ່ແຟນຂ້າພະເຈົ້າຜັດວ່າ:

"ບໍ່ເປັນຫຍັງດອກ ທ້ອງລາຍຄືແຜນທີ່ກໍດີແຫຼະ ເຮົາຈັ່ງຊິຮູ້ທາງກັບ ບາດວ່າມື້ໃດຫາກເຜີເດີນຫຼົງທາງໄປ ແຜນທີ່ນີ້ມັນຈະຊ່ອຍເຕືອນສະຕິເຮົາສອງຄົນໃຫ້ໄປຖືກທາງ".



## VIII. ຖາມພ້ອມ

### ອາທິດທີ 29

ເມື່ອລູກໂຕໃຫຍ່ຂຶ້ນ ກໍເລີ່ມເໜັງແຮງຂຶ້ນເລື້ອຍໆຕາມດີຍາມມື້ເຊົ້າຕື່ນນອນມາກໍຈະຖີບທ້ອງແມ່ຕຸບໆສົງໄສວ່າລູກຄົງຈະອອກກຳລັງກາຍແມ່ນບໍ! ນີ້ກໍກ້າວເຂົ້າເດືອນທີແປດແລ້ວທີ່ຄົນນ້ອຍຢູ່ໃນທ້ອງ ຍັງອີກພຽງແຕ່ເດືອນປາຍເຮົາກໍຈະໄດ້ພົ້ໜ້າກັນແລ້ວ, ຊ່ວງນີ້ກໍຍັງກິນຫຍັງບໍ່ໄດ້ຫຼາຍເພາະທ້ອງເຄັ່ງອຶ່ງຕຶ່ງ ຈຶ່ງຫິວຢູ່ຕະຫຼອດ ເຫັນຫຍັງກໍແມ່ນຢາກໄປໝົດ ແຕ່ເສຍດາຍກິນສອງສາມຄຳກໍແໜ້ນທ້ອງແລ້ວດັ່ງນັ້ນ, ຂ້າພະເຈົ້າຈຶ່ງເລືອກກິນສະເພາະແຕ່ໝາກໄມ້ເປັນສ່ວນຫຼາຍ ເພາະຂອງຫວານປະເພດແປ້ງ ຫຼືຂອງຄາວກິນໄດ້ພຽງໜ້ອຍດຽວ ເລື່ອງສົ້ມກໍບໍ່ຄ່ອຍຢາກບໍ່ຄ່ອຍກິນເພາະຢ້ານເຈັບທ້ອງແດ່.

ທັງແໜ້ນທ້ອງ ທັງຮູ້ສຶກເມື່ອຍ ຄົງຍ້ອນນອນບໍ່ພຽງພໍ ເພາະຖ້າແມ່ນຮູ້ເມື່ອບໍ່ວ່າຍາມໃດກໍແມ່ນນອນບໍ່ຫຼັບໂລດຈົນແຈ້ງ, ໃນບາງຄັ້ງກໍຮູ້ສຶກເຈັບທ້ອງ ເຈັບແປັບຂຶ້ນມາເປັນບາດໆຄ້າຍຄືວ່າມີຫຍັງສຽບແທງນີ້ແຫຼະ ທີ່ເປັນແບບນີ້ຄົງຍ້ອນລູກຖີບແຮງເໜັງແຮງຂຶ້ນ ເພາະຊ່ວງນີ້ລູກຄົງເລີ່ມປີ້ນຫົວແລ້ວ ເວລາເໜັງກໍຈະເປັນຄື້ນໆ ເຫັນເປັນຄູຂຶ້ນຕາມໜ້າທ້ອງລູບເບິ່ງແຂງໆຄົງຈະແມ່ນແຂນສອກລູກ ຫຼາຍຄົນຄົງ

ສົງໄສແມ່ນບໍ່ວ່າຮູ້ໄດ້ແນວໃດວ່າເປັນສ່ວນໃດຂອງລູກພໍກໍບໍ່ແມ່ນ  ຂ້າພະເຈົ້າອາດຈະບໍ່ແມ່ນໝໍແຕ່ຂ້າພະເຈົ້າກໍມີສັນຊາດຕະຍານຂອງຄວາມເປັນແມ່ ມັນເປັນສໍາຜັດພິເສດ ທີ່ແມ່ທຸກຄົນຕ້ອງມີຂ້າພະເຈົ້າເຊື່ອແບບນັ້ນ.

ນອກຈາກນັ້ນແລ້ວຍາມກາງຄືນຍັງມັກເຈັບຂາປັ້ນມາເປັນບາດໆ ປັ້ນມາເທື່ອໃດຄືໃຈຊິຂາດເໜັງກໍບໍ່ໄດ້ ໄຄແຕ່ວ່າແຟນຢູ່ນໍາ ຈຶ່ງຊ່ອຍບີບໃຫ້ ລາວເອງກໍເລີຍບໍ່ໄດ້ນອນໄປນໍາ.

## ອາທິດທີ 30

ຕາມທີ່ປູ່ຍ່າຕາຍາຍປະຕິບັດສືບຕໍ່ກັນມາສ່ວນຫຼາຍແລ້ວ ແມ່ມານທີ່ໃກ້ຈະຮອດເດືອນຄອງ ຫຼືຮອດເດືອນຄອງແລ້ວ ຕ້ອງໄດ້ເຮັດພິທີເສັ້ນ ຫຼືເຢົາ ແກ້ພົກແກ້ພາ ເພື່ອໃຫ້ລູກເກີດງ່າຍກໍາດີ ລ້ຽງງ່າຍໃຫຍ່ສູງ ແລະເພື່ອຄວາມປອດໄພຂອງທັງແມ່ ແລະລູກບາດຍາມເກີດ.

ຟັງເບິ່ງຄືວ່າງົມງວາຍນີ້ ແຕ່ຕ້ອງເຂົ້າໃຈວ່າເມື່ອກ່ອນໂຮງໝໍບໍ່ມີຫຼາຍ ຄົນບ້ານນອກຄອກນາ ພໍຍາມເຈັບເປັນຈຶ່ງຈໍາຕ້ອງອາໄສຜີສາງຫຼືໄສຍະສາດ ເພື່ອເປັນທີ່ເພິ່ງ ຈົນກາຍມາເປັນຮີດຄອງຢ່າງນຶ່ງຂອງພວກເຮົາ ເພາະໄດ້ສືບຕໍ່ກັນເຮັດມາດົນນານແລ້ວ, ອີກຢ່າງຄ່າໃຊ້ຈ່າຍກໍບໍ່ໄດ້ຫຼວງຫຼາຍເທົ່າໃດ  ຖ້າເຮັດແລ້ວສະບາຍໃຈ  ຂ້າພະເຈົ້າກໍຄິດວ່າບໍ່ມີຫຍັງເສຍຫາຍ.



ພິທີກໍາດັ່ງກ່າວຈະປະກອບມີເຫຼົ້າ1ໄຫ, ໄກ່ຕົ້ມ, ເຂົ້າສານ 1 ຖ້ວຍ, ໄຂ່ໄກ່ລາດ 1 ໜ່ວຍ ພ້ອມດອກໄມ້ທູບທຽນ ແລະເງິນຄາຍອີກຈໍານວນນຶ່ງ, ພິທີກໍານີ້ຈະມີພໍ່ໝໍຄົນນຶ່ງດໍາເນີນພິທີ ແລະຜູ່ເຖົ້າຜູ່ແກ່ບ້ານໃກ້ເຮືອນຄຽງກໍຈະພາກັນມາເຕົ້າໂຮມເຝົ້າຄາຍເຢົານີ້ ມັນແປກຢູ່ວ່າເຖິງເຮົາຈະລົມກັນຟົດຟື້ນສໍ່າໃດ ພໍ່ໝໍເພິ່ນກໍຈະເລົ່າຄວາມເຢົາເພິ່ນໄປແບບບໍ່ຂ້ອງບໍ່ຄາເປັນຊົ່ວໂມງໆຄືຈັ່ງວ່າເພິ່ນຢູ່ຄົນດຽວ, ແລ້ວທີ່ໜ້າຕື່ນເຕັ້ນອີກຢ່າງກໍແມ່ນ ແປວໄຟແລະຄົມດາບຄົມງ້າວແມ່ນບໍ່ໄດ້ກິນຜິວໜັງເພິ່ນພໍໜ້ອຍ, ພິທີກໍາດັ່ງກ່າວກິນເວລາໄປເຄິ່ງມື້ ຫຼັງຈາກແລ້ວພິທີກໍເຮັດບາສີສູ່ຂວັນ  ແລ້ວກໍກິນເຂົ້າສາມັກຄີກັນ.

ຈະວ່າໄປແລ້ວພິທີກໍານີ້ກໍເຮັດເພື່ອຄວາມສະບາຍໃຈ, ແລ້ວພໍ່ໝໍເພິ່ນຍັງສ່ຽງທາຍອີກວ່າຈະໄດ້ລູກຍິງ ຫຼືຊາຍ ປາກົດວ່າຊິໄດ້ລູກຍິງເຊິ່ງຕ່າງຈາກຜົນເອໂກ ເຮັດໃຫ້ຂ້າພະ-ເຈົ້າເກີດມີຄວາມຕື່ນເຕັ້ນຢາກຮູ້ໄວໆວ່າຊິເປັນຍິງຫຼືຊາຍກັນແທ້ ເຖິງຢ່າງໃດກໍຕາມຈະເປັນຍິງ ຫຼືຊາຍກໍແມ່ນລູກ ກໍຮັກໝົດທັ້ນແລ້ວ.

ຕົກມາອາທິດນີ້ກໍຍັງຮູ້ສຶກຢູ່ຍາກ ເວລາລູກເໜັງບາງເທື່ອກໍເຈັບ ແລະລູກກໍເໜັງຢູ່ຕະຫຼອດ, ຫຼາຍຄົນກໍວ່າບໍ່ແມ່ນໃກ້ຊິເກີດລະບໍ່ ແຮ່ງເຮັດໃຫ້ຕື່ນເຕັ້ນຂຶ້ນມາອີກ ເພາະບໍ່ຮູ້ວ່າລູກຊິອອກມື້ໃດ ອາດເປັນມື້ນີ້ ມື້ອື່ນ ຫຼືມື້ໃດກໍບໍ່ຮູ້, ສະນັ້ນຂ້າພະເຈົ້າຈຶ່ງກຽມຕົວໃຫ້ພ້ອມຢູ່ຕະຫຼອດເວລາ ຖ້າເຈັບຂຶ້ນມາກໍແມ່ນໄປໂຮງໝໍໂລດ.



## ອາທິດທີ 31

ມາຮອດອາທິດນີ້ ແຮ່ງຮູ້ສຶກວ່າຢູ່ຍາກຫຼາຍກວ່າເກົ່າ ທ້ອງກໍຄັດຈົນຫາຍໃຈຝືດ ບໍ່ວ່າຈະເຮັດຫຍັງກໍຕາມ ລຸກກໍຍາກນອນກໍຍາກ ລູກກໍເໜັງແຮງທັງເຈັບ ຈົນຈຸກ ແລ້ວກໍຮູ້ສຶກເມື່ອຍທັງເພຍ, ແຕ່ກໍຍັງໄຄທີ່ພໍນອນໄດ້ຢູ່ ແຕ່ຕີນມືໄຄ່ຂຶ້ນແຖມຍັງອອກຮ້ອນທຸດໆ ທັງງຸດງິດງ່າຍແມ່ນຫຍັງບໍ່ຖືກໃຈໜ້ອຍນຶ່ງກໍແມ່ນຢາກຮ້າຍໃສ່ໂລດ.

ສ່ວນເລື່ອງກິນແມ່ນຢາກທັ້ນຢາກນີ້ຢູ່ຕະຫຼອດທັງທີ່ກິນຫຼາຍກໍບໍ່ໄດ້, ນັ່ງດົນກໍປັ້ນທ້ອງແຂງຂຶ້ນມາໂລດ ດ້ວຍຄວາມກັງວົນແດ່ຂ້າພະເຈົ້າຈຶ່ງໄປກວດເບິ່ງອີກ.

"ບໍ່ເປັນຫຍັງດອກເດີ້! ເປັນເລື່ອງທໍາມະດາແຮ່ງລູກໃຫຍ່ກໍແຮ່ງຖີບແຮງ ທັງເຈັບນໍາເປັນທໍາມະດາ" ຈາກນັ້ນໝໍກໍເອໂກໃຫ້ ແລ້ວເວົ້າວ່າ:

"ທ້ອງນ້ອຍໆແຕ່ລູກຜູ່ໃຫຍ່ນີ້  ໄດ້ຕັ້ງສອງໂລປາຍ" ນັ້ນໝາຍຄວາມວ່າລູກໂຕໃຫຍ່ຂຶ້ນນໍ້າໜັກເພີ່ມຂຶ້ນເປັນກິໂລຈາກເດືອນແລ້ວນີ້,  ຂ້າພະເຈົ້າບໍ່ຄິດວ່າລູກຊິຂະຫຍາຍໂຕໄວປານນີ້ ແຕ່ກໍດີທີ່ລູກແຂງແຮງ ທັງມັກເໜັງຢູ່ຕະຫຼອດຕາມດີໃນເວລາທ່ານໝໍເພິ່ນກວດຈົນເພິ່ນອອກປາກທ້ວງ:

"ຈັ່ງແມ່ນເໜັງດີນີ້!" ແລ້ວເພິ່ນຍັງບອກອີກວ່າ:

"ລູກປິ້ນຫົວແລ້ວ ແຕ່ຢູ່ຕໍ່າໆ" ຂ້າພະເຈົ້າກໍສົງໄສ ບໍ່ແມ່ນຊິເກີດລະບໍ່?



"ເດືອນໜ້າພຸ້ນແຫຼະ" ຖ້າຍັງອີກເປັນເດືອນລູກກໍຄົງໂຕໃຫຍ່ຂຶ້ນອີກ ຄືຊິໄດ້ສາມໂລປາຍພຸ້ນລະນີ້!.

## ອາທິດທີ 32

ແຮ່ງເວລາມໍ່ເຂົ້າມາເທົ່າໃດ  ແຮ່ງຕື່ນເຕັ້ນ  ທັງຢ້ານບາດຕອນຊິເກີດ ເຫັນຄົນຢູ່ບ້ານເພິ່ນນານເກີດກາຍກໍານົດໄປຫຼາຍມື້ ລູກອອກມາກໍບໍ່ແຂງແຮງໄດ້ນອນອົບຢູ່ໂຮງໝໍຕັ້ງຫຼາຍມື້ ເພິ່ນວ່າເປັນນໍາລູກໄດ້ກິນນໍ້າຄາວປາແມ່, ຂ້າພະເຈົ້າແຮ່ງກັງວົນຖ້າຄົບອາທິດເກີດແລ້ວຍັງບໍ່ເກີດຂ້າພະເຈົ້າຈະບໍ່ລໍໃຫ້ມັນກາຍໄປຫຼາຍດອກ ຈະໄປປາດອອກໂລດເພາະຢ້ານລູກຊິເປັນຫຼາຍແນວ.

ແຮ່ງນັບມື້ແຮ່ງຢູ່ຍາກ ທັງນັ່ງທັງນອນກໍຄືວ່າຄັດໄປໝົດ  ຈົນວ່າຢາກໃຫ້ເກີດໄວໆ  ແຕ່ຖ້າບໍ່ຮອດກໍານົດກໍຢ້ານລູກບໍ່ແຂງແຮງອີກ ຄວາມຄິດສັບໄປວົນມາເຕັມດ້ວຍຄວາມຢ້ານ  ແລະກັງວົນ  ຍິ່ງຊ່ວງທິດນີ້ແຮ່ງມັກເຈັບທ້ອງເລື້ອຍໆ, ທັງແຟນກໍຮ້ອນໃຈບໍ່ໜ້ອຍ  ລາວຈະຖາມຕະຫຼອດວ່າ  ເປັນແນວໃດ? ເຈັບແຮງແລ້ວບໍ? ໄປໂຮງໝໍບໍ? ລາວຄົງເຫັນຂ້າ-ພະເຈົ້າຢູ່ຍາກຈຶ່ງເປັນຫ່ວງຫຼາຍ.

ດ້ວຍຄວາມວ່າບໍ່ເຄີຍຖືພາມີລູກມາກ່ອນ ຈຶ່ງບໍ່ຮູ້ວ່າອາການເຈັບທ້ອງໃກ້ຊິເກີດເປັນແນວໃດ  ບາງທີລູກເໜັງແຮງເຈັບກໍຄິດວ່າບໍ່ແມ່ນຊິເກີດລະບໍ  ຫຼາຍເທື່ອທີ່ຄິດຈະໄປຫາໝໍ

ແຕ່ຫຼາຍຄົນກະວ່າເຈັບທ້ອງຊິເກີດບໍ່ເປັນແນວນີ້ດອກ ບາງຄົນກໍວ່າເຈັບມາເປັນບາດໆບາງຄົນຜັດວ່າເຈັບແຕ່ແອວບາງຄົນທັງເຈັບທັງປັ້ນທ້ອງແຮງຫຼາຍຄົນຫຼາຍແນວເຈັບແລ້ວຕົນເອງຊິເຈັບໃນຮູບແບບໃດນໍ! ໄດ້ແຕ່ຖ້າມື້ໃດມີອາການເຈັບແປກໆກໍຈະໄປໂຮງໝໍທັນທີ.

ຊ່ວງນີ້ຮູ້ສຶກແປກຄືຄັດທ້ອງຢູ່ຍາກ ແຕ່ຜັດກິນໄດ້ຕະຫຼອດຄືວ່າອິ່ມບໍ່ເປັນ ແລະກໍຮູ້ສຶກວ່າເມື່ອຍໆມີແຕ່ຢາກນອນຕາມດີຕອນເຊົ້າ ຕື່ນນອນມາ 6 ໂມງກິນເຂົ້າກິນນ້ຳແລ້ວກໍແມ່ນເລີ່ມຢາກນອນອີກ ແຕ່ກໍບໍ່ໄດ້ນອນຕາມໃຈ ເພາະຖ້ານອນຕອນສວາຍຫຼາຍກາງຄືນມາຊິນອນບໍ່ຫຼັບ ສະນັ້ນຈຶ່ງຫາແນວເຮັດ ແຕ່ບໍ່ຮູ້ຊິເຮັດຫຍັງ ຊິອ່ານໜັງສືກໍປານກັບກິນຢານອນຫຼັບຕື່ມອີກ, ຊິເບິ່ງໂທລະທັດກໍນັ່ງດົນບໍ່ໄດ້ ຖ້ານອນເບິ່ງກໍແມ່ນຫຼັບໂລດ.

ມີອີກຢ່າງທີ່ຜູ່ເຖົ້າເພິ່ນວ່າຂະລຳ ຄືບໍ່ຢາກໃຫ້ກຽມເຄື່ອງໃຊ້ແອນ້ອຍໄວ້ຖ້າ ແຕ່ຂ້າພະເຈົ້າຄິດວ່າການທີ່ເຮົາກະກຽມເຄື່ອງທຸກຢ່າງໄວ້ໝົດແລ້ວນັ້ນມັນຈະເປັນການສະດວກກວ່າ ຂ້າພະເຈົ້າຈຶ່ງໄດ້ກະກຽມເຄື່ອງໃຊ້ທຸກຢ່າງໄວ້ຮຽບຮ້ອຍໝົດເລີຍ ເພື່ອຈະບໍ່ຍາກໃສ່ຄົນອື່ນບາດຍາມເກີດ ເພາະເຖິງຕອນນັ້ນຕົນເອງຄົງເຮັດຫຍັງຫຼາຍບໍ່ໄດ້.



## IX. ຄວາມເຈັບປວດທີ່ງົດງາມ

### ອາທິດທີ 33

ພໍເລີ່ມກ້າວເຂົ້າເດືອນຄອງ ຄວາມຕື່ນເຕັ້ນກໍແຮ່ງເພີ່ມຂຶ້ນ ຊ່ວງນີ້ໄດ້ແຕ່ຄອຍສັງເກດຢູ່ຕະຫຼອດ ຖ້າມີອາການໃດຜິດປົກກະຕິກໍແມ່ນຈະໄປໂຮງໝໍທັນທີໂລດ ແຕ່ຊ່ວງທິດນີ້ເຈັບກົກຂາເບື້ອງຂວາຫຼາຍ ຊິລຸກຊິນັ່ງກໍຍາກ ແຮ່ງວ່ານັ່ງດົນບໍ່ໄດ້ ຊິຍ່າງກໍຍ່າງຍາກ ເພາະມັນປວດໄປໝົດຄືຈັ່ງວ່າມີຂອງແຫຼມໆຄົມໆສຽບແທງຢູ່.

ຍ້ອນຈັ່ງຊັ້ນຈຶ່ງຄືວ່າເມື່ອຍຫຼາຍ ທ້ອງກໍມັກປັ້ນແລະລູກກໍບໍ່ຄ່ອຍເໜັງປານໃດ ບາງມື້ກໍເຫັນມີນ້ຳມູກເລືອດມູກຂາວອອກແດ່ໜ້ອຍນຶ່ງ ແຕ່ກໍບໍ່ມີອາການເຈັບໃດໆ ມີແຕ່ຢູ່ຍາກຊື່ໆ ຍັງໄຄທີ່ພໍນອນໄດ້ ເລື່ອງຂອງຢູ່ຂອງກິນ ກໍກິນໄດ້ປົກກະຕິ ແຕ່ຈະມີອາການປວດຮາກນຳ ຕີນມືກໍໃຄ່ຂຶ້ນຈົນເກືອບວ່າຈະກຳບໍ່ໄດ້ ຄົງຍ້ອນຕຸ້ຍຂຶ້ນຫຼາຍແດ່ ລວມໆແລ້ວຕັ້ງແຕ່ມື້ຖືພາມານີ້ນ້ຳໜັກກໍເພີ່ມຂຶ້ນສິບກວ່າໂລແລ້ວ.

ຍ້ອນຄວາມຮ້ອນໃຈຈຶ່ງໄດ້ໄປກວດອີກຄັ້ງ ແຕ່ທ່ານໝໍກໍວ່າ ຍັງບໍ່ເກີດເທື່ອ ແຕ່ຄືອີກບໍ່ດົນແລ້ວລະ ເພາະລູກລົງຢູ່ຕ່ຳແລ້ວ.



### ອາທິດທີ 34

ມາອາທິດນີ້ຜັດຮູ້ສຶກເບົາຕົນເບົາໂຕຂຶ້ນ ຂາກໍບໍ່ປວດທ້ອງກໍບໍ່ປັ້ນຫຼາຍ ທັງອາຫານກໍກິນໄດ້ຫຼາຍຂຶ້ນ ແຂ່ງຂາຕີນມືທີ່ໃຄ່ບວມກໍຄືວ່າແຫ່ວລົງແດ່ ຍ້ອນເຫດນີ້ຈຶ່ງພັກຜ່ອນໄດ້ເຕັມທີ່ ເພາະກາງຄືນກໍນອນຫຼັບດີ.

ແຕ່ແຮ່ງເວລາຫຍັບໃກ້ເຂົ້າມາທໍ່ໃດຄວາມຕື່ນເຕັ້ນກໍແຮ່ງເພີ່ມຂຶ້ນ ເພື່ອໃຫ້ຄວາມຕື່ນເຕັ້ນຫຼຸດລົງ ຊ່ວງທິດນີ້ຂ້າພະເຈົ້າຈຶ່ງອ່ານແຕ່ໜັງສືໂດຍສະເພາະຄູ່ມືແມ່ມືໃໝ່ ທັງເປີດເບິ່ງວີດີໂອຕ່າງໆທີ່ກ່ຽວກັບການລ້ຽງລູກແລະອາການຂອງແມ່ທີ່ໃກ້ຈະເກີດ ເພື່ອຈະໄດ້ກຽມຕົວໄວ້.

### ອາທິດທີ 35

ແຕ່ຕົກມາທິດນີ້ ຜັດຮູ້ສຶກເມື່ອຍ ທັງທ້ອງກໍຄືວ່າປັ້ນຖີ່ຂຶ້ນ ແລະບາງເທື່ອກໍຮູ້ສຶກເຈັບມາເປັນບາດໆ ສ່ວນເລື່ອງອາຫານຜັດບໍ່ຄຶດຢາກຫຍັງ, ຕີນມືກໍເລີ່ມໃຄ່ບວມຂຶ້ນອີກ ທັງມັກວິນຫົວປວດຮາກຢູ່ເລື້ອຍໆ ໄດ້ກິ່ນຫຍັງໜ້ອຍນຶ່ງກໍແມ່ນຮາກແຕກຮາກແຕນອອກໂລດ.



ຍາມນອນກາງຄືນ ເກືອບວ່າແມ່ນນອນທ່າດຽວຈົນເກືອບແຈ້ງ ເພາະພື້ນຄືງຍາກ ຍ້ອນທ້ອງປັ້ນຈົນແຂງ ຂາກໍຮູ້ສຶກເຈັບ ທັງປັ້ນມາເປັນບາດໆ ເໜັງກໍເໜັງບໍ່ໄດ້, ເລີຍເປັນໜ້າທີ່ແຟນ ທີ່ຕ້ອງໄດ້ບີບຂາໃຫ້ ຈົນລາວກໍເກືອບບໍ່ໄດ້ນອນອີກຢ່າງກໍກັງວົນເພາະບໍ່ຮູ້ວ່າລູກຊິອອກຍາມໃດ.

### ອາທິດທີ 36

ນັບແຕ່ກ້າວເຂົ້າອາທິດນີ້ ສາມມື້ຕົ້ນອາທິດ ແມ່ນມີອາການປັ້ນທ້ອງຕະຫຼອດມື້ເລີຍ ທັງມູກເລືອດ ມູກຂາວກໍຄືວ່າອອກຫຼາຍຂຶ້ນ ດ້ວຍຄວາມກັງວົນທັງຢ້ານ ແຟນຈຶ່ງພາໄປກວດຢູ່ໂຮງໝໍໃຫຍ່ ແລ້ວກໍເລົ່າອາການທັງໝົດໃຫ້ທ່ານໝໍຟັງ ທ່ານໝໍຈຶ່ງກວດດ້ານລຸ່ມໃຫ້ (ກວດຊ່ອງຄອດ)ຈຶ່ງໄດ້ຮູ້ວ່າມົດລູກໄຂ 5 ເຊັນແລ້ວ ສະແດງວ່າໃກ້ເວລາເກີດເຕັມທີແລ້ວ ໝໍຈຶ່ງຢາກໃຫ້ນອນຖ້າເກີດຢູ່ໂຮງໝໍເລີຍ.

ແຕ່ກໍແປກທີ່ຍັງບໍ່ມີອາການເຈັບທ້ອງເລີຍ ຈະມີກໍແຕ່ປັ້ນທ້ອງໜ້ອຍນຶ່ງ ຂ້າພະເຈົ້າຈຶ່ງຢາກກັບເມືອອາບນ້ຳສະຫົວທັງເອົາເຄື່ອງເອົາຂອງອັນຈຳເປັນຢູ່ເຮືອນກ່ອນ ຕອນແລງຈັ່ງມານອນ ແຕ່ແຟນຢາກໃຫ້ນອນຖ້າເລີຍ ເພາະລາວຢ້ານຊິເຈັບທ້ອງກາງທາງ ແຕ່ຂ້າພະເຈົ້າຂີວກິ່ນຢາຢູ່ໂຮງໝໍແຮງ

ພໍຈະເປັນວິນ ປຶກສາເອື້ອຍທີ່ໄປນຳກໍວ່າກັບບ້ານກ່ອນແລ້ວຈັ່ງມາ ເພາະຕອນລາວເຈັບທ້ອງເກີດລູກນັ້ນ ມົດລູກໄຂ 5 ເຊັນແຕ່ເຊົ້າ ຈົນເຊົ້າມື້ໃໝ່ຈັ່ງເກີດ ຈຶ່ງໄດ້ຂໍ້ສະຫຼຸບວ່າບໍ່ນອນ.

ແຕ່ທາງໄປທາງມາກໍຟ້າເອີ່ຍ! ຮ້າຍກ່ອນທາງໄປນາຂຸມລຽນຂຸມຈົນບໍ່ຮູ້ຊິຫຼີກຂຸມໃດ ຖ້າເຈັບທ້ອງເກີດຕອນນັ້ນກໍຢ້ານວ່າເກີດກາງທາງແທ້ໆແຫຼະ ຂັ້ນວ່າຂີ່ລົດຕູ້ໄປກໍປານນັ່ງລົດອີແຕັນ ປານນັ້ນເຮັດທາງສາມເລນສີ່ເລນ ເຮັດມາຕັ້ງ 5-6 ປີລະຍັງແລ້ວບໍ່ເປັນ ຍາມຝົນບວກໃດກໍຖ້ວມຫົວເຂົ່າຕີກຍາມແລ້ງຂີ້ຝຸ່ນກໍປານນ້ຳໝອກຍາມເຊົ້າເບິ່ງບໍ່ເຫັນທີບຫຍັງ ເວົ້າຮອດເລື່ອງທາງມາຄືແຮ່ງວ່າປັ້ນທ້ອງຕື່ມອີກຊໍ້າ.

ເມື່ອມາຮອດບ້ານກໍຫ້າງເຄື່ອງຈຳເປັນໄວ້, ຫຼາຍຄົນມາຫຼິ້ນນຳກໍເວົ້າວ່າຖ້າເປັນພວກເພິ່ນຕອນຖືພາຢ່າວ່າແຕ່ມົດລູກໄຂ 5 ເຊັນເລີຍ ມີແຕ່ເຊັນນຶ່ງສອງເຊັນກໍເຈັບພໍຕາຍລະ, ອັນນີ້ໄຂ 5 ເຊັນລະຍັງຍິ້ມຢູ່ເສີຍ.

ຫຼັງຈາກກິນແລງແລ້ວ ແຟນກໍຟ້າວຂົນເຄື່ອງຂຶ້ນລົດພາຂ້າພະເຈົ້າໄປໂຮງໝໍທັນທີພ້ອມເອື້ອຍ ແລະແມ່, ຂ້າພະເຈົ້າໄປຮອດໂຮງໝໍປະມານ 8 ໂມງແລງ ໝໍກໍເຈາະເອົາເລືອດໄປກວດ ແລ້ວກວດເບິ່ງຊ່ອງຄອດໄຂ 7 ເຊັນແລ້ວໝາຍຄວາມວ່າຍັງອີກພຽງ 3 ເຊັນເທົ່ານັ້ນກໍຈະເກີດ ແຕ່ວ່າຍັງບໍ່ມີອາການເຈັບໃດໆມີແຕ່ປັ້ນທ້ອງຊື່ໆ, ບໍ່ຄືຄົນທີ່ມາລໍຖ້າເກີດຢູ່ຕຽງຂ້າງໄຂພຽງເຊັນສອງເຊັນ ເບິ່ງລາວຄືເຈັບປວດແຮງຮ້ອງໂອະຮ້ອງໂອ່ຍ ທັງຈິກທັງດຶງຜົວ ເຫັນແລ້ວກໍບໍ່ຮູ້ວ່າຊິອີ່ຕົນໃຜກ່ອນ ເພາະຜົວລາວຍ້າຍໜີໄປຢູ່ໃສລາວກໍນຳໄປຈິກໄປຫິ້ນ.



ເວລາຜ່ານໄປ 7-8 ຊົ່ວໂມງຍັງເລີ່ມຮູ້ສຶກເຈັບມາເປັນບາດໆ ແຕ່ກໍຍັງບໍ່ເຈັບແຮງ ຫາກຮູ້ສຶກວິນຫົວປວດຮາກເຈັບທ້ອງຖ່າຍແດ່ ຈົນຂ້າພະເຈົ້າໄດ້ໄປຈົກຄໍຮາກຢູ່ຫ້ອງນ້ຳສອງສາມເທື່ອຈັ່ງວ່າໄຄຂຶ້ນແດ່ ທັງຕົນໂຕກໍອອກຮ້ອນຮົນໄປໝົດຊິນັ່ງກໍນັ່ງບໍ່ຕິດ ຊິນອນກໍນອນບໍ່ໄດ້ຄືຈັ່ງເມັດເລືອດກາຍເປັນແປວໄຟພວມແຜດເຜົາຮ່າງຢູ່ ໄຄແຕ່ແຟນເຊັດໂຕໃຫ້ຢູ່ຕະຫຼອດຈັ່ງພໍວ່າຢູ່ໄດ້ແດ່ ລາວເອງກໍຫົນຫວາຍຢູ່ບໍ່ຕິດບ່ອນ ກັງວົນຫຼາຍກ່ອນຂ້າພະເຈົ້າຊໍ້າ.

ເວລາຜ່ານໄປອີກຊົ່ວໂມງ ອາການດັ່ງກ່າວກໍເລີ່ມຫາຍໄປ ແຕ່ຄວມເຈັບເພີ່ມຂຶ້ນເລື້ອຍໆ ແລະຖີ່ຂຶ້ນໆ ແຟນກໍຟ້າວໄປເອີ້ນທ່ານໝໍມາເບິ່ງທັນທີ ພໍໝໍມາກວດເບິ່ງກໍວ່າ:

“ໄຂແລ້ວ 9 ເຊັນ ອົດທົນເດີ້ຍັງອີກໜ້ອຍນຶ່ງກໍພ້ອມເກີດແລ້ວ ເຈົ້າຢ່າຟ້າວເບັ່ງເດີ້ມັນຍັງບໍ່ອອກເທື່ອ ເບັ່ງໄປກໍຊິເມື່ອຍເຈົ້າລ້າໆ ໄວ້ໄປເບັ່ງໃນຫ້ອງເກີດບາດດຽວ”.

ແຕ່ໃນຕອນນັ້ນສະໝອງມັນຄຶດວົນໄປວຽນມາ ສັບສົນທັງຢ້ານ ແລະກັງວົນ ເພາະມີແມ່ມືໃໝ່ລາຍນຶ່ງທີ່ເຂົ້າໄປຫ້ອງເກີດຕັ້ງແຕ່ດົນກໍຍັງເກີດບໍ່ໄດ້ ຈົນທ່ານໝໍໄດ້ໃສ່ເຄື່ອງຊ່ອຍຫາຍໃຈໃຫ້, ແຮ່ງວ່າຕອນນັ້ນຮ່າງກາຍຄືວ່າເມື່ອຍວູບລົງອ່ອນແຮງທັງວິນຫົວລາຍຕາລິດໆ, ຄວາມເຈັບມັນກໍເພີ່ມຂຶ້ນເລື້ອຍໆ.

ຄວາມເຈັບທີ່ຫາຄຳອະທິບາຍບໍ່ໄດ້ ເຈັບແຕ່ບໍ່ປວດມີແຕ່ທໍລະມານ ມັນເຈັບຕັ້ງແຕ່ປາຍຕີນຂຶ້ນມາປັ້ນຢູ່ທ້ອງແລ້ວຂຶ້ນມາບີບໝາກຫົວໃຈ ເຈັບຈົນຊິຂາດໃຈ ມັນຜັດມາຍ



ມາພໍໃຫ້ຫາຍໃຈໄດ້ສອງສາມບາດກໍເຈັບມາອີກ ໃກ້ໃຈຊິຂາດກໍມາຍອອກ.

ເຈັບມາເທື່ອໃດໄດ້ແຕ່ຮ້ອງ ໂອ່ຍ...! ຄ່ອຍໆ ທັງຫຼັບຕາຈອດລິດ ກັດແຂ້ວຈົນປວດຄາງກະໄຕ ກຳມືໄວ້ຈົນສັ່ນໄປໝົດໂຕ ນອນຄົດຂໍຢູ່ເທິງຕຽງ ຊິຮ້ອງຊິຄາງກໍບໍ່ອອກສຽງເພາະມັນຈຸກແໜ້ນຂຶ້ນມາຮອດຄໍ ຊິໄຫ້ນ້ຳຕາກໍບໍ່ໄຫຼ ເພາະມັນເຈັບເກີນທີ່ຈະມີນ້ຳຕາ.

“ອົດທົນໄວ້ເດີ້ ເພື່ອລູກ! ອີກບໍ່ດົນເຮົາກໍຈະໄດ້ເຫັນໜ້າລູກແລ້ວ, ຂ້ອຍຢາກຮັບຄວາມເຈັບປວດທີ່ເຈົ້າມີໃນຕອນນີ້ໄວ້ເອງ ແຕ່ກໍເຮັດບໍ່ໄດ້, ອົດທົນໄວ້ເດີ້ຄົນເກັ່ງຂອງອ້າຍ!” ແຟນລາວເວົ້າພ້ອມຈັບມືຂ້າພະເຈົ້າໄວ້ຢ່າງແໜ້ນ.

ໃນສະໝອງກໍຄຶດຢ້ານໄປໝົດທຸກແນວ**ຊີວິດແຂວນເທິງເສັ້ນດ້າຍ** ເປັນແນວໃດຂ້າພະເຈົ້າກໍຫາຈະເຂົ້າໃຈມື້ນີ້ແຫຼະ ເພາະນາທີນັ້ນໄດ້ເຂົ້າໃກ້ຄວາມຕາຍທຸກຂະນະ, ສາຍຕາເລີ່ມແນມບໍ່ເຫັນຫຍັງ ທຸກຢ່າງຄືວ່າມືດດຳ ແມ່ນແຕ່ສຽງຂອງແຟນ ແລະແມ່ທີ່ເວົ້າຢູ່ຂ້າງໆ ກໍບໍ່ໄດ້ຍິນຍ້ອນຄວາມເຈັບມັນບົດບັງໄປທົ່ວ ຂ້າພະເຈົ້ານອນອົດກັ້ນໄວ້ແນວນັ້ນປະມານ 30 ນາທີ ທ່ານໝໍຈຶ່ງພາເຂົ້າຫ້ອງປະສູດ.

ໃນຂະນະທີ່ຢູ່ໃນຫ້ອງປະສູດ ຂ້າພະເຈົ້າກໍຍັງໄດ້ນອນອົດທົນລໍຖ້າທ່ານໝໍເພິ່ນກຽມອຸປະກອນຢູ່ ນະຕອນນັ້ນຢາກຮ້ອງໃສ່ທ່ານໝໍເດວ່າ“ຮູ້ຢູ່ວ່າໃກ້ຈະເກີດແລ້ວເປັນຫຍັງຄືບໍ່ກຽມໃຫ້ພ້ອມ ຄືຍັງໃຫ້ມານອນຖ້າຢູ່”.

ເວລາຜ່ານໄປປະມານ 5 ນາທີ ທ່ານໝໍກໍມາເຈາະ



ຖົງນ້ຳຄາວປາແຕກແລ້ວກໍສັ່ງໃຫ້ເບັ່ງເພື່ອເກີດຕອນນັ້ນອາການເຈັບຄືວ່າເຊົາໄປມີແຕ່ປັ້ນທ້ອງມາເປັນບາດໆ ແຮ່ງປັ້ນແຮງທໍ່ໃດ ໝໍກໍບອກໃຫ້ເບັ່ງແຮງທໍ່ນັ້ນ ເວລາຜ່ານໄປເກືອບ 15 ນາທີ ກໍຍັງບໍ່ເກີດ, ແຕ່ຮ່າງກາຍຂ້າພະເຈົ້າຕອນນັ້ນ ທັງແຂນຂາເກືອບຈະບໍ່ມີແຮງແລ້ວ ຄວາມກັງວົນແຮ່ງເພີ່ມທະວີຄູນຂຶ້ນຢ້ານແຕ່ຊິບໍ່ໄດ້ເຫັນໜ້າລູກ ບວກກັບຄຳເວົ້າທ່ານໝໍອີກວ່າ:

“ຕັ້ງໃຈເບັ່ງແມ້ ຫົວລູກອອກມາຄາຢູ່ນີ້ແລ້ວ ຖ້າປະໄວ້ດົນລູກຊິຫາຍໃຈບໍ່ໄດ້ໃດ໋ ເປັນອັນຕະລາຍຕໍ່ລູກໃດ໋ ບໍ່ອີ່ຕົນລູກຫວາ ເອົາ! ຕັ້ງໃຈໆ 1..2..3 ເບັ່ງ” ນະຕອນນັ້ນຂໍພຽງໃຫ້ລູກອອກມາຢ່າງປອດໄພ ຫົວໃຈສັ່ງວ່າຕ້ອງເຮັດໃຫ້ໄດ້ຕ້ອງຜ່ານນາທີຊີວິດນີ້ໄປໃຫ້ໄດ້ຕ້ອງເຂັ້ມແຂງອົດທົນ ຂ້າພະເຈົ້າຕ້ອງສູ້ເພື່ອລູກຈະໄດ້ປອດໄພ. ແຟນ ແລະແມ່ທີ່ລໍຖ້າຢູ່ນອກກໍຄືງນັ່ງບໍ່ຕິດ ຄືຊິຫົນຫວາຍ ທັງກະວົນກະວາຍໃຈ ລໍຖ້າຟັງສຽງໄຫ້ຂອງຄົນນ້ອຍຢູ່ຢ່າງໃຈຈົດໃຈຈໍ່.

ຢູ່ໃນຫ້ອງປະສູດຕອນນັ້ນມີທ່ານໝໍສອງຄົນ ຄົນນຶ່ງມາຊ່ອຍຍູ້ທ້ອງໃຫ້ ອີກຄົນກໍລໍຖ້າຮັບເອົາລູກ, ມາຮອດເວລານີ້ເຂົ້າໃຈແລ້ວວ່າ ແມ່ທຸກ ແລະ ເຈັບປວດສ່ຳໃດກ່ອນຈະໃຫ້ກຳເນີດຊີວິດນຶ່ງໄດ້ຕ້ອງໃຊ້ລົມຫາຍໃຈຕົນເພື່ອແລກມາ.

ເວລາຜ່ານໄປອີກປະມານ 5 ນາທີ ເທື່ອແຮງຂ້າພະເຈົ້າກຳລັງຈະໝົດລົງແຮງຊິເບັ່ງຕໍ່ໄປກໍເກືອບຈະບໍ່ມີທັງຫາຍໃຈອາງາບໆຄ້າຍປາຂາດນ້ຳ.

“ອົດທົນເດີ! ອີກໜ້ອຍນຶ່ງ ເອົາ! 1..2..3 ເບັ່ງ...!”

ຂ້າພະເຈົ້າກັ້ນຫາຍໃຈບາດໃຫຍ່ໆແລ້ວເບັ່ງສຸດແຮງທີ່ມີຕອນນັ້ນເປັນເວລາ 04:26 ໂມງ ຂອງວັນອັງຄານ ທີ 10 ຕຸລາ 2017 ແລ້ວໃນທີ່ສຸດຂ້າພະເຈົ້າກໍເຮັດໄດ້ ສຽງໄຫ້ຂອງເດັກນ້ອຍທີ່ແວ່ວເຂົ້າໃສ່ຫູມັນຄືກັບຫ່າຝົນຊັດລົງມາໃສ່ປາທີ່ພວມຈະຂາດໃຈຕາຍຢູ່ໃນໜອງທີ່ແຫ້ງແລ້ງ.

ສຳຜັດທຳອິດເຮັດໃຫ້ ຄວາມເຈັບປວດທັງໝົດຫາຍໄປປານປິດຖິ້ມ ເມື່ອລູກນ້ອຍມານອນຢູ່ເທິງເອິກ ເຊື່ອວ່າບໍ່ມີແມ່ຄົນໃດທີ່ຈະກັ້ນນ້ຳຕາໄວ້ໄດ້ ຄວາມຮູ້ສຶກທີ່ຫາຄຳມາບັນຍາຍບໍ່ໄດ້, ມືນ້ອຍໆທີ່ແມ່ຈັບໄວ້ ຮ່າງກາຍນ້ອຍໆທີ່ແມ່ໂອບກອດຢູ່ເທິງໜ້າເອິກມັນເປັນສຳຜັດທີ່ວິເສດທີ່ສຸດທີ່ຂ້າ-ພະເຈົ້າບໍ່ເຄີຍຄິດວ່າຈະໄດ້ສະຜັດມັນມາກ່ອນ.

ແຕ່ເວລາຜ່ານໄປບໍ່ເທົ່າໃດຄວາມເຈັບປວດກໍກັບມາ ຄວາມເຈັບທີ່ສຽບແທງຮອດໝາກຫົວໃຈ ຈົນຂ້າພະເຈົ້າຫຼົງຮ້ອງຂຶ້ນໝົດແຮງ.

"ຮ້ອງແຮງແທ້ ຕອນເຈັບທ້ອງເກີດບໍ່ເຫັນຊິຮ້ອງຈັກບາດ ອົດທົນເດີຊິແລ້ວລະ ໝໍກຳລັງຫຍິບເຮັດໃຫ້ເຈົ້າງາມຄືເກົ່າ ອົດທົນເດີ!" ຍອມຮັບເລີຍວ່າຕອນທີ່ໝໍຫຍິບນັ້ນມັນທັງເຈັບທັງປວດ ກໍແນວວ່າຫຍິບດິບໆບໍ່ໄດ້ໃສ່ຢຸກໃສ່ຢາຫຍັງເຈັບຈົນເກືອບກັ້ນໄວ້ບໍ່ໄດ້ພຸ້ນແຫຼະ ຍັງໄຄແຕ່ວ່າແລ້ວໄວ.

ຫຼັງຈາກຫຍິບແລ້ວ ໝໍກໍໃຫ້ຍາດພີ່ນ້ອງເຂົ້າໄປຫານ້ຳຕາຂອງຄົນທີ່ຂຶ້ນຊື່ວ່າພໍ່ ກໍບໍ່ອາດຈະກັ້ນໄວ້ໄດ້ ພາບທີ່ເຫັນ ກັບຄວາມຮູ້ສຶກຕອນນັ້ນ ກໍບໍ່ອາດຈະອະທິບາຍເປັນຄຳເວົ້າໄດ້ເຊັ່ນກັນ.



ເວລາຜ່ານໄປເປັນຊົ່ວໂມງ ທີ່ລູກນອນຢູ່ໃນອ້ອມກອດເທິງໜ້າເອິກ ໝໍຈຶ່ງມາເອົາລູກອອກໄປສັກຢາ ທັງຊັ່ງນ້ຳໜັກໂຕໄດ້ 3,1 ກິໂລ, ລູກແຂງແຮງດີກ່ອນຈະອອກຈາກຫ້ອງນັ້ນທ່ານໝໍຍັງເວົ້າອີກວ່າ:

"ລູກເຈົ້ານີ້ຊິຜິວງາມໃດ໋ນິ ເບິ່ງມີໄຂເຕັມໂຕເລີຍ ບໍ່ຕ້ອງເຊັດອອກເດີ ມັນຫາກຊິຊຶມເຂົ້າຜິວໜັງເອງ" ຂ້າພະເຈົ້າກໍໄດ້ແຕ່ຍິ້ມຮັບ ແລະຂອບໃຈ.

ຫຼັງຈາກອອກຫ້ອງປະສູດມາພັກຢູ່ນອກ ກໍເລີ່ມຮູ້ສຶກຫິວຂຶ້ນມາທັນທີ ເລີຍກິນເຂົ້າໜົມໄຂ່ໄປສອງກ້ອນບັກໃຫຍ່ກິນນ້ຳໄປຫຼາຍຈອກເຕີບ ເພື່ອໃຫ້ມີນ້ຳນົມໃຫ້ກິນ.

ນ້ຳນົມແມ່ຖືວ່າເປັນອາຫານທີ່ດີທີ່ສຸດສຳລັບລູກນ້ອຍ ແລະເຖິງແມ່ນວ່າຢາກຈະໃຫ້ລູກກິນພຽງແຕ່ນົມແມ່ປານໃດກໍຕາມ ໃນເມື່ອນ້ຳນົມມັນບໍ່ພຽງພໍລູກກິນບໍ່ອີ່ມກໍມີແຕ່ໄຫ້ແອ່ວຢູ່ບໍ່ຍອມນອນ ແລະຄົງບໍ່ມີພໍ່ແມ່ຄົນໃດດອກທີ່ຈະທົນໃຈແຂງປ່ອຍໃຫ້ລູກນ້ອຍຕົນເອງຮ້ອງໄຫ້ເພາະຫິວໂຫຍໄດ້ ຂ້າພະເຈົ້າກໍເຊັ່ນກັນ ເພື່ອໃຫ້ລູກອີ່ມຈຶ່ງຈຳຕ້ອງໄດ້ໃຫ້ນົມເສີມທີ່ກຽມໄວ້ແຕ່ຕົ້ນນັ້ນໃຫ້ລູກກິນເພື່ອບັນເທົາຄວາມຫິວກ່ອນ.



11 ເດືອນ





ຈັນສີລາ ຄົບຮອບ1 ປີແລ້ວ



## ຮີດຄອງ

ຕາມຮີດຄອງແລ້ວຫຼັງເກີດລູກມາໃໝ່ຕ້ອງໄດ້ນັ່ງກຳ ເພື່ອໃຫ້ແມ່ໄດ້ເຂົ້າຟືນເຂົ້າໄຟອາບນ້ຳຮ້ອນກິນນ້ຳຮ້ອນເປັນການພັກຜ່ອນໄປໃນຕົວ ເພື່ອຈະໄດ້ແຂງແຮງໄວ ແຕ່ດ້ວຍຕົນເອງໄດ້ຫຍິບແດ່ ໝໍຈຶ່ງບໍ່ທັນໃຫ້ກິນນ້ຳຮ້ອນ ແລະຢູ່ຮ້ອນຫຼາຍ ເພາະຢ້ານວ່າສາຍໄໝຫຍິບຊິຂາດແລ້ວຊິໄດ້ກັບໄປຫຍິບອີກ.

ຂັ້ນຕອນທຳອິດກ່ອນຈະໄດ້ນັ່ງກຳ ຕາມຮີດຄອງຂອງພວກເຮົາແມ່ນຕ້ອງໄດ້ມີຜູ່ເຖົ້າຜູ່ແກ່ ຜູ່ທີ່ຊ່າງເວົ້າຊ່າງວ່າຄັກແນ່ມາເຮັດພິທີກ່ອນໜ້ອຍນຶ່ງ ພິທີນີ້ບໍ່ໄດ້ມີຫຍັງຫຼາຍພຽງແຕ່ມີພ້າມີດ (ຫໍ່ຜ້າແພ) ວາງໄວ້ຫົວຕຽງທີ່ຈະໃຊ້ນັ່ງກຳ ແລ້ວກໍມີເຂົ້າສານ ແລະງາດຳ(ປົນກັນ)ແລ້ວໃຊ້ຫວ່ານໄປອ້ອມຕຽງແລ້ວເພິ່ນກໍຈະມີຄວາມເວົ້າອີກວ່າ:30ເມັດງາດຳ30ພັນໝາກງາຫູ່... ພໍເວົ້າສຸດກໍຖືວ່າພິທີແລ້ວ ສາມາດເຂົ້ານັ່ງກຳໄດ້.

ຕະຫຼອດເວລາເກືອບອາທິດ ທີ່ໄດ້ກິນແຕ່ນ້ຳອຸ່ນໆ ສ່ວນອາຫານທຳອິດກໍໄດ້ກິນແຕ່ ເຂົ້າຈ້າວໃສ່ນ້ຳສະອິວ ແລະໝູຝອຍ ແລະຢູ່ໄຟໃຫ້ກາຍ 5ມື້ໄປແລ້ວ ຈັ່ງໄດ້ສະຫົວ, ຈາກນັ້ນແມ່ກໍເຮັດປາຄູ່ໃຫ້ກິນ (ປາຄູ່ ແມ່ນເພິ່ນເອົາປາດຸກນາ 2 ໂຕມາຢ້າງນຳກັນແລ້ວກໍໜຶ້ງໃຫ້ກິນ, ເພິ່ນວ່າການກິນປາຄູ່ກ່ອນແມ່ນເພື່ອບໍ່ຢາກໃຫ້ຜິດກຳ) ຫຼັງຈາກໄດ້ກິນປາຄູ່ແລ້ວກໍໄດ້

ກິນໄກ່, ເວລາໄດ້ຊູດແກງຮ້ອນໆ ທັງຫອມກິ່ນຂີງກັບຫົວຜັກບົ່ວເລືອດທີ່ຕົ້ມໃສ່ກັນເຖິງບໍ່ໄດ້ໃສ່ເຄື່ອງປຸງຫຍັງຫຼາຍ ແຕ່ລົດຊາດກໍແຊບຊ້ອຍ ທັງລວກໜໍ່ຂ່າກັບຕື່ມຄວາມເຜັດແຊບຂຶ້ນໄປອີກ.

ນອກຈາກໄກ່ກັບປາດຸກນາ ກໍມີຊີ້ນຄວາຍດໍາ, ຊີ້ນໝູ ແລະ ປາທໍາມະຊາດທີ່ມີເກັດຫາງຂາວກໍກິນໄດ້ (ປາຫາງແດງ ແລະປາຄໍ່ເພິ່ນວ່າມັນມັກກິນລູກ ເພິ່ນຈຶ່ງບໍ່ທັນໃຫ້ກິນ) ປະເພດຜັກທີ່ໄດ້ກິນກໍມີຜັກຫວານ,ໜໍ່ຂ່າ,ໜໍ່ສານ,ຜັກກາດຂາວ ແລະ ຜັກອື່ນໆທີ່ບໍ່ມີດອກເຫຼືອງ (ຜັກທີ່ມີດອກເຫຼືອງເພິ່ນບໍ່ໃຫ້ກິນຍ້ອນຢ້ານລູກເຈັບທ້ອງ ແລະອອກຕຸ່ມ) ຂ້າພະເຈົ້າກໍບໍ່ແນ່ໃຈວ່າ ແຕ່ກ່ອນພວກເພິ່ນໃຊ້ຫຼັກການໃດມາພິສູດໃນເລື່ອງນີ້ ແຕ່ຟັງໄວ້ກໍຄົງບໍ່ເສຍຫາຍ ເພາະຕາມທີ່ເຫັນໝູ່ຕອນຢູ່ກໍາ ລາວກໍກິນຜັກກາດຊອມ (ດອກເຫຼືອງ) ແລ້ວລູກລາວກໍເຈັບທ້ອງອີ່ຫຼີ ທັງໝົດນີ້ອາດເພາະຜັກບໍ່ສະອາດ ຫຼືອາດເປັນນໍາການປຸງແຕ່ງ ຫຼືບໍ່ກໍອາດເປັນເພາະວ່າດອກຜັກມັນມີສານບາງຢ່າງທີ່ເຮັດໃຫ້ລະບາຍທ້ອງກໍເປັນໄດ້.

ສ່ວນໝາກໄມ້ກໍມີໝາກເຜືອກ ໝາກມັນ ສາລີ ສາ-ລອຍ ເຂົ້າຕົ້ມ ເຂົ້າໜົມກໍກິນໄດ້ ແຕ່ກໍຕ້ອງກິນເທື່ອລະໜ້ອຍເພາະຢ້ານລູກຊິເຈັບທ້ອງ ຫຼື ອາດຈະອືດທ້ອງໄດ້ ແລ້ວອາຫານທຸກຢ່າງຕ້ອງບໍ່ເຜັດ ບໍ່ເຄັມ ຫຼື ມັນ, ແລ້ວທີ່ບໍ່ໄດ້ກິນແທ້ກໍແມ່ນປະເພດຂອງດອງ, ແຮ່ງຕອນເຂົາຕໍາໝາກຫຸ່ງໄດ້ກິ່ນປາແດກ ໝາກນາວ ຟັງສຽງເຂົາຫຍໍ້າຂາກະປູກຸບໆຈົກຕ່ອນປາແດກ ແຮ່ງນໍ້າລາຍໄຫຼໄດ້ແຕ່ກືນນໍ້າລາຍນໍາປັບໆ.



ພໍກາຍອາທິດນຶ່ງໄປແລ້ວກໍກິນນໍ້າຮ້ອນໄດ້ ແລະຢູ່ໄຟໄດ້, ກິ່ນອາຍຂອງໃບນາດລອຍມາໃສ່ດັງເຮັດໃຫ້ມີແຮງຍ່າວໆ ແຮ່ງເຫື່ອອອກຫຼາຍທໍ່ໃດກໍຄືວ່າມີແຮງຫຼາຍຂຶ້ນທໍ່ນັ້ນທັງແມ່ ແລະແຟນກໍຄອຍເຝົ້າເບິ່ງຖ່ານໄຟທີ່ໃສ່ໝໍ້ດິນກອງຕຽງໃຫ້ຮ້ອນຢູ່ຕະຫຼອດ.

ທັງໝົ້ນໍ້າຕົ້ມ ເປືອກຕົ້ນນໍ້ານົມ, ກໍໄຜ່ນ້ອຍ, ຕົ້ນແຄລ້າວ, ຕົ້ນເດື່ອປ່ອງ ແລະອີກຫຼາຍໆຢ່າງ ກໍຄ້າງຢູ່ເຕົາຂ້າງຕຽງຕະຫຼອດເວລາ ຂ້າພະເຈົ້າເລັ່ງກິນນໍ້າຮ້ອນເກືອບໝົດມື້ລະ 20 ລິດ ທັງຊີ້ນປາອາຫານບໍາລຸງຕ່າງໆກໍກິນໃສ່ໃຫ້ມີນໍ້ານົມ ເພື່ອຈະໃຫ້ລູກໄດ້ກິນແຕ່ນົມແມ່ພຽງຢ່າງດຽວ ແຕ່ເຖິງປານນັ້ນກໍຍັງບໍ່ພໍ ໄດ້ໃຫ້ນົມເສີມກັບລູກໄປນໍາ.

ຂ້າພະເຈົ້ານັ່ງກໍາໄດ້ 9 ມື້ກໍພໍດີຮອດມື້ 15ຄໍ່າທໍາອິດກໍວ່າຈະອອກກໍາເລີຍ ເພາະຜູ່ເຖົ້າຜູ່ແກ່ວ່າຖ້າຢູ່ຂ້າມ 15ຄໍ່າມັນຂະລໍາ, ແຕ່ຫຼາຍຄົນວ່າຢູ່ໜ້ອຍມື້ໂພດບໍ່ທັນຢາກໃຫ້ອອກເພິ່ນຈຶ່ງໄດ້ເຮັດພິທີຂ້າມຄານໃຫ້ ພິທີດັ່ງກ່າວແມ່ນຈະຕ້ອງເຮັດແຕ່ຕອນເຊົ້າໆ ໃນມື້15ຄໍ່າຄືເອົາໄມ້ຄານຫາບມາກ່າຍໄວ້ຕຽງທີ່ນັ່ງກໍາ ແລ້ວໃຫ້ຂ້າພະເຈົ້າກັ້ນຫາຍໃຈຍ່າງຂ້າມໄປມາ3ເທື່ອ ແລ້ວໃນລະຫວ່າງນັ້ນກໍມີແມ່ເຖົ້າເພິ່ນຈົ່ມງຸບງິບໆຢູ່ໃນໃຈ (ຄວາມເວົ້າເພິ່ນແມ່ນ: ຖືພົກກໍ້າຂວາ ຖືພາກໍ້າຊ້າຍຄວບເດືອນນີ້ເດືອນຮອບ ຄອບເດືອນນີ້ເດືອນກໍາ...) ພິທີນີ້ໃຊ້ເວລາບໍ່ດົນ ແລະບໍ່ໄດ້ສິ້ນເປືອງຫຍັງ, ເມື່ອເຮັດພິທີດັ່ງກ່າວແລ້ວກໍສາມາດຢູ່ກໍາຕໍ່ໄດ້ອີກຫຼາຍມື້ລວມໆແລ້ວຂ້າພະ-ເຈົ້າຢູ່ກໍາຕັ້ງຊາວປາຍມື້.



ຕະຫຼອດຊາວປາຍກວ່າມື້ແມ່ນໄດ້ຕົ້ມນໍ້າໃສ່ໃບຊົມຊື່ນ, ໃບຂີ້ຫູດ ແລະ ໃບນາດອາບທຸກມື້ ເພື່ອໃຫ້ແຂງແຮງໄວນອກຈາກກິນນໍ້າຢາ ອາບນໍ້າຢາແລ້ວ ຕາມຮີດຄອງຂອງພວກຂ້າພະເຈົ້າ ຜູ່ເຖົ້າເພິ່ນຍັງເຮັດກະທົງສາມແຈຫ້ອຍໄວ້ເທິງຫົວ ແຕ່ລະເຊົ້າຕ້ອງເອົາ ໝາກເຜັດ, ໝາກເຂືອ, ເຂົ້າສົ້ມ ເຂົ້າຫວານ, ທັງຊີ້ນແຫ້ງ ປາຕາຍໃສ່ທຸກໆເຊົ້າ (ກະທົງສາມແຈແມ່ນເຮັດເພື່ອແຮໄວ້ໃຫ້ຜີສາງນາງຮ້າຍຕ່າງໆ ບໍ່ໃຫ້ມາກຸກມາກວນລູກນ້ອຍ).

ແລ້ວນອກຈາກນັ້ນ ເຂົ້າສານປັ້ນໝາກງາດໍານັ້ນ ກໍຕ້ອງຫວ່ານອ້ອມຕຽງທຸກໆມື້, ທັງມີດພ້າທີ່ຢູ່ຫົວຕຽງກໍບໍ່ໃຫ້ເອົາອອກ ແລ້ວປະຕູແຕ່ລະບ່ອນກໍຍັງເອົາເປືອກຕົ້ນລີ້ນໄມ້ມາຕອກໃສ່ ແລ້ວນອກຈາກນັ້ນ ກໍຍັງມີຝ້າຍດໍາແດງຝັ້ນເປັນເສັ້ນເຮັດສາຍຄໍໃຫ້ຂ້າພະເຈົ້າ ແລະມັດແຂນໃຫ້ລູກນໍາອີກທຸກຢ່າງທີ່ເຮັດ ແລະເວົ້າມາຂ້າງເທິງນັ້ນເຊື່ອກັນວ່າຈະຊ່ອຍກັນສິ່ງບໍ່ດີ ອອກໄປບໍ່ໃຫ້ເຂົ້າມາໃກ້ ເບິ່ງຄືວ່າຫຍຸ້ງຍາກ ແຕ່ເພື່ອຄວາມສະບາຍໃຈກໍຄົງບໍ່ເສຍຫາຍຫຍັງເພາະເຄື່ອງຂອງທຸກຢ່າງບໍ່ໄດ້ຊື້ສາມາດຫາໄດ້ຕາມກາງບ້ານທົ່ວໄປ.

ຮີດຄອງທຸກຢ່າງໃນເວລານັ່ງກໍານີ້ ຂ້າພະເຈົ້າກໍພໍເຂົ້າໃຈ ແລະປະຕິບັດໄດ້ ທຸກໆມື້ກໍຈະມີຄົນມາຫຼິ້ນມາຫົວກັນຢ່າງມ່ວນຊື່ນມັນກໍດີ, ແຕ່ກໍມີຢູ່ເລື່ອງນຶ່ງທີ່ຂ້າພະເຈົ້າບໍ່ຢາກໃຫ້ມີເລີຍ ກໍຄືການຫຼິ້ນໄພ້ງັນເຮືອນກໍາ ເພາະຕາມສັງເກດເຮືອນກໍາດຽວນີ້ບໍ່ຕ່າງກັບຄາຊິໂນດີໆນີ້ເອງ.

ເພາະແຕ່ບູຮານມາ ຕາມທີ່ຜູ່ເຖົ້າຜູ່ແກ່ເພິ່ນເລົ່າໃຫ້



ຟັງ ຍາມມີເຮືອນກໍາແມ່ນພວກເພິ່ນພາກັນອ່ານໜັງສື, ເລົ່ານິທານ ຫຼືຄໍາສອນຕ່າງໆສູ່ກັນຟັງ ຖ້າເປັນແນວນັ້ນມັນກໍດີເພາະເດັກນ້ອຍລູກຫຼານກໍຈະໄດ້ຄວາມຮູ້ໄປໃນຕົວເລີຍ ອັນນີ້ແມ່ນຫຍັງເດັກນ້ອຍໆຫົວທໍ່ໝາກກອກກໍພາກັນຮູ້ຕັ້ງວົງຕີໄພ້ ເພາະໄດ້ເຫັນແບບຈາກຜູ່ໃຫຍ່.

ຂ້າພະເຈົ້າກໍຢາກຈະຮູ້ແທ້ໆວ່າເປັນຫຍັງຕ້ອງປ່ຽນຈາກອ່ານໜັງສື ມາເປັນຫຼິ້ນໄພ້ແທນ ເພາະຜູ່ຄົນຈໍານວນຫຼາຍ ໂດຍສະເພາະພໍ່ຢ້າວແມ່ເຮືອນ ພາກັນມານັ່ງຈຸ້ມຫົວກັນເປັນມື້ໆບາງຈຸຫຼິ້ນຂ້າມຄືນຈົນແຈ້ງດີບໍ່ດີຊື້ເຫຼົ້າເບຍມາກິນກັນເຮໆຮາໆ ທັງເປັນການລົບກວນເວລາພັກຜ່ອນຂອງແມ່ລູກອ່ອນນໍາ ເພາະຫຼັງຈາກເກີດລູກແລ້ວ ອາລົມຂອງແມ່ລູກອ່ອນຈະແປປ່ຽນງ່າຍ ມັກງຸດຫງິດ ທັງຢາກຮ້າຍ ໃຈບໍ່ດີຈັກຢ່າງ ຈຶ່ງຄວນຈະໄດ້ພັກຜ່ອນໃຫ້ຫຼາຍ ແລະສໍາຄັນຖ້າຫຼິ້ນໄພ້ເສຍກັບເມືອເຮືອນຍັງໄປຜິດລູກຜິດເຕົ້ານໍາອີກ ກະຊິບໍ່ໃຫ້ຜິດຈັ່ງໃດ ແນວຫຼິ້ນເສຍເທື່ອນຶ່ງໝົດເປັນລ້ານໆ ຂ້າພະ-ເຈົ້າເຫັນແລ້ວຈັ່ງແມ່ນເສຍດາຍແທນ.

ຂ້າພະເຈົ້າເວົ້າຊື່ໆລະ!ການຫຼິ້ນໄພ້ງັນເຮືອນກໍານອກຈາກຈະເຮັດໃຫ້ເຮົາຈົບຫາຍວາຍວອດແລ້ວມັນຍັງເປັນການປູກຝັງຈິດສໍານຶກໃຫ້ລູກຫຼານເດີນຕາມຮອຍລົງສູ່ເຫວນໍາອີກກໍຄືດັ່ງເພິ່ນວ່າຫັ້ນແຫຼະ **“ໂຈນຂຶ້ນເຮືອນສິບເທື່ອ ຍັງບໍ່ທໍ່ໄຟໄໝ້ເທື່ອດຽວ ແລະໄຟໄໝ້ສິບເທື່ອ ຍັງບໍ່ທໍ່ຕິດການພະນັນເທື່ອດຽວ”.**



ຕຽງນັ່ງວ່າ



ໝໍ້ຕົ້ມນ້ຳອາບ



ພໍ່ໝໍທີ່ດຳເນີນພິທີເຢົາ



ວະທົງ 3 ແຈ



ຂອງກິນຢູ່ວ່າ (ເຂົ້າປຽກ, ລວກຜັກ, ຊີ້ນໄກ່)



ໝໍ້ຕົ້ມນ້ຳກິນ



# ໜ້າທີ່ ແລະຄວາມຮັບຜິດຊອບ

ການທີ່ເຮົາໄດ້ເກີດມາເປັນຄົນ ກໍຖືວ່າໂຊກດີແລ້ວ ແຕ່ຈະໂຊກດີກວ່າ ຖ້າເຮົາຫາກມີໂອກາດໄດ້ໃຫ້ຊີວິດໃໝ່ຂຶ້ນ ໜ້າທີ່ຂອງພໍ່ແມ່ບໍ່ພຽງແຕ່ໃຫ້ກຳເນີດບຸດເທົ່ານັ້ນ ແຕ່ຕ້ອງ ລ້ຽງດູ ເບິ່ງແຍງ ແລະໃຫ້ຄວາມຮັກຕໍ່ລູກນຳ ບໍ່ວ່າລູກຈະເປັນ ແນວໃດກໍຕ້ອງປະຕິບັດໜ້າທີ່ຕົນໃຫ້ດີທີ່ສຸດ.

ໃນສັງຄົມມະນຸດ ຜູ່ທີ່ໃຫ້ນິຍາມຕົນເອງວ່າ ເປັນສິ່ງ ທີ່ມີຊີວິດ ທີ່ສະຫຼາດທີ່ສຸດໃນ ໂລກນີ້ ມັນກໍອາດຈະຈິງ, ແລ້ວ ຖ້າຈະບອກວ່າ ມະນຸດເປັນສິ່ງທີ່ມີຊີວິດ ທີ່ບໍ່ຈິງໃຈ ທັງຂາດ ຄວາມຮັບຜິດຊອບ ແລະເຫັນແກ່ຕົວທີ່ສຸດຈະຜິດບໍ?.

ເພາະຄຳວ່າ "**ຮັກກັນໄປຕະຫຼອດຊີວິດ**" ບໍ່ແນ່ໃຈວ່າ ຈະໃຊ້ກັບຄົນເຮົາໄດ້ ຫຼືບໍ! ເພາະໃນຊີວິດຈິງ ມີຫຼາຍຕໍ່ຫຼາຍ ຄູ່ທີ່ມີຄວາມຮັກແບບ ຫວານຕົ້ນຈືດປາຍ ເຖິງແມ່ນຈະຢູ່ກິນ ນຳກັນເປັນສິບໆປີ ຫຼືແມ່ນແຕ່ມີລູກເຕົ້າຮ່ວມກັນແລ້ວ ແຕ່ກໍ ຍັງປະຖິ້ມໄປຫາໃໝ່ໄດ້, ເຊິ່ງຕ່າງຈາກສັດເດຍລະສານບາງ ຊະນິດ ເປັນຕົ້ນແມ່ນ ນົກເງືອກ Hornbill (ນົກທີ່ເປັນສັນຍາ ລັກຂອງຮັກແທ້, ນົກເງືອກມີຫຼາຍຊະນິດ ແຕ່ລະຊະນິດມີ ຄວາມແຕກຕ່າງກັນ ແຕ່ໂດຍທົ່ວໄປມີລັກສະນະເດັ່ນຄືປາກ ໃຫຍ່ ຫາງແລະຄໍຍາວ, ຂາສັ້ນ, ຝາຕີນກວ້າງ, ສ່ວນປີກຈະ



ຍາວພໍໄດ້ກວ້າງ ໃຕ້ປີກບໍ່ມີຂົນ ເປັນນົກທີ່ບິນຊ້າ...)

ທຳອິດນົກເງືອກໂຕຜູ້ ຈະເປັນຝ່າຍຕາມຫາຮັກແທ້ ຈາກໂຕເມຍ ພໍເມື່ອພົ້ແລ້ວພວກມັນກໍໃຊ້ຊີວິດຄູ່ແບບຜົວ ດຽວເມຍດຽວໄປຈົນຕາຍ ພວກມັນຮັກ ແລະ ຊ່ອຍກັນລ້ຽງດູ ປົກປ້ອງລູກນ້ອຍຂອງມັນຢ່າງຖະນຸຖະໜອມ ໂດຍໃຫ້ນົກ ໂຕເມຍເປັນຜູ່ເຝົ້າລູກນ້ອຍຢູ່ໃນໂກນ ພວກມັນຈະຫາມູນ ສັດ ແລະ ເສດໄມ້ຕ່າງໆມາປິດປາກໂກນ ຈະຈົ່ງໄວ້ພຽງຮູ ນ້ອຍໆ ພໍໃຫ້ອາຫານເຂົ້າໄດ້ ເພື່ອຄວາມປອດໄພ. ໂດຍນົກ ໂຕຜູ້ຈະເປັນຜູ່ອອກຊອກຫາອາຫານມາໃຫ້ເມຍ ແລະລູກ ນ້ອຍຂອງມັນ.

ຍັງມີເລື່ອງເລົ່າໄວ້ວ່າ ມື້ນຶ່ງຂະນະທີ່ນົກເງືອກໂຕຜູ້ ບິນອອກໄປຊອກຫາອາຫານນັ້ນກໍຖືກຄົນຍິງເພື່ອເອົາປາກ ທີ່ສວຍງາມຂອງມັນໄປປະດັບຝາເຮືອນ ໂດຍບໍ່ຮູ້ວ່າການຂ້າ ນົກເງືອກໂຕຜູ້ນັ້ນ ກໍເທົ່າກັບການທຳຮ້າຍນົກອີກສອງໂຕ ເພາະນົກເງືອກໂຕເມຍ ຈະລໍຖ້າການກັບມາຂອງນົກເງືອກ ຜູ່ຢູ່ໃນໂກນກັບລູກ ຖ້າຈົນລົມຫາຍໃຈສຸດທ້າຍ (ອ່ານລາຍ ລະອຽດເພີ່ມຕື່ມໄດ້ທີ່ https://pet.kapook.com).

ຄົນເຖິງວ່າຈະສະຫຼາດກວ່າສັດສ່ຳໃດ ຖ້າບໍ່ສາມາດ ຮັບຜິດຊອບໜ້າທີ່ຂອງຕົນເອງໄດ້ແລ້ວ ໂດຍສະເພາະໜ້າທີ່ "ພໍ່ແມ່" ເຊິ່ງເປັນຄວາມຮັບຜິດຊອບໂດຍທຳມະຊາດທີ່ແມ່ນ ແຕ່ສັດກໍຍັງເຮັດໄດ້ ຄົນເຮົາກໍຕ້ອງເຮັດໃຫ້ໄດ້ເຊັ່ນກັນ ເພາະ ຖ້າຮັບຜິດຊອບໜ້າທີ່ນີ້ບໍ່ໄດ້ ກໍຢ່າຫວັງວ່າຈະເຮັດໜ້າທີ່ອື່ນ ໄດ້ສຳເລັດເລີຍ ເພາະຄົນທີ່ປະລະຕໍ່ໜ້າທີ່ນີ້ ຖືວ່າບໍ່ມີຄວາມ



ຕ່າງຈາກສັດເດຍລະສານເລີຍ.

ເພາະຖ້າແມ່ນຄົນເຮົາຫາກມີຄວາມຊື່ສັດ ໝັ້ນຄົງ ກໍຄົງບໍ່ມີລູກກຳພ້າທີ່ພໍ່ແມ່ຍັງໝົດ ແລະຖ້າຫາກມີຄວາມຮັບ ຜິດຊອບພໍ ກໍຄົງບໍ່ມີຂ່າວເດັກນ້ອຍຖືກຖິ້ມ... ວ່າບໍ!.

ຂອງກິນເຖິງຈະແຊບຊ້ອຍປານໃດ ແຕ່ຫາກໄດ້ຍິນ ສຽງລູກໄຫ້ກໍບໍ່ອາດກືນລົງຄໍໄດ້, ເມື່ອລູກຍັງບໍ່ນອນ ຕາພໍ່ ແມ່ກໍບໍ່ອາດຈະຫຼັບລົງ ແລະກໍເປັນເວລາເກືອບຫົກເດືອນ ທີ່ ໄດ້ນອນພຽງມື້ລະ 2-3 ຊົ່ວໂມງເທົ່ານັ້ນ ຍ້ອນລູກຂີ້ໄຫ້ຫຼາຍ ທັງກາງເວັນ ກາງຄືນແມ່ນໄດ້ອູ້ມໄດ້ຫອບຮ່ອນຢູ່ ທຳອິດກໍ ພາໄປຫາໝໍເພາະຢ້ານວ່າລູກຈະບໍ່ສະບາຍ, ແຕ່ໝໍກໍວ່າປົກ ກະຕິດີ ລູກຕັ້ງຂີ້ໄຫ້ເອງ.

ຖ້າໄຫ້ທຳມະດາຄືເດັກນ້ອຍທົ່ວໄປກະໄຄລະບໍອັນ ນີ້ໄຫ້ເທື່ອໃດຈົນໜ້າກ່ຳດຳຂຽວ ທັງໄຫ້ທັງແຂກຮ້ອງສຽງຂ້າມ ສາມຫຼັງຄາເຮືອນກໍໄດ້ຍິນ ບາງເທື່ອໄຫ້ຫຼາຍຈົນຕົນໂຕອ່ອນ ແອດແລດ ມ້ອຍໄປເປັນບາດໆ ໝາກຫົວໃຈຜູ່ເປັນພໍ່ແມ່ ແຮ່ງຄືຊິຂາດລົງບາດໃດບາດນຶ່ງ.

ຍ້ອນວ່າຂີ້ໄຫ້ຫຼາຍພີ່ນ້ອງບ້ານໃກ້ເຮືອນຄຽງເຂົາກໍ ອີ່ຕົນ ເພາະທັງໝົດເຮືອນບໍ່ໄດ້ຫຼັບໄດ້ນອນ ບາງຄົນເຂົາກໍ ບອກລອງພາລູກໄປມັດແຂນນຳຄູບາເບິ່ງ ເພາະເດັກນ້ອຍ ຂີ້ໄຫ້ບາງຄົນພໍໄປມັດແຂນມາກໍຄືວ່າອ່າວໄຄ, ພໍແຕ່ໄດ້ຍິນ ກໍແມ່ນພາລູກໄປຈົນໝົດເກືອບທຸກວັດ ແຕ່ກໍຍັງບໍ່ມີວີ່ແວວ ວ່າຈະເຊົາໄຫ້ເລີຍ ຈົນຄູບາເພິ່ນອອກປາກວ່າ "ບໍ່ເຄີຍມີໃຜ ຈະໄດ້ກັບມາມັດຊ້ຳສອງຈັກເທື່ອນ່າ!" ແຕ່ນີ້ມັດທັງແຂນທັງ

ຂາແຕ່ຄວາມຂີ້ໄຫ້ກໍບໍ່ຫຼຸດລົງເລີຍ.

ແມ່ຕູ້ຍັງເລົ່າໃຫ້ຟັງອີກວ່າ ຕອນເພິ່ນລ້ຽງລູກຍັງນ້ອຍ ຜູ່ໃດຂີ້ໄຫ້ຫຼາຍ ເພິ່ນກໍຈະໄປຂໍບູຊາຜ້າສະບົງເກົ່ານຳຄູບາ ຢູ່ວັດແລ້ວມາຫຍິບເຮັດເສື້ອໃຫ້ນຸ່ງ ແລ້ວຈະຄ່ອຍໆເຊົາໄຫ້ໄປເອງ ທັງຄຳຮູ້ບອກຟັງ, ເມື່ອໄດ້ຍິນເຊັ່ນນັ້ນກໍບໍ່ລໍຊ້າເຮັດຕາມຄຳເລົ່າຂອງແມ່ຕູ້ທັນທີ. ແຕ່ຄືນກໍບໍ່ຄືກັນ ເພາະຜ້າສະບົງໝົດຕັ້ງຫຼາຍຜືນກໍຍັງເອົາບໍ່ຢູ່.

ດັ່ງນັ້ນ, ທາງເລືອກສຸດທ້າຍກໍຄືເວົ້ານຳເລື່ອງໄສຍະສາດ ເຮັດພິທີກຳຫຼາຍຢ່າງ ແຕ່ກໍຍັງຂີ້ໄຫ້ຄືເກົ່າ. ດ້ວຍເຫດນີ້ແຟນຈຶ່ງໃຫ້ຂ້າພະເຈົ້າລ້ຽງລູກຢູ່ເຮືອນ ໂດຍທີ່ຕົວລາວເຮັດວຽກຫາເງິນລ້ຽງຄອບຄົວພຽງຄົນດຽວ ແລະເຖິງຈະໄດ້ເຮັດວຽກໜັກຂຶ້ນ ຈົນເກືອບບໍ່ມີເວລາພັກຜ່ອນ ແຕ່ປານນັ້ນເວລາກາງຄືນຍາມລູກ ໄຫ້ລາວກໍຍັງລຸກມາອູ້ມລູກຊ່ອຍ ໂດຍທີ່ບໍ່ມີສຽງຈົ່ມພໍຄຳ.

ຄົນແຮ່ງວ່າຂີ້ໄຫ້ຢູ່ແລ້ວ ແຮ່ງຕອນບໍ່ສະບາຍ ເຈັບໃສປວດໃສກໍບໍ່ຮູ້ບອກມີແຕ່ໄຫ້ທັງແອ່ວນົມກໍບໍ່ຢາກກິນ ຈົນບໍ່ໄດ້ນອນພໍດີ້ ຖ້າແມ່ນເລືອກໄດ້ ພໍ່ແມ່ທຸກຄົນກໍຄົງຂໍເຈັບເປັນແທນລູກ ເພາະທຸກຄວາມເຈັບປວດຂອງລູກນັ້ນ ຄົນເປັນພໍ່ແມ່ຈະເຈັບກວ່າຫຼາຍເທົ່າ ຕາມດີລູກໃຫຍ່ຂຶ້ນມາແລ້ວທຳຮ້າຍຕົນເອງເພາະຄົນອື່ນແລ້ວ ຮູ້ບໍ! ວ່າພໍ່ແມ່ແຮ່ງໃຈສະຫຼາຍເລີຍ.

ພໍ່ແມ່ເຖິງຈະທຸກຍາກປານໃດກໍຕາມ ຂໍພຽງໄດ້ເຫັນຮອຍຍິ້ມທີ່ໄຮ້ດຽງສາຂອງລູກ ກໍປານກັບໄດ້ຢາດີວິເສດ ເພາະວ່າຄວາມສຸກ ທີ່ເຖິງຈະມີເງິນຫຼາຍປານໃດກໍຫາຊື້ບໍ່ໄດ້ ກໍເວ-



ລາທີ່ໄດ້ເຫັນການປ່ຽນແປງທຸກຂັ້ນຕອນຂອງລູກ.

ຕອນລູກໄດ້ 2 - 3 ເດືອນ ຊ່ວງນີ້ລູກເບິ່ງເຫັນແຈ້ງ ແລະໄດ້ຍິນຊັດເຈນແລ້ວ ເວລາທີ່ເວົ້າລົມ ຫຼືຢອກລູກກໍຈະຍິ້ມພ້ອມສຽງຫົວ ແລະກໍປາກອໍ້ໆແອ້ໆນຳ ຢາກບອກວ່າມັນຄືກັບໄດ້ກິນນໍ້າເຢັນໆຫວານໆ ໃນຍາມທີ່ຮ້ອນກະຫາຍ.

ຊ່ວງ 4-5 ເດືອນ ລູກຮູ້ຈັບສິ່ງຂອງໃສ່ປາກແລ້ວ ທັງຮຽນຂວໍ້າໄປມາ ແຕ່ກໍມີຫຼາຍເທື່ອທີ່ດຶງແຂນອອກເອງບໍ່ໄດ້ ກໍໄຫ້ເພື່ອໃຫ້ແມ່ຊ່ອຍ ຈະວ່າໄປແລ້ວມັນກໍມີຄວາມສຸກດີ ທີ່ໄດ້ເຫັນຄວາມພະຍາຍາມຂອງລູກ.

ຫຼັງຈາກຂວໍ້າໄດ້ແລ້ວ ກໍກ້າວເຂົ້າເດືອນທີ 6 - 7 ລູກກໍເລີ່ມຮຽນນັ່ງ ແຕ່ຕ້ອງໄດ້ເພີ່ມຄວາມລະມັດລະວັງຂຶ້ນຕື່ມ ເວລາເອົານັ່ງຕ້ອງໄດ້ຫາໝອນມາອ້ອມຂ້າງໄວ້ຖ້າບໍ່ຊັ້ນລະແມ່ນລົ້ມຫົວເຕິ່ງລົງທັນທີ ແຕ່ກໍໄດ້ໄຫ້ຢູ່ຫຼາຍເທື່ອກ່ອນທີ່ຈະນັ່ງໝັ້ນ, ນອກຈາກຮຽນນັ່ງແລ້ວ ລູກກໍຍັງຮຽນປາກນຳອີກຄຳທຳອິດທີ່ລູກເວົ້າອອກສຽງເຂົ້າໃຈຊັດເຈນຄືຄຳວ່າ **ປາ** ຄຳເວົ້າພຽງຄຳດຽວ ແຕ່ເຮັດໃຫ້ຂ້າພະເຈົ້າຍິ້ມໄດ້ໝົດມື້ເລີຍ.

ພໍແຕ່ກ້າວເຂົ້າເດືອນທີ 8 - 9 ແຂ້ວລູກກໍເລີ່ມອອກມາກັດຕ່ອນແລ້ວ ທັງຮຽນຄານນຳ, ທຳອິດກໍຈະເຮັດກະດຶບໆຄ້າຍຄືບົ້ງເຫັນແລ້ວກໍອົດຫົວບໍ່ໄດ້ ບາງເທື່ອກໍເລືອໄປຄືແອບທະຫານ ຈົນແຂນສອກຫົວເຂົ່າແດງດານໝົດ.

ແຕ່ພໍຄານເປັນແລ້ວ ຊ່ວງເດືອນທີ 10 ໄປກໍເລີ່ມຮຽນຈັບລຸກ ແລ້ວກໍຄ່ອຍໆຮຽນຍ່າງໄປ ເວລາທີ່ແຂນສອງຂ້າງໄດ້ໂອບຮັບເອົາລູກເວລາທີ່ຈະລົ້ມໄວ້ ມັນແສນມີຄວາມສຸກຢ່າງ



ບອກບໍ່ຖືກແລະກ້າວທຳອິດທີ່ລູກຍ່າງໄດ້ນໍ້າຕາຄົນເປັນແມ່ອົດກັ້ນໄວ້ບໍ່ໄດ້ແທ້ໆ ຫົວສະໝອງພ້ອມບັນທຶກພາບຄວາມປະທັບໃຈນັ້ນໄວ້ບໍ່ອາດຈະລຶບລ້າງໄປໄດ້.

ບົດຮຽນນຶ່ງທີ່ໄດ້ຈາກລູກກໍຄື ຄວາມອົດທົນພະຍາຍາມ ເພາະເຖິງແມ່ນລູກຈະລົ້ມຈັກເທື່ອ ຫົວເຂົ່າຈະມີຮອຍບາດຈັກບ່ອນ ແຕ່ລູກກໍຍັງລຸກແລ້ວພະຍາຍາມຍ່າງຈົນໄດ້ ມັນຄືແຮງໃຈນຶ່ງທີ່ເຮັດໃຫ້ຮູ້ວ່າ ຈະທໍ້ບໍ່ໄດ້ເດັດຂາດ ເຖິງພາຍຸຊີວິດຈະພັດໜໍ່ມາເທົ່າໃດກໍຫ້າມອ່ອນແອ ເຖິງຈະລົ້ມຈັກເທື່ອກໍຕ້ອງລຸກ ລຸກຂຶ້ນມາສູ້ ສູ້ເພື່ອແກ້ວຕາດວງໃຈດວງນີ້.

ແມ່ຄືອາຊີບທີ່ລາອອກບໍ່ໄດ້ ເມື່ອຍກໍພັກບໍ່ໄດ້ ເປັນອາຊີບທີ່ບໍ່ມີເງິນເດືອນ ແຕ່ຄ່າຕອບແທນບໍ່ອາດສາມາດປະເມີນຄ່າໄດ້ ແລະກໍເປັນອາຊີບດຽວທີ່ຕ້ອງເຮັດໄປຕະຫຼອດຈົນກວ່າລົມຫາຍໃຈສຸດທ້າຍຈະໝົດລົງ.

ແຕ່ກໍໜ້າເສົ້າທີ່ທຸກມື້ນີ້ ຍັງມີລູກໆຫຼາຍຄົນລະເລີຍໜ້າທີ່ຂອງຕົນ ປະຕິເສດທີ່ຈະດູແລພໍ່ແມ່ຍາມເພິ່ນເຈັບເປັນເບື່ອທັງລຳຄານເມື່ອຕ້ອງຢູ່ກັບພໍ່ແມ່ເຖົ້າໆ ທີ່ຫຼົງໆລືມໆ ທັງມັກຈົ່ມ, ເມື່ອຍທີ່ຕ້ອງເປັນຫູເປັນຕາ ເປັນແຂນຂາໃຫ້ພໍ່ແມ່ຍາມເພິ່ນແກ່ເຖົ້າ ແລະຮູ້ສຶກວ່າພໍ່ແມ່ຄືພາລະທີ່ຕ້ອງສົ່ງເງິນໃຫ້ໃຊ້ທຸກເດືອນ ທັງທີ່ພໍ່ແມ່ໃຊ້ເວລາທັງຊີວິດເພື່ອຫາເງິນລ້ຽງລູກຈົນໃຫຍ່.

ລູກໆເອີ່ຍ..! ຢາກບອກວ່າພວກເຈົ້ານີ້ໂຊກດີທີ່ສຸດແລ້ວ ທີ່ມີພໍ່ແມ່ຄອຍດູແລຮັກສາ ທັງເບິ່ງແຍງເຈົ້າຕັ້ງແຕ່ຍັງຢູ່ໃນທ້ອງ ຈົນເຈົ້າເກີດມາໃຫຍ່ກ້າໜ້າບານ ພໍ່ແມ່ຕ້ອງດູແລ



ເຈົ້າຍາມເຈັບເປັນຈົນນັບເທື່ອບໍ່ໄດ້, ພໍ່ແມ່ຍອມສະຫຼະເຫື່ອແຮງທີ່ມີເພື່ອສ້າງເສັ້ນທາງໃຫ້ເຈົ້າເດີນ ເຖິງແມ່ນເຈົ້າຈະເດີນໄປໄກປານໃດແລ້ວກໍຕາມ ກໍຈົ່ງຫວນກັບມາຕົ້ນທາງ ແລະຢ່າປະຕິເສດເລີຍທີ່ຈະຕອບແທນເພິ່ນຕອນທີ່ຍັງມີໂອກາດ ເພາະທັງຊີວິດລູກມີພໍ່ແມ່ໄດ້ພຽງຄົນດຽວເທົ່ານັ້ນ.

ມາຮອດມື້ນີ້ບໍ່ມີຄວາມສົງໄສແລ້ວວ່າ ເປັນຫຍັງແມ່ຈຶ່ງກິນເຂົ້າພຽງໜ້ອຍແລ້ວກໍເຊົາ? ກໍເພາະຢາກໃຫ້ລູກກິນອີ່ມ, ເປັນຫຍັງພໍ່ເຮັດວຽກໜັກແຕ່ບໍ່ເຄີຍຈົ່ມ? ເພາະບໍ່ຢາກໃຫ້ລູກເມື່ອຍ, ເປັນຫຍັງແມ່ຈຶ່ງຈໍ້າກິນແຕ່ແຈ່ວ? ກໍເພາະຢາກໃຫ້ລູກໄດ້ກິນປາແຊບ, ເປັນຫຍັງພໍ່ແມ່ຕ້ອງຕື່ນແຕ່ເດິກ? ກໍເພື່ອຢາກໃຫ້ລູກໄດ້ນອນພັກ, ເປັນຫຍັງແມ່ຕ້ອງບອກໃຫ້ລູກຕັ້ງໃຈຮຽນໜັງສື? ກໍເພາະບໍ່ຢາກໃຫ້ລູກລຳບາກ, ເປັນຫຍັງພໍ່ແມ່ເຖິງສອນໃຫ້ລູກເປັນຄົນດີ ຮູ້ຈັກແບ່ງປັນ ແລະຊ່ອຍເຫຼືອຄົນອື່ນ? ເພາະພໍ່ແມ່ບໍ່ອາດຈະຢູ່ຊ່ອຍເຫຼືອ ດູແລລູກໄປຕະຫຼອດໄດ້ແລະເຖິງຈະມີອີກຫຼາຍຮ້ອຍຄວາມສົງໄສໝື່ນພັນຄຳຖາມ ແຕ່ກໍມີຄຳຕອບດຽວຄື: "ພໍ່**ແມ່ຮັກລູກເທົ່ານັ້ນເອງ"**

**"ລູກ"** ຄືຂອງຂວັນທີ່ມີຄ່າທີ່ສຸດສຳລັບພໍ່ແມ່, ລູກປຽບດັ່ງດວງດາວ ເຖິງຈະດວງນ້ອຍ ແຕ່ກໍເຮັດໃຫ້ທ້ອງຟ້າທີ່ມືດມິດມີແສງສະຫວ່າງ, ລູກ ຄືສາຍຝົນທີ່ຕົກລົງມາໃສ່ພື້ນດິນທີ່ແຫ້ງແລ້ງ ໃຫ້ກາຍເປັນດິນທີ່ອຸດົມສົມບູນ ຊ່ອຍໃຫ້ຕົ້ນໄມ້ທີ່ຫ່ຽວແຫ້ງໄດ້ເບັ່ງບານອອກດອກອີກຄັ້ງ. ແຕ່ມີສິ່ງນຶ່ງທີ່ຄົນເປັນພໍ່ແມ່ຢ້ານກໍຄືຢ້ານລູກເດີນຫຼົງທາງຜິດຄິດເປັນຄົນຊົ່ວ

ເພາະນັ້ນຄືສິ່ງທີ່ເຮັດໃຫ້ພໍ່ແມ່ຍິ່ງກວ່າຕົກນາຮົກທັງເປັນ.

ຖ້າຂ້າພະເຈົ້າສາມາດກຳນົດເສັ້ນທາງຊີວິດຂອງລູກໄດ້ຄືກັບສາກລະຄອນ ກໍຄົງຈະກຳນົດທຸກຢ່າງໃຫ້ດີທີ່ສຸດໃຫ້ເປັນໄປຕາມຄວາມຕ້ອງການຂອງຂ້າພະເຈົ້າທຸກຢ່າງ.

ແຕ່ໃນຄວາມເປັນຈິງ ກໍຮູ້ວ່າບໍ່ສາມາດຈະເຮັດໄດ້ ເພາະພໍ່ແມ່ກໍລ້ຽງລູກໃຫ້ໃຫຍ່ໄດ້ພຽງແຕ່ກາຍ ບໍ່ສາມາດໄປຂີດເສັ້ນກຳນົດຊີວິດໃຫ້ລູກໄດ້ທັງໝົດ ຈຶ່ງຢາກຈະບອກໃຫ້ລູກຮູ້ວ່າ "ມື້ໃດກໍຕາມທີ່ລູກລົ້ມຈະມີແມ່ຄອຍຮັບ ແລະມີພໍ່ເປັນເສົາຄ້ຳໃຫ້ລູກ, ມື້ໃດທີ່ລູກຫາກເດີນຫຼົງທາງ ພໍ່ແມ່ກໍຈະເປັນເຂັມທິດໃຫ້ລູກ, ແລ້ວມື້ໃດທີ່ລູກຫາກພົ້ທາງຕັນ ລູກກໍຍັງມີພໍ່ແມ່ເປັນແສງສະຫວ່າງເຍືອງໃຫ້ລູກເຫັນທາງອອກ ແລະບໍ່ວ່າລູກຈະພົບພໍ້ບັນຫາໃດໆກໍຕາມຈະໜັກຫຼືເບົາປານໃດ ລູກຈະບໍ່ໄດ້ສູ້ກັບມັນພຽງລຳພັງຄົນດຽວ ເພາະພໍ່ແມ່ຈະຢືນຄຽງຂ້າງລູກບໍ່ໄປໃສ".

ເພາະບໍ່ອາດຮູ້ໄດ້ວ່າ ມື້ອື່ນຈະເກີດຫຍັງຂຶ້ນແດ່ ມື້ນີ້ຂ້າພະເຈົ້າຈຶ່ງຂໍເຮັດໜ້າທີ່ແມ່ໃຫ້ດີທີ່ສຸດສ່ວນອະນາຄົດຈະເປັນແນວໃດ ເມື່ອລູກໃຫຍ່ມາຈະເລືອກເດີນຕາມເສັ້ນທາງໃດ? ລູກຈະໄດ້ເປັນໝໍ, ຕຳຫຼວດ, ທະຫານ , ຄູ ຫຼືຈະໄດ້ເປັນພຽງກຳມະກອນ? ກໍບໍ່ຮູ້, ລູກຈະເຊື່ອຟັງຄຳສອນຂອງພໍ່ແມ່ບໍ? ຫຼືລູກຈະເປັນຄົນດີໄດ້ສ່ຳໃດ? ກໍບໍ່ອາດຮູ້! ເພາະທັງໝົດນັ້ນ ຄືຊີວິດຂອງລູກ ຊີວິດທີ່ລູກຕ້ອງເປັນຄົນກຳນົດເອງ...!!



## ຄຳຂອບໃຈ

ຖ້າມີພຽງແຕ່ປາຍປາກກາ ກັບເລື່ອງລາວເຫຼົ່ານີ້ ກໍຄົງບໍ່ສາມາດຈະພິມອອກມາເປັນເຫຼັ້ມໄດ້ ຫາກປາສະຈາກບຸກຄົນທີ່ຄອຍຊ່ວຍຢູ່ເບື້ອງຫຼັງ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຖືໂອກາດນີ້ ຂໍຂອບໃຈມາຍັງທ່ານ ອາຈານ ດວງເດືອນ ບຸນຍາວົງ (ດອກເກດ)ນັກຂຽນອາວຸໂສຜູ້ເຊິ່ງເປັນດັ່ງແມ່ແບບໃນເລື່ອງການຂຽນຂອງຂ້າພະເຈົ້າ ທີ່ຄອຍຊ່ວຍແນະນຳ ຕັກເຕືອນ ແລະໃຫ້ໂອກາດຈົນຂ້າພະເຈົ້າໄດ້ມາຢືນຢູ່ຈຸດນີ້ ໄດ້ໃຊ້ຮອຍປາກກາຂີດຂຽນຜົນງານອອກຮັບໃຊ້ສັງຄົມ.

ຂໍຂອບໃຈພຣະອາຈານໄພວັນມາລາວົງ(ລູກດອນ-ກະເດັນ)ທີ່ສະຫຼະເວລາມາຊ່ວຍອ່ານທັງໃຫ້ຄະຕິເຕືອນໃຈໃຫ້ຮູ້ເຖິງບຸນຄຸນພໍ່ແມ່ ທັງຊ່ວຍແນະນຳເລື່ອງການຂຽນໃຫ້ຂ້າພະເຈົ້າມາໂດຍຕະຫຼອດ.

ຂໍຂອບໃຈທາງສຳນັກພິມລາວດວງເດືອນ ໂດຍສະເພາະອາຈານ ປັນຍາ ພັນທະພານິດ ທີ່ຊ່ວຍບັນນາທິການທັງໃຫ້ຄຳຄິດຄຳເຫັນ ຈົນປຶ້ມເຫຼັ້ມນີ້ອອກມາສົມບູນຍິ່ງຂຶ້ນ ແລະຂອບໃຈ ເອື້ອຍສະກຸນາ ສິລິສົມພອນ (ເອື້ອຍແຂກ) ທີ່ຊ່ວຍແນະນຳເຕັກນິກການຈັດໜ້າຕ່າງໆໃຫ້ ເຖິງແມ່ນຈະຢູ່ໄກກັນ ແຕ່ຄວາມຫວັງດີທີ່ເອື້ອຍມີໃຫ້ບໍ່ເຄີຍຫ່າງຄືໄລຍະທາງເລີຍ.

ຂໍຂອບໃຈພໍ່ແມ່ ຜູ້ເຊິ່ງໃຫ້ໂອກາດແກ່ລູກໄດ້ເກີດມາ



ຂອບໃຈພໍ່ຜູ້ທີ່ຍອມເຮັດວຽກໜັກ ເພື່ອລ້ຽງດູລູກໃຫ້ເຕີບໃຫຍ່ ແລະແມ່ຜູ້ທີ່ບໍ່ຮູ້ໜັງສື ອ່ານບໍ່ໄດ້ ຂຽນບໍ່ເປັນ ແຕ່ສະຫຼະທຶນຮອນທີ່ມີເພື່ອໃຫ້ລູກໄດ້ມີຄວາມຮູ້ ແລະຂອບໃຈທີ່ໃຫ້ຄວາມຮັກແລະອະໄພໃຫ້ລູກສະໝີ ແມ່ນບາງຄັ້ງລູກຄົນນີ້ອາດເຄີຍເຮັດໃຫ້ພໍ່ແມ່ເສຍໃຈ ຫຼືຜິດຫວັງ, ມື້ນີ້ລູກເຂົ້າໃຈຢ່າງແຈ້ມແຈ້ງດີແລ້ວວ່າຄວາມຮັກ ແລະບຸນຄຸນຂອງພໍ່ແມ່ນນັ້ນຍິ່ງໃຫຍ່ສ່ຳໃດ ແລ້ວລູກກໍຢາກຈະບອກພໍ່ແມ່ວ່າ: "**ລູກຂໍໂທດ**" ໃນສິ່ງທີ່ເຄີຍເຮັດຜິດພາດໄປ "**ລູກຮັກພໍ່ແມ່ສະເໝີຕະຫຼອດໄປ**".

ທີ່ຂາດບໍ່ໄດ້ກໍແມ່ນຂອບໃຈລູກ ທີ່ມາຊ່ວຍຕື່ມເຕັມຄວາມສຸກໃນຊີວິດຂອງພໍ່ ແລະແມ່, ຂອບໃຈທີ່ເຮັດໃຫ້ຜູ້ຍິງຄົນນຶ່ງໄດ້ເຮັດໜ້າທີ່ຂອງຕົນໄດ້ຄົບຖ້ວນ ເຖິງຈະບໍ່ສົມບູນປານໃດກໍຕາມ.

ຂອບໃຈບັນດາທ່ານທີ່ຊ່ວຍອອກທຶນສົມທົບໃນການພິມປຶ້ມຄັ້ງນີ້ເປັນຢ່າງສູງ.

ແລະສຸດທ້າຍຕ້ອງຂໍຂອບໃຈບັນດາທ່ານຜູ້ອ່ານທັງຫຼາຍ ທີ່ຍັງອ່ານມາເຖິງໃບເຈ້ຍໜ້າສຸດທ້າຍນີ້ ຫວັງຢ່າງຍິ່ງວ່າທ່ານຄົງຈະບໍ່ເສຍດາຍເງິນກໍຄືເວລາທີ່ສະຫຼະມາຊື້ປຶ້ມນີ້ອ່ານ ແລະກໍຫວັງອີກຢ່າງນຶ່ງວ່າ ເມື່ອທ່ານພົບປຶ້ມນີ້ລົງຜູ້ທຳອິດທີ່ທ່ານຈະນຶກເຖິງ ແລະບອກຮັກອີກຄັ້ງຈາກຫົວໃຈກໍຄື **ແມ່.!!**

ດ້ວຍຄວາມເຄົາລົບ

ດອກຄູນ ນະ ຊຽງຂວາງ





## ຮູ້ຈັກຜູ້ຂຽນ

**ດອກຄູນ ນະ ຊຽງຂວາງ**

ຫຼາຍຄົນມັກຖາມວ່າ ເປັນຄົນຊຽງຂວາງບໍ! ທີ່ຈິງຂ້າພະ-ເຈົ້າກໍເປັນຄົນທຸກທີ່ຫັ້ນແລ້ວ! ຢອກໆ...!!

**ທີ່ໃສ່ນາມປາກການີ້ກໍຍ້ອນວ່າ** ເຊື້ອສາຍວົງຕະກູນແມ່ນໄທຊຽງຂວາງແທ້ຮ້ອຍເປີເຊັນ ແຕ່ຍ້ອນໜີຕາຍຈາກສົງຄາມມາຂ້າພະເຈົ້າຈຶ່ງໄດ້ມາເກີດ ແລະໃຫຍ່ຢູ່ທີ່ ບ້ານ ແກ້ວກູ່, ເມືອງແກ້ວອຸດົມ, ແຂວງ ວຽງຈັນ ໃນວັນທີ 27 ພຶດສະພາ 1994.

ຂ້າພະເຈົ້າເລີ່ມຈັບປາກກາຂຽນທຳອິດໃນປີ 2016 ທີ່ສວນໄຜ່ພັນກໍ ແລະກໍມີຜົນເຫຼັ້ມນຶ່ງອອກຮັບສັງຄົມ ໃນຊຸດໂຮມເລື່ອງສັ້ນ **ປິດສາໜາຮັກ.**

**ດ້ານການສຶກສາ**

ທີ່ບ້ານແກ້ວກູ່ ແມ່ນມີແຕ່ ອະນຸບານ - ມ 7 ຂ້າພະເຈົ້າເລີຍບໍ່ໄດ້ອອກໄປຮຽນໄກ. ຈົນວ່າໄດ້ມາສຶກສາຕໍ່ຢູ່ທີ່ ວິທະຍາໄລຄູບ້ານເກີນສາຍຄູປະຖົມ 12+2 ແລ້ວຈົບໃນປີ 2015.

ສ່ວນປັດຈຸບັນຂ້າພະເຈົ້າເປັນບັນນາຮັກຢູ່ໂຮງຮຽນນາ-ນາຊາດລາວໃນນະຄອນຫຼວງວຽງຈັນ.

# ລາຍຊື່ຜູ້ຮ່ວມສົມທົບທຶນພິມປຶ້ມ

| | |
|---|---|
| 1. ທ່ານ ເດືອນ ບຸດທະວົງສ໌ (ຝຣັ່ງເສດ) | 400,000 ກີບ |
| 2. ທ່ານ ບຸນທະວີ ທອງສມຸດ (ຝຣັ່ງເສດ) | 900,000 ກີບ |
| 3. ທ່ານ ນາງ ຈັນ ໄຊຍະວົງ(ສປປ.ລາວ) | 100,000 ກີບ |
| 4. ໂຮງຮຽນ ນານາຊາດລາວ (ໜອງບອນ) | 1,000,000 ກີບ |
| 5. ທ່ານ ປຣະຍູນ ວົງຈັນລາ (ໄທ) | 500 ບາດ |